ວັນນະກຳ ພື້ນເມືອງລາວ

ລຳຜະຫຍາມະຫາໄຊ



❀ ເຂັມພອນ ແສງປະທຸມ

ຈັດພິມໂດຍ ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ
(ພ. ສ. 2540/1997)

ວັນນະກຳ ພື້ນເມືອງລາວ

ລຳຜະຫຍາມະຫາໄຊ

ຄົ້ນຄວ້າ ແລະ ຮຽບຮຽງ:

ເຂັມພອນ ແສງປະທຸມ

ຈັດພິມໂດຍ ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

(ພ. ສ. 2540/1997)

ວັນນະກຳພື້ນເມືອງລາວ

ລຳຜະຫຍາມະຫາໄຊ

★ ທີ່ເປີກສາ :

- ທ່ານ ບົວບານ ວໍລະຂຸນ.
- ທ່ານ ສຸທຳ ລັດຖະຈັກ.
- ທ່ານ ດຣ. ທອງຄຳ ອ່ອນມະນີສອນ ທັງເປັນບັນນາທິການ.
- ທ່ານ ເລກາ ກັນຍາ.
- ທ່ານ ບຸນສອນ ແສງດາວົງ ເຈົ້າເມືອງມະຫາໄຊ.
- ທ່ານ ຊຽງສີ ແສງທອງດີ ຮອງເຈົ້າເມືອງຍົມມະລາດ.

★ ຄົ້ນຄ້ວາ ແລະ ຮຽບຮຽງ :

- ເຂັມພອນ ແສງປະທຸມ.

ອອກແບບ ແລະ ຈັດທຳ :

- ກະວີນ ກຽງຄຳຊົມປີ .
- ຈັນລາ ດວງມາລາ.

ຝ່າຍຈັດຕັ້ງ ບໍລິຫານ :

- ທ່ານ ອິນປອນ ແສງມະນີ.
- ທ່ານ ຈັນທະວົງ ດວງມະນີ.
- ທ່ານ ນາງ ຈັນເພັດ ຄຳຟອງ.

ພິມຄອມພິວເຕີ :

- ນ. ອັງຄະນາ ອິນທະໄຊ.
- ນ. ຈັນເພັດ ຄຳຟອງ.

ຈັດພິມໂດຍກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

ພິມທີ່ລັດວິສາຫະກິດໂຮງພິມແຫ່ງລັດ, ຂະໜາດ 18×26 ຊມ, ຈຳນວນ 1000 ຫົວ.

ຕາມທະບຽນເລກທີ : 66/ພຫປ, 140697. ພິມຄັ້ງທີໜຶ່ງ, ປີ 1997 (ພ.ສ.2540).

© ສະຫງວນລິຂະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

++++++++++++

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເລກທີ 178 / ຖວ.

ຂໍ້ຕົກລົງແຕ່ງຕັ້ງ ຂອງລັດຖະມົນຕີ

ວ່າດ້ວຍ

ການສົ່ງພະນັກງານ ຝ່າຍປະດິດແຕ່ງ

ຂອງກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

ລົງເຮັດວຽກກັບພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງຄຳມ່ວນ

ເພື່ອເກັບກຳຂໍ້ມູນ ແລະ ຂຽນປະຫວັດ ລຳມະຫາໄຊ.

- ອີງຕາມການຕົກລົງ ເຫັນດີຂອງທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ສະບັບເລກທີ 546/ທກ, ລົງວັນທີ 14-3-1995 .
- ອີງຕາມການຕົກລົງເຫັນດີ ໃນການຮ່ວມມື ເພື່ອເກັບກຳຂໍ້ມູນ ລຳມະຫາໄຊ ແນໃສ່ສ້າງສາລະຄະດີອະນຸລັກສົ່ງ ເສີມການຂັບລຳດັ່ງກ່າວ ລະຫວ່າງ ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງຄຳມ່ວນ ກັບກົມວັນ ນະຄະດີ ແລະ ວັດທະນະທຳມະຫາຊົນ ໃນຄັ້ງວັນທີ 8-1-1995.

ລັດຖະມົນຕີ ຈຶ່ງຕົກລົງ

ມາດຕາ1: ໃຫ້ທ່ານ ເຂັມພອນ ແສງປະທຸມ ຫົວໜ້າພະແນກວັນນະຄະດີ, ນັກປະພັນ, ນັກກະວີ ລົງເກັບກຳຂໍ້ມູນ ເພື່ອຂຽນປະຫວັດ ລຳມະຫາໄຊ ຢູ່ແຂວງຄຳມ່ວນ ກຳນົດ 1 ເດືອນ.

ມາດຕາ2: ສຳລັບການໃຊ້ຈ່າຍໄປ-ມາ ແລະ ຄ່າກິນຢູ່ຕ່າງໆໃນ 1 ເດືອນ ແມ່ນທາງກະຊວງເປັນຜູ້ຮັບຜິດຊອບ.

ມາດຕາ3: ມອບໃຫ້ ທາງຫ້ອງການກະຊວງ, ພະແນກແຜນການ-ການເງິນ, ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ, ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງຄຳມ່ວນ, ທຸກພາກສ່ວນ ກຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມໜ້າທີ່ຂອງໃຜລາວ.

ມາດຕາ4 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ບ່ອນນຳສົ່ງ : ວຽງຈັນ, ວັນທີ 23 / 3 / 1995

1. ຫ້ອງການກະຊວງ 1ສະບັບ. ລັດຖະມົນຕີກະຊວງຖະແຫລງຂ່າວແລະ ວັດທະນະທຳ
2. ການເງິນກະຊວງ 3 ສະບັບ. ໄດ້ເຊັນ ແລະ ປະທັບກາແລ້ວ
3. ກົມວັນນະຄະດີ 1 ສະບັບ.
4. ພະແນກຖ/ວ ແຂວງ ຄຳມ່ວນ 1 ສະບັບ.
5. ຜູ້ກ່ຽວ 3 ສະບັບ. ໂອສະກັນ ທຳມະເທວາ.

ຄຳເຫັນຂອງ ທ່ານ ບົວບານ ວໍລະຂຸນ

ຮອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ມໍລະດົກວັດທະນະທຳວັນນະຄະດີ ພື້ນເມືອງລາວ ໂດຍສະເພາະແມ່ນ: ຜະຫຍາຍ່ອຍ, ຄຳທວາຍ, ກາບ, ກອນ, ໂຄງ, ຮີດຄອງປະເພນີອັນດີງາມ....ເປັນພູມປັນຍາ ທີ່ບັນດານັກປາດອາຈານລາວໄດ້ປະດິດຄິດແຕ່ງໄດ້ປະພັນແລະມອບເປັນສົມບັດອັນມີຄຸນຄ່າປະເສີດເລີດລ້ຳ ໃຫ້ແກ່ປະຊາຊົນລາວບັນດາເຜົ່າ ຈາກຣຸ່ນນີ້ໄປຫາຣຸ່ນໜ້ານັ້ນມັນ ເປັນການອະນຸລັກ ປົກປັກຮັກສາ, ພັດທະນາ ແລະ ເສີມຂະຫຍາຍຄຸນຄ່າມໍລະດົກທາງວັດທະນະທຳວັນນະຄະດີພື້ນເມືອງລາວເຕັມໄປດ້ວຍຄວາມມັ່ງຄັ່ງອຸດົມສົມບູນຢ່າງເລິກເຊິ່ງ, ໜັກແໜ້ນ, ແຫລມຄົມ, ມີລັດຊາດ ແລະ ມີຊີວິດຊີວາສູງສົ່ງຍິ່ງກວ່າເວລາໃດໝົດ.

ປື້ມວັນນະກຳພື້ນເມືອງລາວ ລຳຜະຫຍາ ມະຫາໄຊ ທີ່ທ່ານເຂັມພອນ ແສງປະທຸມ ພ້ອມດ້ວຍເພື່ອນຮ່ວມ ງານໄດ້ຄົ້ນຄ້ວາຮີບໂຮມຮຽບຮຽງຈັດເປັນລະບົບ ຈາກບັນດາຕຳນານ, ຕົ້ນສະບັບຜະຫຍາ, ການປະພັນປະດິດຄິດແຕ່ງ, ໝໍຂັບ ໝໍລຳດີເດັ່ນມີຊື່ສຽງໂດຍໄດ້ຮັບຄວາມນິຍົມຊົມຊອບ ເຊິ່ງຜ່ານຈາກການນຳໃຊ້ ໃນງານບຸນປະເພນີ, ພິທີກຳຕ່າງໆຢູ່ທ້ອງຖິ່ນມາແລ້ວນັ້ນ ກໍນັບວ່າເປັນມໍລະດົກທາງພູມປັນຍາຢ່າງໜຶ່ງທີ່ຈະຊ່ວຍໃຫ້ບັນດາທ່ານຜູ້ອ່ານ, ຜູ້ຄົ້ນຄ້ວາ, ຜູ້ອະນຸລັກພັດທະນາເສີມຂະຫຍາຍໃຫ້ອຸດົມສົມບູນ ຍິ່ງຂຶ້ນຄົງຢູ່ຄູ່ກັບຊາດລາວຕະຫລອດໄປ ໂດຍສະເພາະແລ້ວ ແມ່ນປະຊາຊົນບັນດາເຜົ່າ ແຂວງ ຄຳມ່ວນນັ້ນເອງ ຄົງຈະເຂົ້າໃຈຕໍ່ພື້ນຖານວັດທະນະທຳວັນນະຄະດີພື້ນເມືອງລາວມີຄຸນຄ່າສູງສົ່ງ. ບົນພື້ນຖານການສຳພັດທາງຈິດໃຈແລ້ວນັ້ນ ບໍ່ໜ້ອຍກໍ່ຫລາຍ ຄົງຈະເຮັດໃຫ້ຊີວິດວັດທະນະທຳວັນນະຄະດີ ພື້ນເມືອງລາວຈະໄດ້ຮັບການອະນຸລັກປົກປັກຮັກສາ ແລະ ພັດທະນາເສີມຂະຫຍາຍຂຶ້ນໄປຊົ່ວໄຊ້.

ໃນນາມ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ໃນນາມສ່ວນຕົວ, ຂ້າພະເຈົ້າຂໍຊົມເຊີຍຄວາມມານະອົດ ທົນພະຍາຍາມພາກພຽນ ຄົ້ນຄ້ວາຮີບໂຮມຮຽບຮຽງ ແລະ ຈັດເປັນຕົ້ນສະບັບໃຫ້ມະຫາຊົນອ່ານງ່າຍເຂົ້າໃຈງ່າຍ ສອດຄ່ອງ ກັບຄວາມນິຍົມຊົມຊອບຂອງມະຫາຊົນ, ເໝາະກັບກາລະຍຸກສະໄໝຂອງຄະນະດັ່ງກ່າວ ມາໃນນະໂອກາດນີ້ດ້ວຍ.

ອີກເທື່ອໜຶ່ງ ກໍ່ຮຽກຮ້ອງມາຍັງ ບັນດາທ່ານຜູ້ອ່ານ, ຜູ້ຄົ້ນຄ້ວາ, ຜູ້ອະນຸລັກປົກປັກຮັກ ສາສົ່ງເສີມວັດທະນະທຳ ວັນນະຄະດີ ພື້ນເມືອງລາວທັງຫລາຍຈົ່ງອອກແຮງຂຸດຄົ້ນ, ປັບປຸງ ແລະ ພັດທະນາພື້ນຖານວັດທະນະທຳ ວັນນະຄະດີ ພື້ນເມືອງລາວ ອອກມາຮັບໃຊ້ປະຊາຊົນ ບັນດາເຜົ່າຫລາຍ ຂຶ້ນຕື່ມ. ເພາະວ່າວັນນະຄະດີພື້ນເມືອງລາວ (ອັນປະກອບດ້ວຍ : ຄຳທວາຍ, ຜະຫຍາຍ່ອຍ, ກາບ, ກອນ) ອັນເປັນເອກະລັກຂອງທ້ອງຖິ່ນ, ຂອງເຜົ່າຊົນລາວ ຍັງອຸດົມສົມບູນສະຫລັບຊັບຊ້ອນ ແລະ ບົ່ມຊ້ອນຢູ່ນຳ ມະຫາ ຊົນ ຈຳນວນຫລວງຫລາຍໂອກາດນີ້ ຍິ່ງກວ່າເວລາໃດໝົດ ພວກເຮົາຄວນພ້ອມກັນຂຸດຄົ້ນ, ປັບປຸງເນື້ອໃນ ແລະ ພັດທະນາມາຊົມໃຊ້

ຢ່າງເປັນປະໂຫຍດ ເພື່ອເປັນການສຶກສາອົບຮົມມະຫາຊົນ ແລະ ປະກອບສ່ວນສ້າງຊີວິດ ວັດທະນະທຳ ຂອງປະຊາຊົນລາວບັນດາເຜົ່າ ໃຫ້ອຸດົມສົມບູນມີຊີວິດຊີວາຢ່າງແທ້ຈິງ, ພ້ອມກັນສ້າງຄັງສາງວັດທະນະທຳຂອງຊາດ ໃຫ້ການເປັນສ່ວນໃຈກາງ ເຕົ້າໂຮມຜະຫຍາປັນຍາຂອງປະຊາຊົນທຸກເຜົ່າ ທີ່ອຸດົມຮັ່ງມີ ໃຫ້ໄດ້ຮັບການພັດທະນາ ແລະ ສົ່ງເສີມຕະຫລອດໄປ.

ຂໍຂອບໃຈ

ວຽງຈັນ, ວັນທີ 20 / 06 / 1997

ຮອງລັດຖະມົນຕີ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ບົວບານ ວໍລະຂຸນ

ບົດປະກອບຄຳເຫັນ

ຂອງທ່ານ ຜູ້ວ່າການ ເຈົ້າແຂວງ ໆ ຄຳມ່ວນ.

ປະທານໂຄງການອະນຸລັກສົ່ງເສີມສິລະປະລຳມະຫາໄຊ

ຂໍຮຽນ...

ນັບຖື...

ກ່ອນອື່ນ ຂ້າພະເຈົ້າຂໍສະແດງຄວາມເບີກບານຊົມຊື່ນ ແລະ ຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ຮ່ວມເປັນປະທານ ໃຫ້ແກ່ໂຄງການອະນຸລັກສົ່ງເສີມ ສິລະປະລຳມະຫາໄຊ. ເພື່ອການຄົ້ນຄ້ວາຊອກຫາແຫລ່ງກຳເນີດ ຂອງລຳດັ່ງກ່າວແລະ ຮັກສາໄວ້ຊຶ່ງຕົ້ນສະບັບ ອັນດັ່ງເດີມ. ພ້ອມດຽວກັນນີ້ກໍ່ອອກແຮງ ເສີມຂະຫຍາຍຫົວຄິດປະດິດສ້າງຈັ່ງຫວະທຳນອງລຳມະຫາໄຊ ໃຫ້ເປັນທີ່ນິຍົມໃນທຸກກາລະສະໄຫມ, ປະກອບສ່ວນເຂົ້າ ໃນວຽກ ງານໂຄສະນາແນວທາງນະໂຍບາຍຂອງພັກ-ລັດ ຢ່າງຟົດຟື້ນມ່ວນຊື່ນ ຄືປົກປັກຮັກສາ ແລະ ສ້າງສາປະເທດຊາດກ້າວຂື້ນສັງຄົມນິຍົມ.

ບັນດາທ່ານ...ເປັນທີ່ຮູ້ກັນດີແລ້ວວ່າ ແຂວງຄຳມ່ວນຂອງພວກເຮົາເປັນ ດິນແດນອັນມີ ອະລິຍະທຳທີ່ເກົ່າແກ່ສຸດທີ່ຍາວໄກຂື້ນຊື່ລືນາມວ່າ ອະນາຈັກສີໂຄດຕະບອງຫລາຍຮ້ອຍປີຜ່ານພົ້ນໄປດິນແດນແຫ່ງນີ້ຍັງຝັ່ນເຝືອນຢູ່ໃນອະດີດຄວາມຊົງຈຳພົ້ນເດັ່ນທາງລັກສະນະປະຫວັດສາດ ເລື່ອງສີໂຄດຕະບອງ ອັນມີຊື່ສຽງ ສະເທືອນອາລົມເປັນທີ່ເຄົາລົບ ໃນເສັ້ນທາງແຫ່ງວີລະກຳ ຂອງບັນພະບຸລຸດຜູ້ຊົງຄຸນນະທຳຄື ທ້າວ ພະຍາສີໂຄດ ພ້ອມທັງປູຊະນີຍະສະຖານ ພະທາດສີໂຄດຕະບອງ ແລະ ຍັງມີພະທາດພະນົມຕັ້ງຢູ່ຝັ່ງຂວາແມ່ນ້ຳຂອງ ອີກ, ຊາກເມືອງຮ້າງມະລຸກຂະນະຄອນ, ຄັນແທ້ຖຸມພະວັງ ທີ່ຫ່າງຈາກປາກ ນ້ຳເຊບັ້ງໄຟປະມານ 15 ຫລັກກິໂລແມັດ ປະຫວັດສາດຢັ້ງຢືນວ່າ ເມືອງຫລວງຂອງອານາຈັກສີໂຄດ ທີ່ສອງເມືອງປາກນ້ຳ (ຫີນ ບູນເກົ່າ) ເມືອງມະຫາພົມ ຫລື ມະຫາໄຊກອງແກ້ວ (ເຂດເມືອງຍົມມະລາດ ໃນປັດຈຸບັນ) ທີ່ພົວພັນເຖິງແຫລ່ງກຳເນີດລຳມະຫາໄຊທີ່ຍັງມີຮ່ອງຮອຍວັດຖຸບູຮານ, ວັດຮ້າງເຈດີ ພະພຸດທະຮູບ, ທີ່ຫລໍ່ດ້ວຍໂລຫະມີລາຄາສູງ.

ພິເສດແມ່ນກຳແພງຫີນ ເມືອງສີໂຄດບູຮານ ທີ່ຍັງເຫລືອເປັນຮູບຍາວຢຽດ ພວມສ້າງປາກົດການ ໃຫມ່ທັນເອົາຄວາມສົນໃຈ ຈາກນັກຄົ້ນຄ້ວາ, ນັກບູຮານວັດຖຸ, ນັກສະຖາປະຕິຍະກຳ ທາງພາຍໃນ ແລະ ສາກົນພວມບັນທຶກເປັນ ຂໍ້ມູນເພື່ອສັນນິດຖານວ່າ ກຳແພງຫີນນີ້ ຖ້າແມ່ນຄົນສ້າງຂື້ນໃນສະໄຫມໃດ ? ຫລື ຫາກມີຂື້ນໂດຍທຳມະຊາດ ສາຍພູສູງ, ແມ່ນ້ຳ, ພູພຽງປ່າແປກນາກາຍ ທັງພຽງນາເຂົ້າທີ່ຈະເລີນພັນພວມກ້າວເຂົ້າ ສູ່ການພັດທະນາຄຽງຄູ່ກັບການອະນຸລັກຮັກສາສິ່ງແວດລ້ອມ ເປັນຕົ້ນແມ່ນປ່າໄມ້, ສາຍນ້ຳຕົກຕາດ, ໄວ້ເປັນສະຖານທີ່ທ່ອງທ່ຽວ ອັນຊຸ່ມເຢັນ, ສວຍງາມແບບທຳມະຊາດເດີມ.

ສຽງລຳມະຫາໄຊ ກໍແມ່ນ ມິ່ງຂວັນມໍລະດົກ ທີ່ພັນລະນາເຖິງຄວາມສວຍງາມ ຂອງທ້ອງຖິ່ນພູມລຳເນົາ. ແບບ ແຜນຄຳລຶງຊີ ວິດ ທຳນອງລຳຄຳຜະຫຍາ ໄດ້ສະທ້ອນໃຫ້ເຫັນການເຄື່ອນໄຫວທາງດ້ານສັດຈະວາຈາ, ກິລິຍາວາຈາ, ສິລະປະວາຈາ, ທີ່ສືບທອດມາຈາກປູ່ຍ່າຕານາຍ ຜູ້ມີພອນສະຫວັນຈາກນັກແຕ່ງກອນລຳ ນັກຈ່າຍ ຜະຫຍາ, ແບບປາກເປົ່າເກາະກາຍກັນມາກາຍເປັນບົດບັນທຶກໄວ້ໃນກະດາດ, ເຈ້ຍສາ, ໃບລານ, ກີບໄມ້ໄຜ່ ລ້ອນ ແລ້ວແຕ່ມີວິທີການຮັກສາໄວ້ໃຫ້ຍາວນານສືບຕໍ່ກັນມາ ຕັ້ງແຕ່ບູຮານນະການ, ເປັນອັນຍັ້ງຢືນວ່າມູນເຊື້ອ ລຳມະ ຫາໄຊໄດ້ກາຍເປັນສິລະປະວັນນະຄະດີພື້ນບ້ານຂອງໝົດທຸກເຜົ່າໃນແຂວງຄຳມ່ວນ. ຕ່າງແຕ່ວາດລຳ ແລະ ຈັງຫວະໄດ້ຖືກປ່ຽນແປງໄປຕາມພາສາປາກເວົ້າຂອງ ທ້ອງຖິ່ນພຽງເລັກນ້ອຍ.

ອີກເທື່ອໜຶ່ງ ຂ້າພະເຈົ້າໃນນາມ ຜູ້ວ່າການເຈົ້າແຂວງ ໆ ຄຳມ່ວນສຸດທີ່ເອກອ້າງທະນົງໃຈ ໄວ້ກັບພໍ່ແມ່ພີ່ ນ້ອງຊາວເມືອງ ຍົມມະລາດ-ມະຫາໄຊ ໂດຍສະເພາະໃນແຖວອະດີດຕາແສງພຶດຄື: ບ້ານຕາດ, ສັງທອຍ, ກວມພັນທີ່ມີຊ່າງແຄນ, ຊ່າງປີ່, ຊ່າງຂຸ່ຍ, ໝໍລຳ, ໝໍຜະຫຍາ ທີ່ຍັງດັງກ້ອງກັງວານຢູ່ໃນຄວາມຈົດຈຳ ຂອງບັນ ດານັກປະ ພັນ, ນັກກະວີ, ນັກຄົ້ນຄວ້າປະດິດແຕ່ງ ເພື່ອສ້າງ ຜະລິດຕະພັນອັນມີສີສັນສວຍງາມໄວ້ກັບດິນດຳນ້ຳ ຊຸ່ມໃຫ້ກ້າວເຂົ້າສູ່ບັນຍາກາດໃໝ່ຄື ນຳເອົາຄຳຜະຫຍາປະດິດແຕ່ງເປັນກອນລຳມະຫາໄຊ ອັນນີ້ມນວນມ່ວນ ຊື່ນທັງໃນອະດີດ ແລະ ປະຈຸບັນ ເພື່ອການປະດິດແຕ່ງ ແລະ ຊຶງໄວ້ຊຶ່ງເນື້ອໃນອັນມີຄຸນຄ່າ ແລະ ສະດຸດີຊົມ ເຊີຍຂະບວນການສ້າງສາພັດທະນາ ບ້ານເກີດເມືອງນອນເຮັດໃຫ້ກອນລຳຜະຫຍາ ໄດ້ຮັບຄວາມນິຍົມຊົມຊອບ ເປັນແມ່ພິມໃຫ້ແກ່ໝໍລຳ ສືບຕໍ່ສຶກສາຮ່ຳຮຽນຕໍ່ໄປ.

ຍິ່ງໄປກ່ວາເວລາໃດໝົດ ທີ່ຊາດລາວ ແລະ ປວງຊົນລາວທຸກເຜົ່າ ສະເພາະແຂວງຄຳມ່ວນ ໄດ້ມີເອກະ ລັກມິ່ງຂວັນອັນມີຄຸນຄ່າ ຄືມີສິລະປະລຳມະຫາໄຊທີ່ໄດ້ສ້າງຄວາມມ່ວນຊື່ນ ສ້າງສັນດ້ວຍເນື້ອໃນ ຄຳກອນຜະ ຫຍາອັນເລີກເຊິ່ງ ທີ່ສອດແຊມຢູ່ໃນບົດບາດວາດເວົ້າດ້ວຍອັດທະຍາໄສ ອັນນີ້ມນວນອ່ອນຊ້ອຍຕິດພັນຢູ່ກັບຜູ້ ຄົນໃນດິນແດນແຫ່ງປະຫວັດສາດສີໂຄຕະບອງ ປັດຈຸບັນພວມກ້າວເຂົ້າສູ່ການພັດທະນາຢ່າງຮອບດ້ານສົມຊື່ ກັບພູມລຳເນົາແຫ່ງດິນຕິມະໂຫລີທີ່ເປັນສັນຍາລັກ ສິລະປະລຳມະຫາໄຊ ຢ່າງແທ້ຈິງ.

ຂອບໃຈ

ຄຳມ່ວນ, ວັນທີ 29 / 5 /95.

ຜູ້ວ່າການຈ້າແຂວງ ໆ ຄຳມ່ວນ

ໄດ້ເຊັນ ແລະ ປະທັບກາແລ້ວ.

ສຸທຳ ລັດຖະຈັກ

ບົດປະກອບຄຳເຫັນ

ຂອງທ່ານ ດຣ. ທອງຄຳ ອອນມະນີສອນ

ຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

ປຶ້ມວັນນະກຳ ພື້ນເມືອງລາວ ລຳຜະຫຍາມະຫາໄຊ ເຫລັ້ມນີ້ເປັນວັນນະກຳອະມະຕະທີ່ມີຄຸນຄ່າສູງສົ່ງ ເຊິ່ງບັນພະບູລຸດໄດ້ສາງຄັງສາງວັນນະຄະດີ ພື້ນເມືອງລາວ ແລະ ທັງເປັນພື້ນຖານພູມປັນຍາຂອງນັກປາດ ພື້ນເມືອງລາວເວົ້າລວມ ແລະ ຂອງຊາວມະຫາໄຊ (ແຂວງຄຳມ່ວນ) ເວົ້າສະເພາະ.

ປຶ້ມຫົວນີ້ ໄດ້ຄົ້ນຄ້ວາຮຽບຮຽງ ແລະ ຈັດພິມຂຶ້ນມາໄດ້ກໍຍ້ອນການຮ່ວມມືປະສານງານຢ່າງແໜ້ນກັບຫລາຍ ພາກສ່ວນ ຫລາຍຊັ້ນຄົນ ນັບແຕ່ສູນກາງລົງຮອດທ້ອງຖິ່ນຮາກຖານ.

ໃນນາມກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ເຫັນປຶ້ມເຫລັ້ມນີ້ເກີດຂຶ້ນມາດ້ວຍການຄົ້ນຄ້ວາຮຽບຮຽງເກັບກຳຂໍ້ມູນ ໂດຍທ່ານເຂັມພອນ ແສງປະທຸມ ນັກວິຊາການຄົ້ນຄ້ວາວັດທະນະທຳປະຈຳກົມພ້ອມດ້ວຍເພື່ອນຮ່ວມງານ ແຕ່ສູນກາງລົງຮອດຮາກຖານ(ແຂວງຄຳມ່ວນ)ໃນຮູບແບບລີລາອັກສອນສັງວາດ ເຊິ່ງສອດສານແນບແໜ້ນດ້ວຍການສຳຜັດໃນ ແລະ ສຳຜັດນອກ, ອຸດົມສົມບູນດ້ວຍການເນື່ອງສຽງເອກສຽງໂທ, ອ່ອຍຕ່ອຍຕອນຜະຫຍາທັງສົ້ນຢ່າງຖືກຕ້ອງ ຄ່ອງຫູ, ມ່ວນອອນຊອນ ແລະ ນ່າຈັບອົກຈັບໃຈ ຕາມແບບສະບັບແຫ່ງຕຳນານ ແລະ ຫລັກການແຕ່ງກອນລຳດ້ວຍ.

24/VII

ເປັນການເຊື່ອຖື ກັນໄດ້ວ່າ ວັນນະກຳພື້ນເມືອງລາວ ລຳຜະຫຍາມະຫາໄຊ ເຫລັ້ມນີ້ແມ່ນໄດ້ຜຸດພຸ່ງຂຶ້ນ ໃນດິນແດນລາວເວົ້າລວມ, ດິນແດນຖິ່ນຖານຊາວມະຫາໄຊ ແຂວງຄຳມ່ວນ ເວົ້າສະເພາະໄດ້ສ່ອງແສງໄຟ ເພີ່ມຄວາມຮຸ່ງແຈ້ງໃຫ້ແກ່ດວງປັນຍາຂອງທ່ານຜູ້ອ່ານ, ຜູ້ຄົ້ນຄ້ວາເຂົ້າໃຈເລິກເຊິ່ງຕື່ມເຖິງລົດຊາດດ້ານວັນນະຄະດີ ພື້ນເມືອງລາວຢ່າງແທ້ຈິງ ທັງເປັນການແນ່ໃສ່ອະນຸລັກປົກປັກຮັກສາ ແລະ ເສີມຂະຫຍາຍໃຫ້ສົມບູນຍິ່ງຂຶ້ນຊຸກໄຊ້ ທັງສະແດງເຖິງພູມປັນຍາອັນສະຫລາດສະຫລຽວຄົມແຫລມທີ່ສຸດ.

ນອກຈາກນີ້ແລ້ວ ບັນດາທ່ານ ນັກອ່ານ, ນັກຄົ້ນຄ້ວາ, ນັກອະນຸລັກ ທັງຫລາຍຈະສະດຸ້ງໃຈສະເທືອນອາລົມຊາບ ຊຶ້ງຕຶ້ງມະໂນດ້ານພູມປັນຍາ ອັນແຫລມຄົມເລິກເຊິ່ງ ແລະ ອຸດົມສົມບູນທາງດ້ານເນື້ອໃນອັນເຕັມໄປດ້ວຍ ລັກສະນະຊາດ, ລັກສະນະມະຫາຊົນ ແລະ ລັກສະນະກ້າວໜ້າຢ່າງສູງສົ່ງດ້ວຍ.

ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ຂໍຊົມເຊີຍນ້ຳໃຈສະຕິປັນຍາ, ແຮງອຸທິດເສຍສະຫລະຂອງທ່ານເຂັມພອນ ແສງປະທຸມ ພ້ອມດ້ວຍເພື່ອນຮ່ວມງານ ທີ່ໄດ້ມີຄວາມພາກພຽນຄົ້ນຄ້ວາຮຽບຮຽງ ໄດ້ສຳເລັດຜົນພ້ອມທັງໄດ້ຈັດພິມອອກຮັບໃຊ້ທ່ານຜູ້ອ່ານ ແລະ ສັງຄົມທົ່ວໄປ, ຂໍຊົມເຊີຍຂອບອົກຂອບໃຈນຳບັນດາທ່ານ ບັນດາສະຫາຍ ຜູ້ໃຫ້ຂໍ້ມູນ, ຕຳນານ, ລາຍລັກອັກສອນ, ສ້າງທຸກເງື່ອນໄຂ ທັງອຳນວຍຄວາມສະດວກທຸກປະການ ແລະ ສະໜັບສະໜູນມາແຕ່ຕົ້ນຕະຫລອດປາຍ.

ຫວັງຢ່າງຍິ່ງວ່າປຶ້ມ ວັນນະກຳພື້ນເມືອງລາວ ລຳຜະຫຍາ ມະຫາໄຊ ເຫລັ້ມນີ້ຄົງຈະ ເປັນເສັ້ນຝ້າຍສາຍໄຫມຮວາດຮ້ອຍພວງມາໄລ ດອກບົວຫລວງ ແລະ ດອກຈຳປາ ໃຫ້ສະໜິດສະເໜຫາພ້ອມພາກັນສົ່ງກິ່ນຫອມຫວນ, ອະນຸລັກປົກປັກຮັກສາ ແລະ ເສີມຂະຫຍາຍວັນນະຄະດີ ພື້ນເມືອງລາວ ເຊິ່ງແມ່ນມໍລະດົກຄົງສາງວັດທະນະທຳມະຫາຊົນ ລາວບັນດາເຜົ່າຢ່າງແທ້ຈິງໄດ້ຮັບການອະນຸລັກປົກປັກຮັກສາພັດທະນາ ແລະ ເສີມຂະຫຍາຍໃຫ້ຄົງຢູ່ຄູ່ກັບຊາດລາວຕະຫລອດໄປ.

ຂອບໃຈ

ວຽງຈັນ, ວັນທີ 20 / 06/ 1997
ຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

ດຣ. ທອງຄຳ ອ່ອນມະນີສອນ

ບົດປະກອບຄຳເຫັນ ຂອງທ່ານ ເລກາ ກັນຍາ

ຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງຄຳມ່ວນ

ດ້ວຍຄວາມອະທິບັນທະນາການ ຈາກກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ.

ພາຍຫລັງໄດ້ຮັບຂໍ້ຕົກລົງເຫັນດີ ຈາກທ່ານ ລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ສະບັບ ເລກທີ 178/ຖວ ລົງວັນທີ 22/3/95 ໄດ້ແຕ່ງຕັ້ງໃຫ້ ທ່ານ ເຂັມພອນ ແສງປະທຸມ ເຂົ້າຮ່ວມການເຄື່ອນໄຫວໃນໂຄງ ການອານຸ ລັກສົ່ງເສີມສິລະປະລຳມະຫາໄຊ ຮ່ວມກັບພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງຄຳມ່ວນ ໃນໂອກາດພະນັກງານ-ລັດຖະກອນ ທີ່ຫົວພັກ, ທີ່ກອງທັບ ແລະ ພໍ່ແມ່ປະຊາຊົນທຸກເຜົ່າ ຕັ້ງໜ້າອອກແຮງຝັນຂະຫຍາຍເນື້ອໃນຈິດໃຈມະຕິ ກ່ຽວກັບວຽກງານຖະແຫລງຂ່າວ ແລະ ວັດທະນະທຳ ໃນໄລຍະໃຫມ່ຂອງຄະນະບໍລິຫານງານສູນກາງພັກຄັ້ງທີ 9 ສະໃຫມທີ V ໃຫ້ເກີດດອກອອກຜົນ. ພ້ອມດຽວກັນນັ້ນກໍແມ່ນຂະບວນການສ້າງຜົນງານຕ້ອນຮັບກອງປະຊຸມໃຫຍ່ຄັ້ງທີ V ຂອງຄະນະພັກແຂວງຄຳມ່ວນ.

- ໃນທ່າມກາງບັນຍາກາດອັນເບີກບານມ່ວນຊື່ນຫລິ້ນບຸນປີໃຫມ່ ຕ້ອນຮັບພຸດທະສັກກະລາດ(ພ.ສ) 2538 ດ້ວຍ ບັນຍາກາດຟົດຟື້ນ ແລະ ມີຄວາມໝາຍສຳຄັນເປັນຢ່າງຍິ່ງ. ເພື່ອສືບຕໍ່ສ້າງຜົນງານຮັບຕ້ອນວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 20 ປີ, ສະຫລອງວັນສຳຄັນວັນເກີດ ຂອງທ່ານ ໄກສອນ ພົມວິ ຫານ ຄົບຮອບ 75 ປີ, ເຕັມໄປດ້ວຍເນື້ອໃນ ແລະ ຄວາມໝາຍປະຫວັດສາດຢ່າງເລິກເຊິ່ງ ໃນໄລຍະຊຸມປີຜ່ານມານີ້. ແຂວງຄຳມ່ວນຮູ້ສຶກເປັນກຽດຢ່າງສູງທີ່ໄດ້ຕ້ອນຮັບນັກປະພັນ, ນັກຄົ້ນຄ້ວາ, ນັກກະວີ ເປັນເທື່ອທີ່ສອງຖັດຈາກຜົນ ງານ ການຂຽນເລື່ອງ ແຂວງຄຳມ່ວນ ສີໂຄດຕະບອງໃນຊຸມປີຜ່ານມາ.

- ປະຫວັດແຫລ່ງກຳເນີດສິລະປະລຳມະຫາໄຊ ທີ່ທ່ານອ່ານຢູ່ນີ້ ແມ່ນໝາກຜົນແຫ່ງ ຄວາມສຳເລັດໃນເບື້ອງຕົ້ນ ທີ່ໄດ້ເຕົ້າໂຮມຂໍ້ມູນກອນລຳຜະຫຍາມະຫາໄຊ ທີ່ໄດ້ມາຈາກໝໍລຳ-ໝໍຈ່າຍຜະຫຍາ ຄູບາອາຈານ-ນັກຮຽນຮູ້ ດ້ານວັນນະຄະດີ, ຜູ້ຊົງຄຸນວຸດທິ, ຄົນທ້ອງຖິ່ນທີ່ໄດ້ສະສົມບົ່ມເພາະໄວ້ໄດ້ຫລາຍສິບປີຄື :

I. ການບັນທຶກ ຈົດກ່າຍເປັນຄູ່ມືໄວ້ໃນໃບລານ ແລະ ເຈ້ຍອື່ນໆ.

I. ຍ້ອນໄດ້ຟັງລຳຟັງເທດ ຫລື ອ່ານ ເຫັນວ່າຄຳຜະຫຍານັ້ນ ເລິກເຊິ່ງກິນໃຈ ບັນທຶກໄວ້ໃນຄວາມຊົງຈຳຈົນກວ່າຈະລືມໄດ້ກໍ່ຕັ້ງຫລາຍສິບປີ.

III. ໝໍລຳສຽງດີ, ກໍ່ຮຽນວາດທຳນອງລຳນຳພໍ່ຄູ ສະແຫວງຫາກອນ ຜະຫຍາອັນເລິກເຊິ່ງ ແລະ ມີໄວ້ໃຫ້ຫລາຍເພື່ອໄວ້ລຳຕອບ ຫລື ແກ້ຜະຫຍາ ເພື່ອຕອບຜະຫຍາຊຶ່ງກັນ ແລະ ກັນໃນພິທີລຳຄົບວັນໃນງານບຸນປະເພນີຕ່າງໆ.

ເພື່ອອະນຸລັກຮັກສາໄວ້ ແລະ ເສີມຂະຫຍາຍມູນເຊື້ອສິລະປະລຳມະຫາໄຊ ຈາກລະດັບທ້ອງ ຖິ່ນທີ່ກ້າວຂື້ນສູ່ ລັກສະນະຂອງຊາດ, ຕໍ່ໜ້າທີ່ວຽກງານດ້ານນີ້ ຈະບໍ່ປາສະຈາກ ໄດ້ຂໍ້ຫຍຸ້ງຍາກບາງປະການ ທີ່ໄດ້ຮັບຜົນສະທ້ອນມາຈາກ ແສງສີສິລະປະຂອງຕ່າງຊາດທີ່ຈະເລີນກ່ວາ ເຫລື່ອນໄຫລເຂົ້າມາທັບຖົມ ພື້ນຖານ ສິລະປະວັນນະຄະດີຂອງຊາດໜື່ງທີ່ຍັງອ່ອນນ້ອຍກ່ວາ ເກືອບຈະຖືກສູນເສຍເອກະລັກ ແລະ ຫລົງລືມໄປ.

ມະຕິກ່ຽວກັບວຽກງານວັດທະນະທຳ ໃນໄລຍະໃໝ່ ບົ່ງແຈ້ງວ່າ : ຈັດຕັ້ງການຄົ້ນຄວ້າກ່ຽວກັບແຫລ່ງກຳເນີດແຫ່ງສິລະປະຂອງຊາດ, ຮ່ອງຮອຍປະຫວັດການ, ເອກະລັກມູນເຊື້ອ ແລະ ມໍລະດົກວັດທະນະທຳ ປະເພດຕ່າງຂອງຊາດ ກໍຄືຂອງບັນດາເຜົ່າ ".

(ສະບັບໂລມຽວ ໜ້າ 6 ຮີດໜ້າ 2 ວັນທີ 1 ຕຸລາ 1994)

ດັ່ງນັ້ນ ປື້ມປະຫວັດການລຳມະຫາໄຊ ສະບັບທຳອິດນີ້ ເຖີງແມ່ນຂາດຕົກບົກຜ່ອງບາງປະການ ກໍ່ຫວັງຢ່າງຍິ່ງວ່າ ຈະມີຄຸນຄ່າ ແລະ ຍົກສູງຄຸນຄ່າທາງດ້ານຈິດໃຈ, ເປັນຫລັກແຫລ່ງພື້ນຖານ ໃຫ້ແກ່ການຄົ້ນຄວ້າອະນຸລັກ ສົ່ງເສີມໃນຂັ້ນຕໍ່ໄປ. ຄະນະຈັດພິມ ຂໍຂອບໃຈມາຍັງບັນດາທ່ານຜູ້ອ່ານ ມີຄວາມເຫັນປະການໃດໃນສິ່ງຂາດຕົກບົກຜ່ອງ ຈົ່ງຊ່ວຍຕຳນິຕິຊົມເພື່ອແກ້ໄຂໃຫ້ດີກ່ວາເກົ່າ.

ຈາກຄວາມຈິງໃຈ ຄະນະຈັດພິມ ແລະ ຂໍຂອບໃຈມານະໂອກາດນີ້ດ້ວຍ.

ຄຳມ່ວນ, ວັນທີ 08 ພຶດສະພາ 1995

ຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງຄຳມ່ວນ.

ໄດ້ເຊັນ ແລະ ປະທັບຕາແລ້ວ

ເລກາ ກັນຍາ

ຄຳນຳ
ຂອງຜູ້ຄົ້ນຄວ້າ ຣຽບຮຽງ

ໂຄງການ ອະນຸລັກສົ່ງເສີມ ສິລະປະລຳຜະຫຍາມະຫາໄຊ ໄດ້ເລີ່ມຕົ້ນປະຕິບັດມາ ຢ່າງຕໍ່ເນື່ອງ ແຕ່ຕົ້ນປີ 1995. ໂດຍແມ່ນກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ເຫັນດີແຕ່ງຕັ້ງໃຫ້ນັກວິຊາການຝ່າຍຄົ້ນຄວ້າ ວັນນະຄະດີ ແລະ ກະວີຈາກກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນລົງໄປຊ່ວຍແຂວງຄຳມ່ວນ.

ເພື່ອຕອບສະໜອງທ່າແຮງດ້ານວິຊາການ ຊຶ່ງແຂວງໄດ້ມີທິດທາງແຜນການເພື່ອອະນຸລັກ ແລະ ສົ່ງເສີມສິລະປະວັນນະຄະດີ ທີ່ເປັນເອກະລັກ ຂອງແຂວງນັ້ນແລ້ວ. ວັນທີ 2/5/ 1995 ງານອະນຸລັກສົ່ງເສີມ ສິລະປະລຳຜະຫຍາມະຫາໄຊ ກໍໄດ້ໄຂຂຶ້ນຢ່າງເປັນທາງການ ໂດຍມີບັນດາແຂກ ທີ່ຕາງໜ້າເມືອງ, ຫ້ອງການ ວັດທະນະທຳ ເມືອງຍົມມະລາດ, ນາກາຍ, ມະຫາໄຊ ກໍ່ມາຮ່ວມ ທ່ານ ເລກາ ກັນຍາ ຄະນະປະຈຳພັກແຂວງ, ຫົວໜ້າພະແນກຖະແຫລງຂ່າວ ແລະວັດທະນະທຳແຂວງ ທັງຕາງໜ້າໃຫ້ ທ່ານເຈົ້າແຂວງ ຄຳມ່ວນ ເຂົ້າຮ່ວມງານອະນຸລັກດັ່ງກ່າວ (ຄຳເຫັນ ພິມຕ່າງຫາກ).

ພິທີໄດ້ໄຂຂຶ້ນຢູ່ທີ່ສາລາວັດບ້ານຕາດ ໂດຍມີບ້ານໃກ້ຄຽງຄື: ມ່ວງໄຂ, ບ້ານຜິດ, ສັງທອຍ, ກອນພັນມາ ຮ່ວມ ເນື່ອງຈາກຈຸດພິເສດຂອງໝູ່ບ້ານດັ່ງກ່າວມີຊື່ສຽງທາງດ້ານ ຊ່າງປີ່, ຊ່າງແຄນ, ຊູ່ຍ, ຊີນ...ແລະ ມີໝໍລຳ ຜະຫຍາມະຫາໄຊທີ່ຍັງຮັກສາໄວ້ ຊຶ່ງເອກະລັກທາງສຽງລຳອັນດັ່ງເດີມຄື: ໝໍລຳ ຈານເກີດ, ນາງຄຳ ທອງ ແລະ ຜູ້ອື່ນໆ.

ວັນທີ 4/5/95 ຢູ່ທີ່ເມືອງມະຫາໄຊ(ປັດຈຸບັນ) ທີ່ວັດບ້ານໂພວາ(ດອນຈະອາງ ກໍ່ຈັດຕັ້ງພິທີລຳຜະຫຍາ ມະຫາໄຊ ໂດຍມີ ທ່ານ ບຸນສອນ ແສງດາວົງ ເຈົ້າເມືອງມະຫາໄຊ ພ້ອມດ້ວຍພະນັກງານລັດຖະການ ພໍ່ແມ່ປະ ຊາຊົນ ແລະ ໝໍລຳຜະຫຍາຂະໜານແທ້ ຮ່ວມມ່ວນຊື່ນຢ່າງມີເນື້ອໃນ ແລະ ຄວາມໝາຍສຳຄັນຍິ່ງ.

ການເວລາອັນມີຄຸນຄ່າຜ່ານມາ ເກືອບສາມປີເຕັມ ຂ້າພະເຈົ້າໄດ້ພະຍາຍາມຄົ້ນຄວ້າຮຽບຮຽງ ກ່ຽວກັບວັນນະກຳພື້ນເມືອງລາວລຳຜະຫຍາມະຫາໄຊ. ນັບຕັ້ງແຕ່ຜູ້ເຖົ້າ ຫລັກບ້ານຫລັກເມືອງ, ຄູບາອາ ຈານ ຜູ້ຊົງຄຸນວຸດທິ ນັກຮຽນຮູ້ ປັນຍາຊົນ ໝໍລຳຜະຫຍາ ໃນຫລາຍຮູບຫລາຍແບບທີ່ຍືດຍາວ. ທັງຊອກໄດ້ຕາມ ບົດຕຳລາທີ່ຂຽນ ຫລືຈານໄວ້ເປັນມູນມັງສັງຂະຫຍານັບມາໄດ້ຫລາຍປີ .

ດັ່ງນັ້ນ, ເພື່ອເປັນການອະນຸລັກ ແລະ ເສີມຂະຫຍາຍຄວາມຮູ້ " ຜະຫຍາປັນຍາ " ຂອງບັນພະບຸລຸດ ປູ່ຍ່າ ຕານາຍ ຊຶ່ງຖືໄດ້ວ່າເປັນສິລະປະວັນນະກຳ ພື້ນບ້ານພື້ນເມືອງ ທີ່ມີມູນເຊື້ອ ແລະ ພອນສະຫວັນອັນປະເສີດໃຫ້ຄຸນ ຄ່າທາງດ້ານຈິດໃຈ ອົບຮົມບົ່ມສອນສັງຄົມໃນເຊີງ ຈິດຕະວິທະຍາອັນເລິກເຊິ່ງ ແລະ ໄດ້ພົວພັນຢູ່ໃນຊີວິດປະຈຳ

ວັນ ຂອງປະຊາຊົນລາວມາແຕ່ດົນນານ. ປຶ້ມວັນນະກຳ ພື້ນເມືອງລາວ ລຳມະຫາໄຊກທ້ອນີ້ ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງສູງ ທີ່ໄດ້ຮັບການຈັດພິມອອກມາຮັບໃຊ້ສັງຄົມ. ເຖິງແມ່ນຂອບເຂດແຫ່ງການຄົ້ນຄ້ວາພົບເຫັນຄຸນຄ່າຂອງຜູ້ອອກແຮງງານ ທາງດ້ານມັນສະໝອງທີ່ຍັງທັບຖົມບົ່ມຊ້ອນຢູ່ບໍ່ທັນຫລາຍປານໃດ. ຂ້າພະເຈົ້າເຊື່ອໝັ້ນວ່າໄດ້ເປັນຜູ້ບຸກເບີກຕົ້ນທາງທີ່ຈະກ້າວໄປສູ່ຈຸດໝາຍແຫ່ງການຄົ້ນຄ້ວາພົບເຫັນສິ່ງທີ່ດີງາມ ແລະ ບໍ່ສິ້ນສຸດໄດ້ເທື່ອ !

ດັ່ງນັ້ນ, ຈິ່ງຫວັງຢ່າງຍິ່ງວ່າ ພູມປັນຍາ ອັນສະຫລາດສະຫລຽວ ຍັງມີສະຫລັບສັບຊ້ອນ ຢູ່ໃນມັນສະໝອງຂອງແຕ່ລະຄົນໄດ້ບັນຈຸຄວາມຊົງຈຳຫລາຍສິ່ງຫລາຍປະການ. ທ່ານຜູ້ອ່ານ ນັກຄົ້ນຄ້ວາທັງຫລາຍຫາກເຫັນໄດ້ຄວາມໝາຍສຳຄັນ ຈິ່ງຕຳໜິຕິຊົມປະກອບຄຳເຫັນເພີ່ມເຕີມມາຍັງພວກຂ້າພະເຈົ້າດ້ວຍ.

ຂໍຂອບໃຈ ມານະໂອກາດນີ້ດ້ວຍ.

ສາລະບານ

ໜ້າ

1. ວັນນະກຳພື້ນເມືອງລາວ ລຳຜະຫຍາມະຫາໄຊ (ແຂວງຄຳມ່ວນ).....1
2. ລັກສະນະວັນນະກຳ ພື້ນເມືອງ ໃນຮູບແບບ ໝໍລຳຜະຫຍາ.....3
3. ກຳເນີດ ໝໍລຳ.....3
4. ຄຸນຄ່າ ທາງດ້ານ ການລຳ ແລະ ຟັງລຳ.....4
5. ການກຳເນີດ ໝໍລຳຜະຫຍາມະຫາໄຊ.....5
6. ຕັ້ງຊື່ ແລະ ລຳຖວາຍເມືອງມະຫາໄຊ.....6
7. ລັກສະນະ ພື້ນຖານ ການຂະຫຍາຍຕົວ ລຳມະຫາໄຊ.....7
8. ການອະນຸລັກ ສົ່ງເສີມ ລຳມະຫາໄຊ.....8
9. ກອນລຳ ຜະຫຍາ (ເນື້ອໃນ ແລະ ຄວາມໝາຍ).....8
10. ລະດັບຂັ້ນຕອນ ດ້ານສິລະປະ ວິທີ ຂອງໝໍລຳຕອບຜະຫຍາ.....9
11. ພິທີຂຶ້ນ ອໍ້-ຄາຍ ໝໍຂັບ-ລຳ.....10
12. ພາກຄຳກອນ ແລະ ຜະຫຍາ.....10

ໝາຍເຫດ :

ໝາຍເລກຕົ້ນສະບັບ ແລະ ເລກຮຽບຮຽງຄືນໃໝ່ ຕົວຢ່າງ(1-7, 2-8) ເປັນລຳດັບ ແຕ່ລະຂໍ້).

ວັນນະກຳ ພື້ນເມືອງລາວ

ລຳຜະຫຍາມະຫາໄຊ

ຄຳມ່ວນ

I. ພູມລຳເນົາ ທີ່ອາດຫານ ແລະ ງົດງາມ :

ດິນແດນທີ່ມີ ອະລະຍະທຳທີເກົ່າແກ່ໃນສະຕະວັດທີ 6 ເປັນຕົ້ນມາ ເລີ່ມເຊື່ອມຍິດທີ່ພົນລົງໃນສະຕະວັດທີ 9 ຊຶ່ງຂະໜານນາມວ່າ ອານາຈັກສີໂຄດຕະບອງ ຫລາຍຮ້ອຍປີຜ່ານໄປຖິ່ນຖານແຫ່ງນີ້ຍັງຝັ່ນເຟືອນຢູ່ໃນອະດີດແຫ່ງຄວາມຊົງຈຳຂອງປະຊາຊົນລາວບັນດາເຜົ່າ, ໂດຍສະເພາະແມ່ນ ທີ່ຕັ້ງແຫລ່ງບູຮານສະຖານ, ຮ່ອງຮອຍຕົວເມືອງຮ້າງ. ສາສະໜາວັດຖຸທີ່ທັບຖົມບົ່ມຊ້ອນຢູ່ໃຕ້ດິນຕະຫລອດທັງບູຮານວັດຖຸທີ່ພົ້ນເດັ່ນແຫ່ງສະຖາປະຕະຍະກຳ ແລະ ວັນນະກຳຄື ພະທາດສີໂຄດຕະບອງທີ່ຕັ້ງຢູ່ແຄມຝັ່ງແມ່ນ້ຳຂອງ ວັດພະທາດເມືອງເກົ່າ (ຫ່າງຈາກຕົວເມືອງທ່າແຂກ ແຂວງຄຳມ່ວນ 6 ຫລັກກິໂລແມັດ <u>ໜຶ່ງໃນມໍລະດົກວັດທະນະທຳ ຂອງຊາດ</u>.

ວັນນະກຳພື້ນເມືອງ ເລື່ອງພະຍາສີໂຄດຕະບອງ ໄດ້ກາຍເປັນສັນຍາລັກ ແລະ ມໍລະດົກແຫ່ງຈິດໃຈຊື່ງຊາວ ທ້ອງຖິ່ນເຊື່ອຖືກັນວ່າ ທ້າວສີໂຄດ ເປັນບຸລຸດຜູ້ເກັ່ງກ້າ, ເປັນແມ່ທັບຜູ້ອາດຫານເອົາຊະນະຂ້າເສິກດ້ວຍກຳລັງ ອັນມະຫາສານ; ດ້ວຍສະຕິປັນຍາທີ່ມີສິລະປະຍຸດ ດ້ວຍການບັນຊາຂອງພະອົງເອງ, ເປັນເຊື້ອໄພ່ຟ້າປະຊາຊົນທຳມະດາສາມັນຈົນສາມາດກ້າວຂຶ້ນເປັນຜູ້ມີບັນດາສັກຂຶ້ນຄອງເມືອງຢ່າງສະຫງ່າອົງອາດ. ແຕ່ປ່ຽມລົ້ນໄປດ້ວຍຄວາມຮັກເຊື້ອແພງຊາດທ້າວສີໂຄດຍັງກ່າວປະນາມຜູ້ຄົນຈຳພວກເຫັນແກ່ຕົວລືມຄຸນຂອງຜູ້ມີຄຸນເຫັນແກ່ເງິນແສນໄຖກົດຂີ່ຂົ່ມເຫັງປະຊາຊົນ. ວັນນະກຳພື້ນເມືອງໄດ້ສະທ້ອນພາບພົດ ແລະ ຈິນຕະນາການແຫ່ງຊີວິດ ແລະ ວາດດຳລົງຊີວິດຂອງປະຊາຊົນ ທີ່ອາໃສທຳມະຊາດເປັນເຄື່ອງພົວພັນຫລໍ່ລ້ຽງຊີວິດ.

ຄວາມແຕກຕ່າງກັນລະຫວ່າງພູມລຳເນົາ ໃນແຕ່ລະ ລະແວກທ້ອງຖິ່ນຈຶ່ງ ພາໃຫ້ສ້າງຄວາມສຳນຶກ ແລະ ອາລົມຈິດ ຊຶ່ງກໍ່ໃຫ້ເກີດມີຫົວຄິດປະດິດສ້າງວັນນະກຳ ຕ່າງໆຂຶ້ນມາອັນໄດ້ກາຍເປັນກອນຂັບກອນລຳຄຳຜະຫຍາອັນປົ້ມມວນອ່ອນຫວານ ແລະ ເລິກເຊິ່ງ .

1. ຄຳມ່ວນໜຶ່ງໃນແຂວງທີ່ຕັ້ງຢູ່ພາກກາງຂອງລາວ ເປັນດິນແດນທີ່ພົ້ນເດັ່ນທາງດ້ານປະຫວັດສາດ ແລະ ແຫລ່ງບູຮານສຖານອັນເກົ່າແກ່ ນັບເປັນພັນກ່ວາປີມາແລ້ວ, ນັບແຕ່ສະໄໝອານາຈັກສີໂຄດຕະບອງ ທີ່ຮຸ່ງເຮືອງ ແລະ ກ້າວເຂົ້າສູ່ຍຸກສະໄໝອານາຈັກລ້ານຊ້າງ, ເລີ່ມແຕ່ສະຕະວັດທີ 16 ເປັນຕົ້ນມາ. ຄວາມແຈ່ມແຈ້ງ ທາງດ້ານປະຫວັດສາດ ກໍສາມາດສະທ້ອນຄືນສູ່ອະດີດສະໄໝແຫ່ງຄວາມຮຸ່ງເຮືອງສີວິໄລ ຂອງອານາຈັກລ້ານຊ້າງ ຊຶ່ງນຳໂດຍບັນພະບຸລຸດລາວຫລາຍອົງ ຄືເຈົ້າຟ້າງຸ່ມມະຫາລາດ, ໄຊຍະເຊດຖາທິລາດ, ສຸລິຍະວົງສາ, ເຈົ້າອະນຸວົງໄດ້ນຳພາບ່າວໄພ່ ລາດຊະດອນຕໍ່ສູ້ ກັບສັດຕູພາຍນອກທີ່ມາຮຸກຮານ ພ້ອມທັງຍາດແຍ່ງກາລະໂອກາດສ້າງສາບ້ານເມືອງ ໃຫ້ຮຸ່ງເຮືອງທາງດ້ານເສດຖະກິດ ວັດທະນະທຳ.

ດັ່ງນັ້ນນິທານພື້ນເມືອງສິໂຄດ ຈຶ່ງສະທ້ອນພາບພົດ ແລະ ຈິນຕະນາການດ້ານຄຸນນະທຳ ຊຶ່ງຍາມໃດກໍ່ສະໜິດຕິດພັນກັບວາດດຳລົງຊີວິດຂອງປະຊາຊົນທີ່ອາໄສທຳມະຊາດເປັນເຄື່ອງ ພົວພັນຫລໍ່ລ້ຽງຊີວິດ. ພ້ອມດຽວກັນນັ້ນກໍເສີມຂະຫຍາຍຫົວຄິດປະດິດສ້າງເຕົ້າໂຮມຄວາມ ແຕກຕ່າງກັນ ທາງດ້ານທຳມະຊາດສັງຄົມ ເຂົ້າສູ່ການສຶກສາອົບຮົມແນວຄິດ ເພີ່ມທະວີສາຍ ພົວພັນແບບລວມສູນດ້ານຈິດສຳນຶກ ຄ່ອຍໆປະດິດສ້າງວັດຖຸ. ຟັນຂະຫຍາຍໃຫ້ເປັນບົດວັນ ນະກຳຂຶ້ນມາ ຊຶ່ງກາຍເປັນເອກະລັກ ແລະ ສີສັນສິລະປະການບັນເທີງຄືໜໍຂັບ - ໜໍລຳພື້ນ ເມືອງຈາກລັກສະນະທ້ອງຖິ່ນກ້າວຂຶ້ນສູ່ລະດັບຊາດ.

2. ແຂວງຄຳມວນມີເຂດແດນ ປະກອບດ້ວຍເນື້ອທີ່ປູກຝັງ 103.311 ເຮັກຕາ, ເນື້ອທີ່ທົ່ງ ຫຍ້າ 40.000 ເຮັກຕາ. ສະເລ່ຍເນື້ອທີ່ປູກຝັງ 0,93 ເຮັກຕາຕໍ່ຄົນ.

- ປະກອບດ້ວຍຕົວເມືອງຄື : ເມືອງທ່າແຂກ ທີ່ຕັ້ງຂອງແຂວງ, ເມືອງມະຫາໄຊ, ເມືອງ ຫີນບູນ, ເມືອງ ຍົມມະລາດ, ເມືອງ ໜອງບົກ, ເມືອງ ເຊບັ້ງໄຟ, ເມືອງ ບົວລະພາ, ເມືອງໄຊ ບົວທອງ, ເມືອງໃໝ່ນາກາຍ.

- ພົນລະເມືອງທັງໝົດມີ 236,491 ຄົນ ຍິງ 85, 754 ຄົນ (ສະຖິຕິພົນລະເມືອງ 1992) ເຂດແດນທິດ ເໜືອຕິດກັບແຂວງບໍລິຄຳໄຊ, ທິດໃຕ້ຕິດກັບແຂວງສະຫວັນນະເຂດ, ທິດຕາເວັນອອກຕິດກັບປະເທດຫວຽດນາມ, ທິດຕາເວັນຕົກຕິດກັບ ປະເທດໄທ.

- ພົນລະເມືອງປະກອບດ້ວຍບັນດາຊົນຊາດສວນໃຫຍ່ຄື : ລາວລຸ່ມ, ລາວເທິງ, ລາວສູງ ແລະ 29 ຊົນເຜົ່າສ່ວນນ້ອຍ, ເຂົາເຈົ້າດຳລົງຊີວິດຢູ່ໃນເງື່ອນໄຂທຳມະຊາດ ແລະ ວັດທະນະທຳ ສັງຄົມແຫ່ງວົງຄະນາຍາດຊາດລາວ, ມີຊີວິດການເປັນຢູ່ຮ່ວມໄຊກຊາຕາກຳອັນດຽວກັນມາ ແຕ່ເທິງນານ, ມີມູນເຊື້ອສາມັກຄີຮັກແພງ ຕໍ່ສູ້ພາຍໃຕ້ການນຳພາຂອງບັນພະບູລຸດ, ວິລະບູລຸດ, ຜູ້ມີນ້ຳໃຈຮັກຊາດຢ່າງເບື້ອງບົດລຽນຕິດ ແລະ ຍຶດເຍື້ອຍາວນານ. ມູນເຊື້ອລຳຜະຫຍາມະ ຫາໄຊ ໄດ້ຕິດພັນກັບປະຫວັດສາດການຕໍ່ສູ້ຂອງຊົນເຜົ່າຊາວມະຫາໄຊກອງ ແກ້ວບູຮານນັບ ໄດ້ 200 ກວ່າປີ ແຫ່ງສະຕະວັດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບການສະຖາປະນາຂຶ້ນ. ຜົນສຳເລັດ ອັນສະຫງ່າລາສີ ແຫ່ງການປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃນນັ້ນຍັງເຂດວຽກ ງານສິລະປະວັນນະຄະດີຂັບລຳກໍ່ ພວມໄດ້ຮັບການຂຸດຄົ້ນສົ່ງເສີມ ເພື່ອສະທ້ອນຄືນ ແລະ ຍັ້ງ ຍືນແຫລ່ງກຳເນີດ ແຫ່ງກົກເຄົ້າຂໍ້ມູນທາງດ້ານພູມປັນຍາອັນສະຫລາດ ຫລັກແຫລມ ຂອງ ຄົນຮຸ່ນກ່ອນ, ຊຶ່ງປຽບເໝືອນນາຍຊ່າງຜູ້ເຈຍລະໄນເພັດນິນຈິນດາ, ເງິນຄຳໃຫ້ມີແສງຮຸ່ງກະ ຈາຍຕະຫລອດການ.

II. ລັກສະນະວັນນະກຳພື້ນເມືອງໃນຮູບແບບສິລະປະໜໍລຳຜະຫຍາ:

1. ລຳພື້ນເມືອງ ໂດຍແມ່ນປະຊາຊົນທ້ອງຖິ່ນ ເປັນຜູ້ສ້າງສັນຮວບຮວມກັ່ນກອງ ນຳອອກ ເຜີຍແຜ່.

2. ນັກກະວີຜູ້ປະພັນ ສ່ວນຫລາຍແມ່ນ ຄູບາອາຈານ ແລະ ຊາວບ້ານຜູ້ມີຄວາມຮູ້ທາງດ້ານ ຄະດີໂລກ ແລະ ຄະດີທຳ.

3. ພາສາທີ່ໃຊ້ເປັນພາສາທ້ອງຖິ່ນ ທີ່ເຂົ້າໃຈງ່າຍ ໂດຍໃຫ້ຄວາມໝາຍ ເພື່ອຜູ້ອ່ານຜູ້ຟັງເປັນສຳນວນ ໂວຫານທ້ອງຖິ່ນ.

4. ການດຳເນີນເນື້ອເລື່ອງ ເພື່ອໃຫ້ຄວາມມ່ວນຊື່ນ ໃນຮູບແບບສິລະປະການບັນເທີງຕ່າງໆ. ໂດຍຍົກສູງ ຄຸນຄ່າທາງດ້ານຈິດໃຈ ແລະ ພົວພັນກັບຮີດຄອງປະເພນີ ສາດສະໜາເຊັ່ນ: ພາມ, ພຸດ ແລະ ຜີ...

5. ຖືເອົາພາສາວັນນະກຳ ໃນລັກສະນະຄຳກອນຜະຫຍາ ແລະ ອື່ນໆ ເປັນຄຳກ່າວວິງວອນ ສັນລະເສີນໄຊ ພິທີກຳຕ່າງໆ.

III. ການກຳເນີດໝໍລຳ:

ໝໍລຳໝາຍເຖິງ ຜູ້ມີຄວາມຮູ້ ແລະ ມີຄວາມສະຫລາດ ມີຄວາມຈື່ຈຳສູງ ຮັບເອົາບົດຮຽນຈາກຄູບາອາຈານຖ່າຍທອດໃຫ້ຢ່າງວ່ອງໄວ. ຄົນດັ່ງກ່າວນິຍົມກັນໃຫ້ຊື່ວ່າ: " ຄົນມີພອນສະຫວັນ ຫລືມີຜະຫຍາປັນຍາຫລາຍ ດັ່ງນັ້ນ, ພື້ນຖານກຳເນີດໝໍລຳສັນນິດຖານໄດ້ 3 ປະການຄື:

1. ໝໍລຳ ເກີດມາຈາກ ໝໍເຢົາ, ໝໍສ່ອງ, ຄວາມເຊື່ອຖືວ່າ " ຜີຟ້າ ຜີແຖນ ຜີພໍ່ແມ່, ບັນພະບຸລຸດ ແມ່ນມີອຳນາດເໜືອທຳມະຊາດ, ເຊື່ອວ່າທຳມະຊາດ ມີສິ່ງສັກສິດຄຸ້ມຄອງ ແລະ ບັນດານໃຫ້ເກີດໄພອັນຕະລາຍ ຕ່າງໆນາໆໄດ້ ຄືຍາມມີຄົນ ເຈັບປ່ວຍການຮັກສາຄົນເຈັບກໍເຮັດຕາມວິທີຂອງໝໍຜີຄື ການລຳຜີຟ້າ ລຳສ່ອງ ລຳເຢົາ ຕໍ່ມາກໍ່ມີການລຳເຕົ້າຂ່ວງ ລຳລ້ຽງຜີ ແລະ ຟ້ອນງ້າວເປັນສິລະປະເບື້ອງຕົ້ນ.

2. ໝໍລຳເກີດຈາກທຳນອງການອ່ານໜັງສືຜູກ ຫລື ວັນນະກຳພື້ນເມືອງ ທີ່ຈານລົງໃສ່ໃບລານລວມມີ ນິທານຊາດົກ ແລະ ນິທານພື້ນບ້ານ ພື້ນເມືອງຕ່າງໆ ເຊັ່ນ: ເລື່ອງ ກາລະເກດ, ສັງສິນໄຊ, ນາງຜົມຫອມ, ກຳພ້າ ຜີນ້ອຍ, ທ້າວ ຄຳຟອງ, ຜາແດງນາງໄອ່ ແລະ ອື່ນໆ. ຜູ້ອ່ານໜັງສືຜູກ ໄດ້ມີຄວາມສາມາດແຕກສານດ້ານອັກສອນລາວເດີມອັກສອນທຳ ອ່ານຫລາຍເທື່ອຈົນກ່ວາຜູ້ຟັງ ແລະ ຜູ້ອ່ານ ຈື່ຈຳເລື່ອງນິທານຕ່າງໆ ໄດ້ດີແລ້ວນຳມາເລົ່າສູ່ກັນຟັງ.

ລັກສະນະການເກັບໜັງສືຜູກໃນສະໄໝບູຮານໂດຍໃຊ້ວິທີເອົາລຳໄມ້ໄຜ່ມາເຈາະເປັນປ່ອງແລ້ວສອດ ໜັງສືໄວ້ຂ້າງໃນໃຊ້ຝາປິດໃຫ້ແຈບ ເອີ້ນຊື່ວ່າ " ໜັງລຳ " ຫລື ເອີ້ນວ່າ" ບັ້ງລຳໝໍລຳກໍ່ເກີດຂຶ້ນໃນວັນນະກຳໜັງສືຜູກໂດຍປະການດັ່ງກ່າວ.

3. ໝໍລຳ ເກີດຂຶ້ນຈາກ ການກ້ຽວພາລາສີຕ່າງໆ ເປັນຕົ້ນໃນຍາມການລົງຂ່ວງເຂັນຝ້າຍການຮັບ ແລະ ສົ່ງແຂກໃນງານປະເພນີທີ່ບ່າວສາວໄດ້ມີໂອກາດພົບພໍ້ກັນ ດ້ວຍການສົນທະນາ ເວົ້າຈາຕໍ່ແຍກັນດ້ວຍການໃຊ້ໂວຫານ ທີ່ມີສຳນວນເກາະກ່າຍກັນ ແລະ ມີຄວາມໝາຍເລິກເຊິ່ງ,ຊຶ່ງນິຍົມເວົ້າ ຫລື ຈ່າຍຜະຫຍາ ປະສົມປະສານກັນ. ການໃຊ້ຄຳກອນຜະຫຍາ ປະໂຫຍກຍາວໆຂັບລຳກ້ຽວໂຕ້ຕອບກັນ ເອີ້ນວ່າ " ໝໍລຳຜະຫຍາ " ບາງ ຄັ້ງກໍນຳເອົານິທານພື້ນເມືອງ ຫລື ຊາດົກຍົກເອົາບາງຕອນມາລຳຖາມ - ຕອບກັນໂດຍໃຊ້ກອນຍາວ ເຊິ່ງເອີ້ນວ່າ ລຳຕໍ່ກອນ. ລຳພື້ນຖານດັ່ງເດີມຂອງໝໍລຳຜະຫຍານິຍົມກັນດ້ວຍວິທີນັ່ງລຳ ໂດຍຮັກສາພື້ນຖານສິລະປະ

ວິທີແບບກ້ຽວສາວລິງຂ່ວງ. ເນື່ອງຈາກວ່າໝໍລຳໃນສະໄໝກ່ອນບໍ່ໄດ້ລຳເປັນອາຊີບ, ໂດຍລຳຈາກຄວາມສະໝັກໃຈ ແລະ ຄວາມມັກ ຂອງຕົນແລ້ວກໍ່ລຳໃນພິທີກຳຕ່າງໆ ເພື່ອເປັນສິລິມຸງຄຸນສ້າງສັນໃຫ້ມີບັນຍາກາດໃນສະຖານທີ່ໂຮມຊຸມນຸມຕາມຄວາມນິຍົມຮ້ອງຂໍຂອງຜູ້ຟັງຢ່າງເປັນປະຈຳ.

4. ຄຸນຄ່າທາງດ້ານການລຳ ແລະ ຟັງລຳ :

ໝໍລຳໄດ້ເສີມສ້າງຄຸນຄ່າທາງດ້ານຈິດໃຈ ໃຫ້ແກ່ຜູ້ຟັງໂດຍຄຸນປະໂຫຍດທີ່ໄດ້ຮັບຄວາມຮູ້ສຶກຈາກສິລະປະການຟັງລຳດັ່ງນີ້ :

1. ໝໍລຳໃຫ້ຄວາມເບີກບານມ່ວນຊື່ນໃນໝູ່ມະຫາຊົນ ໂດຍສະເພາະຊາວຜູ້ອອກແຮງງານດ້ານການຜະລິດກະສິກຳຊຶ່ງລວມຢູ່ໃນທ້ອງທຳນອງ ຂອງຂັບລຳ ແລະ ລຳອື່ນໆ.

2. ໝໍລຳໃຫ້ຮູ້ທາງດ້ານຄະດີໂລກ ແລະ ຄະດີທຳແກ່ຜູ້ຟັງເຊັ່ນຄວາມຮູ້ທາງປະຫວັດສາດ ພູມສາດ, ການໄປມາຫາສູ່ຊອກຢູ່ຫາກິນ, ຮີດຄອງປະເພນີ. ຮູ້ຄຸນຂອງຜູ້ມີຄຸນຄືຊາດອຸດທີ, ຄຸນອຸດທີ, ປັນຍາອຸດທີ ໝາຍເຖິງຄູບາອາຈານຜູ້ສັ່ງສອນ, ສິລະປະນິທານວັນນະຄະດີຕ່າງໆ.

3. ໃຫ້ປະຕິພານໂວຫານ ແລະ ໄຫວພິບໃນການໂຕ້ຕອບ ແລະ ແກ້ໄຂບັນຫາເຮັດໃຫ້ຜູ້ສະແຫວງຄວາມຮູ້ ເປັນຄົນສະຫລາດສະຫລຽວ ຮູ້ເຫດຮູ້ຜົນ. ຈາກເນື້ອຫາສາລະຂອງກອນລຳທີ່ສອດປະສານເປັນສຸພາສິດ, ຄຳຄົມ, ທີ່ເອີ້ນວ່າ ຄຳຜະຫຍາ ໄວ້ໃນທຸກຍຸກທຸກສະໄໝ.

- ຜູ້ເປັນໝໍລຳນັ້ນຈະຕ້ອງມີ ຄຸນສົມບັດພິເສດປະກອບໄປດ້ວຍ ບຸກຄະລິກລັກສະນະ ທີ່ມີສິລະປະວາດແວວ, ເປັນຜູ້ມີຄວາມຮູ້, ມີໄຫວພິບປະຕິພານ ສະຫລາດສະຫລຽວ, ມີຄວາມຈື່ຈຳດີມີມານະຈິດພາກພຽນພະຍາຍາມ ທ່ອງບົດກອນລຳ, ມີນ້ຳສຽງດີມີຮູບຮ່າງໜ້າຕາດີມີມາລະຍາດອ່ອນໂຍນປິ່ນນອບນັ້ນຄື ເສັ້ນທາງທີ່ຈະປະສົບຄວາມສຳເລັດໃນອາຊີບໝໍລຳ.

- ໝໍລຳໄດ້ຮັບການອະນຸລັກ ແລະ ເສີມຂະຫຍາຍມາດ້ວຍ 2 ລັກສະນະສືບທອດຄື: 1 ໝໍລຳຖືກລຳໃນພິທີການຕ່າງໆ ໃນລັກສະນະແຫ່ງຊາດ. 2. ລຳຕາມປະເພນີນິຍົມ ແລະ ມ່ວນຊື່ນໂດຍທົ່ວໄປ.

ການສະໜອງຄຸນຄ່າ ໃຫ້ແກ່ໝໍລຳ ກໍ່ເລີ່ມດ້ວຍການຂື້ນອໍ່ຍໍຄາຍຄາລະວະສົມມາ ຄູບາອາຈານ ຕໍ່ມາກໍ່ກາຍເປັນຄ່າຈ້າງ ຮາງວັນຄະນະໝໍລຳເປັນອາຊີບປະຈຳ ແລະ ເຄື່ອງອາຊີບກໍມີຢ່າງຫລວງຫລາຍ.

IV. ກຳເນີດລຳຜະຫຍາ ມະຫາໄຊ :

ລຳຜະຫຍາມະຫາໄຊ ແມ່ນລຳພື້ນເມືອງອີກຮູບແບບໜຶ່ງ ທີ່ມີເອກະລັກສະເພາະຂອງຊົນເຜົ່າລາວມະຫາໄຊ ການກ້າວເຂົ້າສູ່ຈຸດໝາຍແຫ່ງການຢັ້ງຢືນເຖິງຕົ້ນກຳເນີດລຳຜະຫຍາມະຫາໄຊ ພວກເຮົາໄດ້ຖືເອົາບຸກຄົນຜູ້ເປັນເຈົ້າຕຳນານຂອງທ້ອງຖິ່ນ ໃນຖານະທີ່ພວກເພິ່ນ

24/VII

ເກີດກ່ອນ ແລະ ພາພວກເຮົາແນມຄືນຫລັງເຫັນພາບພົດແຫ່ງອະດີດ ເກືອບໜຶ່ງສະຕະວັດຜ່ານມາ ຫລື ກ່ອນນັ້ນກໍມີກົກເຄົ້າຂໍ້ມູນຕຳນານ, ຕຳລາ ແລະ ມີຄວາມ ຊົງຈຳຕໍ່ເຫດການຕ່າງໆທີ່ເລົ່າສືບທອດກັນມາສະເພາະກໍ່ຄືສິ່ງພົວພັນເຖິງຕົ້ນກຳເນີດ ໜໍ່ລຳພະຫຍາມະຫາໄຊ.

1. ເຫດຜົນທາງດ້ານປະຫວັດສາດ :

ກ່ອນໜ້ານີ້ 200 ກ່ວາປີ ມີທ້າວພະຍາໄຊ ໄດ້ຄອງເມືອງ(ຜາໄຊ) ຫລື ເມືອງພິມ ໃນຕອນທີ່ເກີດສົງຄາມລະຫວ່າງສະຫຍາມກັບລ້ານຊ້າງ. ຄອບຄົວຄົນລາວໄດ້ຖືກກວາດຕ້ອນໄປເກືອບໝົດ ເຈົ້າໄຊບໍ່ຍອມໃຫ້ພວກທະຫານສະຫຍາມບັງຄັບຄົນລາວໂດຍງ່າຍ ຈຶ່ງເຕົ້າໂຮມກຳລັງຂັດຄ້ານຕ້ານຍັນ ຕໍ່ແມ່ທັບນາຍກອງຂອງແມ່ ທັບສະຫຍາມ ເຮັດໃຫ້ພວກເຂົາມີຄວາມຢ້ານກົວ ແລະ ເກງຂາມເຂົາຈຶ່ງໂຍະຍານໃຫ້ຄອບຄົວຄົນລາວ ທີ່ຖືກກວາດຕ້ອນໄປ ແຕ່ເມືອງຜາໄຊ (ເມືອງພິມ) ພາກັນຕັ້ງຖິ່ນຖານຢູ່ແຖບເມືອງ ໜອງຫານ(ສະກົນນະຄອນ) ເຈົ້າໄຊແຕ່ງໃຫ້ພະຍາຈັນ ນັ່ງເມືອງໜອງຫານ ທ້າວພະຍາໄຊ ຈຶ່ງເກັຍກ່ອມດ້ວຍອັດທະຍາໄສຂອງຕົນຕໍ່ ພະຍາຈັນ ເພື່ອໃຫ້ມີຈິດໃຈ ຕໍ່ສູ້ເຂັ້ມແຂງຄືກັບພະອົງ. ການເຄື່ອນໄຫວເຕົ້າໂຮມຄົນລາວ ທີ່ພັດພາກຈາກຖິ່ນ ໃຫ້ກັບຄືນສູ່ຖິ່ນເດີມ ພ້ອມທັງປັບປຸງກຳລັງປະຈັນບານ ກັບກອງທະຫານສະຫຍາມຢ່າງເປື້ອງປີດລຽນຕິດທີ່ນຳ ໂດຍທ້າວ ພະຍາໄຊໄດ້ເຄື່ອນໄຫວ ແຜ່ມາຮອດບ້ານວານອນ, ບ້ານອາກາດ, ບ້ານນາຫວ້າ, ນາງົວ, ຕໍ່ລົງຮອດ ນ້ຳກ່ຳສົງຄາມ, ຍ້ອນເງື່ອນໄຂທີ່ບໍ່ອຳນວຍປານໃດ ຂະບວນຕໍ່ສູ້ຂອງພະຫຍາໄຊ ຈຶ່ງຕົກລົງເຂົ້າສູ່ສະພາບ ຄືໝູ່ເສືອຈອບກິນລູກສັດທີ່ຍັງອ່ອນນ້ອຍ. ໝາຍເຖິງພວກທະຫານສະຫຍາມເຫັນທ່າແຮງ ແລະ ປະຕິກິລິຍາຂອງຊາວບ້ານທີ່ບໍ່ພໍໃຈຕໍ່ພວກເຂົາ.

ການຊອກຫາຊ່ອງທາງ ເພື່ອລີ້ຊ່ອນ ລັກຫລອນມາຮ່ວມເປັນກຳລັງ ນຳເຈົ້າໄຊ ຂະບວນຊັກຊວນກັນ ຄືນສູ່ຖິ່ນຖານເດີມນັ້ນ ນັບມື້ແຜ່ກວ້າງອອກໄປ, ທະຫານສະຫຍາມມີຄວາມສະເທືອນພວກເຂົາຍິ່ງບັງຄັບຈຳກັດຮັດແຄບ ເຄື່ອນໄຫວກົດຂີ່ປາບປາມຊາວອີບພະຍົກຂົ້ມຂູ້ກໄຊຜູ້ຄົນທັງຫລາຍ ໄດ້ຮູ້ຂ່າວການຕິດຕາມຫາພະຍາໄຊ ຂອງທະຫານສະຫຍາມ ເພື່ອຕັດທອນໄຟກ່ອນຫົວລົມ ເຈົ້າໄຊຮູ້ຂ່າວເຫັນທ່າບໍ່ປອດໄພ ຈຶ່ງໄດ້ກຳໜົດ ເສັ້ນທາງຂອງຕົນພາອີທີກັບຄືນສູ່ຖິ່ນເດີມໃນການເວລາອັນສົມຄວນ.

ການເດີນທາງ ຂອງພະຍາໄຊ ພ້ອມດ້ວຍຊາວບ້ານຜູ້ສະກັນ ແຂງແຮງຈຳນວນໜຶ່ງຮອດຝັ່ງແມ່ນ້ຳຂອງມາທາງໄຊບູລີ, ປຸງເລງ ແລ້ວກໍ່ສືບຕໍ່ເດີນທາງມາເຖິງແມ່ນ້ຳສາຍໜຶ່ງ ຕໍ່ແມ່ນ້ຳສາຍໜຶ່ງເພື່ອເປັນເຄື່ອງໝາຍ ແລະ ສະດວກໃນການພັກແຮມມື້ ແຮມຄືນຜ່ານເສັ້ນທາງທຸລະກັນດານຂຶ້ນພູລົງຄ້ອຍກໍອົດທົນເພື່ອໃຫ້ຮອດ ບ້ານເກົ່າເມືອງເດີມ *(ພົງສາວະດານລາວສະໄໝເຈົ້າອະນຸວົງກອບກູ້ເອກະລາດ ຄ.ສ 1778).*

ປີຈຸລະສັກກະລາດ 1188 ປີຮວາຍເສັດພຸດທະສັກກະລາດ 2369 ປີຈໍ ສົງຄາມລະຫວ່າງອານາຈັກ ສະຫຍາມ (ກຸງເທບ) ແລະ ອານາຈັກລ້ານຊ້າງ(ວຽງຈັນ) ຮອດປີ ພ.ສ 2371 ປີຈໍລວມໄດ້ 3 ປີ ຈຶ່ງແລ້ວເຈົ້າອະນຸ ໄດ້ເຄື່ອນໄຫວກອງທັບອານາມມາຊ່ວຍ ແຕ່ພະອົງຖືກກອງ

ທັບສະຫຍາມ ຈັບສິ່ງໄປກຸງເທບ ຍ້ອນການສົມ ຮູ້ຮ່ວມຄິດ ກັບຄົນລາວທີ່ອ່ອນແອ ບໍ່ເຫັນພ້ອມພະອິງໃນການຕໍ່ສູ້ ເພື່ອກອບກູ້ເອກະລາດຈາກສັກດີນາສະຫຍາມ. ພໍດີກອງທັບອານາມ (ແກວ) ມາຊ່ວຍ ແລະ ຕໍ່ສູ້ກັບກອງທັບສະຫຍາມ ເວລານີ້ຄອບຄົວຄົນລາວ ໄດ້ຮັບຄວາມ ເດືອດຮ້ອນ ແລະຖືກບັງຄັບກວາດຕ້ອນອີກຄັ້ງໜຶ່ງ ໄດ້ອົບພະຍົບຂ້າມແມ່ນ້ຳຂອງຝັ່ງຊ້າຍໄປຢູ່ຝັ່ງຂວາ ຫລາຍຮ້ອຍຄອບຄົວຄື ຊາວເມືອງມະຫາໄຊກອງແກ້ວ, ເມືອງເຊໂປນ, ເມືອງວັງອາງຄຳ ໄດ້ພາກັນຕັ້ງບ້ານເຮືອນ ຢູ່ດົງຫວາຍສາຍບໍ່ແກໃນເຂດທາດພະນົມ, ສະກົນນະຄອນ, ນະຄອນພະນົມເຊັ່ນ ຊາວເມືອງເວ (ເລນູນະຄອນ) ປັດຈຸບັນ.

ຄັດຈາກປຶ້ມຕຳນານ ພະທາດພະນົມ
ສະບັບ ພິມຄັ້ງທີ່ 10 ພ.ສ 2537
ໂດຍ ຍາທ່ານ ແກ້ວ ອຸທຸມມາລາ

1. ຕັ້ງຊື່ເມືອງມະຫາໄຊ :

ຊາວເມືອງຜາໄຊ (ເມືອງພິມ) ໄດ້ຟື້ນຕົວຂຶ້ນມາໃຫມ່ຊາວບ້ານ ທີ່ຫລົງເຫລືອລີ້ຊ່ອນ ຈາກການກວດຕ້ອນ ຂອງທະຫານສະຫຍາມທີ່ອາໃສຢູ່ບ່ອນສອກຫລີກກໍຄືນມາ ເຕົ້າກັນຢູ່ດອນບັນພະບຸລຸດຂອງຕົນ. ການສ້າງແປງບ້ານເມືອງກໍຄ່ອຍເປັນປຶກແຜ່ນແຫນ້ນຫນາຂຶ້ນ. ບັນຍາກາດການດຳລົງຊີວິດກໍໄດ້ຮັບຄວາມສຸກກະເສີມປະຊາຊົນໄດ້ເສີມສ້າງ ຈັນຍາທຳຂອງຕົນຕາມຮີດສິບສອງຄອງສິບສີ່. ເວລານີ້ ທ້າວພະຍາໄຊ ຍັງບໍ່ທັນຮັບພິທີຄອງເມືອງ ແລະ ປະກາດແດນເມືອງ ເປັນທີ່ແນ່ນອນມີແຕ່ອີງໃສ່ຄວາມນິຍົມ ເອີ້ນຕາມຊື່ເມືອງເດີມກ່ອນ.

2. ພິທີລຳຖວາຍເມືອງ :

ຫລາຍສິບປີຜ່ານໄປ ບ້ານເມືອງກໍບໍ່ຄ່ອຍມີ ກອງທະຫານສະຫຍາມມາຂົ່ມຂູ່ ບ່າວໄພ່ປະຊາຊົນກໍອັ່ງອໍ ຫນ້າແຫນ້ນດິນໄຮ່ ດິນນາ ຫນອງນ້ຳ ວັງປາກໍ່ມັບມື້ນ້ອຍລົງ ດິນຫລວງກໍ່ແຄບເຂົ້າ ສາຍທາງຕິດຕໍ່ ເຮືອຖໍ່ ເຮືອພາຍ ເຮືອແພ ທີ່ເປັນເສັ້ນທາງຊ້ຳບໍ່ມີແມ່ນ້ຳໃຫຍ່.

ດັ່ງນັ້ນ, ພິທີຖວາຍເມືອງ ຄວນຫາບ່ອນຕັ້ງເມືອງໃຫມ່ຕາມຄວາມປະສົງຂອງພະຍາໄຊ " *ບ່ອນຕັ້ງ ເມືອງໃຫມ່ ຢູ່ບ້ານກອນຕັນ ຫ້ວຍນ້ຳປີງ ໃກ້ຝັ່ງນ້ຳເຊບັ້ງໄຟ* ". ເທື່ອນີ້ ໄດ້ມີການສົ່ງທ້າວ ພະຍາໄຊ ການແຫ່ແຫນແຜນກັ້ງ ປະກົດມີສຽງຂັບກ່ອມອັນໃຫມ່ຂຶ້ນ ທີ່ສືບເນື່ອງມາຈາກສຽງໂອຍ... ການເຊັ້ງການແອ່ນພະທຍາຕໍ່ແຍ ຂອງບ່າວສາວໄດ້ເກີດຂຶ້ນເປັນຂະບວນພິທີຖວາຍພະພອນຫລວງໃຫ້ແກ່ທ້າວພະຍາ ໄດ້ສ້າງຄວາມປິຕິຊົມຊື່ນກວ່າສິ່ງ ອື່ນແມ່ນວາດສຽງລຳໂອຍ... ອັນອອນຊອນສອດແຊມກັນ ການຕີກາບຈ່າຍຜະຫຍາ ສົ່ງພອນສັນລະເສີນແຕ່ນັ້ນມາ ລຳໂອຍ... ປະຈຳທ້ອງຖິ່ນໄດ້ປ່ຽນຖານະມາເປັນລຳມະຫາໄຊ ຄຽງຄູ່ກັບຊື່ເມືອງຕາບເທົ້າຮອດມື້ນີ້.

ໂດຍ: ທ່ານ ທຳມະສິນໄຊ ຄຳຝັ້ນ
ຄະນະແນວລາວສ້າງຊາດ ແຂວງຄຳມ່ວນ

3. ເກືອບຮ້ອຍກ່ວາປີພຸ້ນ ມີບ້ານໃຫຍ່ກ່ວາທຸກບ້ານ ຊື່ບ້ານເມືອງພິນ ຕັ້ງຢູ່ແຄມຝັ່ງນ້ຳຍິມ ຫ່າງຈາກຕົວເມືອງ ຍີມມະລາດ ລົງມາທາງໄຕ້ປະມານ 4-5 ກິໂລແມັດ ປັດຈຸບັນຍັງມີໝູ່ບ້ານຢູ່ຄືບ້ານໜອງປິງຝັ່ງແດງ ແກ້ວເຫັລກ, ນາໂພ, ຕໍ່ລົງຮອດບ້ານຫ້ວຍເຢັນ ຮ່ອງຮອຍຕົວເມືອງເກົ່າຍັງມີຫລັກຖານເດັ່ນຊັດຄື: ວັດຮ້າງດອນສີມ ຫ້ວຍແຄນແດນເມືອງ. ເສົາຂົວເກົ່າຂ້າມນ້ຳຍິມ, ບ່ອນນີ້ທີ່ຕັ້ງ ເມືອງມະຫາພິນກອງແກ້ວ ຊົນເຜົ່າປັດຈຸບັນມີຄື: ເຜົ່າຜູ້ໄທກະຕ່າງ, ໄທກະເລີງ, ເຜົ່າມະກອງ, ໄທເມີ້ຍ ມີສຽງລຳໂອຍ. ມາແຕ່ຢ່າງໃດບໍ່ຮູ້ ! ໝາຍຄວາມວ່າ ໂອຍສຽງຍາວທີ່ສຸດ ຟັງສຽງລຳໂອຍຂື້ນແຕ່ຝັ່ງນ້ຳຍິມ ເບື້ອງໜຶ່ງຕຶກຝັ່ງນ້ຳຍິມເບື້ອງໜຶ່ງ ລຳໂອຍ... ນີ້ນິຍົມກັນລຳຍາມໄປເກັບຜັກຫັກໜໍ່ບ່າວສາວ ກໍ່ມັກໂອ່ຍສຽງລຳໃສ່ກັນ ເວລາຢູ່ຄືນລະຝັ່ງນ້ຳໄປຊອກຢູ່ຫາກິນໃນດົງ ແລະ ປ່າທີ່ຕືບໜາກໍ່ໂອຍສຽງລຳຫາກັນ.

ໂດຍ : ລຸງຈານປານ ອາຍຸ 87 ປີ
ບ້ານ ຍີມມະລາດເກົ່າ.

4. ລັກສະນະພື້ນຖານ ການຂະຫຍາຍຕົວຂອງລຳມະຫາໄຊ:

ລຳມະຫາໄຊ ແມ່ນໜຶ່ງໃນ ເອກະລັກຂອງລຳພື້ນເມືອງລາວ ໄດ້ມີຕົ້ນກຳເນີດຢູ່ທ້ອງຖິ່ນພາກກາງຂອງ ລາວອາດພ້ອມກັນກັບ ການປະກົດຊື່ ເມືອງມະຫາໄຊ (ກອງແກ້ວ) ຫລືເມືອງມະຫາພິນເກົ່າ. ລຳມະຫາໄຊ ກໍ່ໄດ້ຮັບຄວາມນິຍົມໄປສູ່ທ້ອງຖິ່ນອື່ນ ຊຶ່ງສະແດງອອກທາງດ້ານເອກະລັກອັນສູງສົ່ງ ໃນຮູບແບບສີລະປະວັນນະກຳ ທີ່ມີຫົວຄິດປະດິດສ້າງ ຂອງປະຊາຊົນບັນດາເຜົ່າ ຜູ້ມີນ້ຳມະຈິດດຸໝັ່ນອອກແຮງງານບຸກເບີກ ທຳມະຊາດມາຮັບໃຊ້ຊີວິດ ແລະສັງຄົມບົນພື້ນຖານສິ່ງ ພົວພັນສັນລະເສີນ ແລະ ສະຫລອງຜົນສຳເລັດດ້ານກິດຈະກຳຕ່າງໆປາກົດຂື້ນຄື :

1. ພາສາ ວັນນະຄະດີ
2. ເຄື່ອງດົນຕີ ປະເພດຄິດ ສີຕ ເປົ່າ
3. ໝໍ່ຂັບ-ລຳ ແລະ ໝໍ່ກ່າວຄຳໄຫວ້ສິ່ງສັກສິດ ໃນກິດຈະກຳທາງດ້ານຮີດຄອງປະເພນີ ແລະ ສາດສະໜາພິທີ.

ລຳຜະຫຍາ ມະຫາໄຊ ໄດ້ຂະຫຍາຍທຳນອງທີ່ເນື້ອງນ້າວໄປຕາມຈຸດພິເສດ ສຳນຽງພາສາປາກເວົ້າຂອງ ຄົນທ້ອງຖິ່ນດັ່ງນັ້ນ ຈຶ່ງສາມາດຈຳແນກ ໄດ້ 4 ທຳນອງພື້ນຖານຄື :

1. ລຳມະຫາໄຊ ໂພວາ(ທຳນອງເດີມ)
2.ລຳມະຫາໄຊ ໂພນໜີ (ທຳນອງກາງ)
3. ລຳມະຫາໄຊເຢົາ (ມະຫາໄຊໜອງບົກ)
4. ລຳມະຫາໄຊທ່າ (ຫລື ລຳມະຫາໄຊ ເລາະຕາມແຄມຂອງ)

5. ການອະນຸລັກ ສົ່ງເສີມລຳຜະຫຍາມະຫາໄຊ :

ເພື່ອເປັນການອະນຸລັກຮັກສາສືບທອດ ແລະ ເສີມຂະຫຍາຍມູນເຊື້ອ ແລະ ມໍລະດົກ ສິລະປະລຳຜະຫຍາມະຫາໄຊ. ເລີ່ມມາແຕ່ການຊອກຫາຕົ້ນສະບັບ ກອນຜະຫຍາອັນເກົ່າແກ່ດັ່ງເດີມອັນເປັນຂອງປູ່ຍ່າຕາຍາຍ ຄູບາ ອາຈານ ໝໍລຳຜະຫຍາ ທັງອາວຸໂສ ແລະ ຣຸ່ນສານຸສິດ ທັງນີ້ກໍ່ເພື່ອເປັນການເຕົ້າໂຮມສະຕິປັນຍາ ຂອງບັນພະບຸລຸດ ຜູ້ທີ່ໄດ້ສ້າງຄຸນຄ່າທາງດ້ານຈິດໃຈໃຫ້ອຸດົມຄະຕິ ເຊັ່ນ : ຜະຫຍາສຸພາສິດ, ຄະຕິເຕືອນໃຈອົບຮົມສັ່ງສອນ ໃຫ້ມີນ້ຳໃຈຮັກປະເທດຊາດບ້ານເມືອງນອນ ແລະ ພູມລຳເນົາທີ່ປະດັບເອ້ ດ້ວຍທຳມະຊາດ ອັນອຸດົມສົມບູນ ແລະຈົບງາມ. ຈາກສະໄໝປູ່ຍ່າໄດ້ຕົກມາເຖິງເຊັ່ນລູກເຊັ່ນຫລານ ມີຄວາມເອກອ້າງທະນົງໃຈທີ່ໄດ້ຮັບຂອງ ຂັວນອັນລ້ຳຄ່ານັ້ນຄືພອນສະຫວັນ ແລະ ຜົນງານອັນດີເລີດ ຂອງຜູ້ດຸໝັ່ນອອກແຮງງານທາງດ້ານມັນສະໝອງ ທີ່ໄດ້ອຸທິດຜົນງານຂອງຕົນໄວ້ ເພື່ອອານາຄົດອັນຍາວໄກ.

ດັ່ງນັ້ນ, ການອະນຸລັກສົ່ງເສີມລຳຜະຫຍາ ອັນມີທັງກອນສັງວາດຄຳສອນຕ່າງໆ ທີ່ທາງຄະນະຄົ້ນຄ້ວາຈຶ່ງຈັດລຽງຂັ້ນຕອນ ຂອງກອນຜະຫຍາເຂົ້າເປັນລຳດັບ ເລີ່ມມາແຕ່ ຖາມ-ຕອບລະຫ່ວາງຊາຍຍິງ ລຳກ້ຽວກະສັບລວມທັງຜະຫຍາພາສິດ, ຜະຫຍາຕໍ່ແຍ, ເປັນວາດທຳນອງລຳຜະຫຍາມະຫາໄຊ ແລະ ຈ່າຍຜະຫຍາແກ້ກັນ.

- ອີງຕາມຕົ້ນສະບັບອ້ອຍຕ້ອຍ ຕອນຜະຫຍາມີຈຳນວນ 656 ຂໍ້ ຊຶ່ງແມ່ນອາຈານມະຫາຄຳມ່ອນ ພົງພິຈິດ (ໝໍລຳ) ເປັນຜູ້ເຕົ້າໂຮມຮັກສາໄວ້.

V. ກອນລຳ ຜະຫຍາ :

1. ຄວາມເປັນມາ ຄຳກອນຜະຫຍາ :

- ຄຳວ່າຜະຫຍາ ມີຄວາມໝາຍວ່າ ຄວາມສະຫລາດແຫລມຄົມ ຄຳສຸພາສິດທີ່ນິຍົມໃຊ້ກັນໃນໜັງສື ວັນນະຄະດີ ຄຳກອນ, ກອນລຳ, ຄຳເວົ້າໃນຊີວິດປະຈຳວັນ ຂົນຊາດລາວເຮົາບັນດາເຜົ່າສ່ວນໃຫຍ່. ອີງໃສ່ຄວາມໝາຍໃນເຄົ້າສັບມາຈາກພາສາສັນສະກິດວ່າ " ປະຊະຍາ " ແຕ່ໄດ້ຮັບການປະລິວັດ ມາເປັນພາສາລາວວ່າ " ຜະຫຍາ " ແຕ່ຄຳນີຍົມຄົນລາວມາ ແຕ່ດັ່ງເດີມວ່າ " ຜະຫຍາປັນຍາ ".

- <u>ປະການໜຶ່ງ</u>: ຄຳຜະຫຍາມີຢູ່ໃນຖ້ອຍຄຳຂອງສຳນວນ ພາສາລາວ ເກືອບໝົດທຸກຄົນ ເພາະຄຳຜະຫຍານີ້ ຄືກັບສິ່ງທີ່ສະແດງໃຫ້ເຫັນບຸກຄະລິລັກສະນະຂອງຄົນນັ້ນໆມີຄວາມສະຫລຽວສະຫລາດ ແຫລມຄົມທາງດ້ານສະຕິຜະຫຍາປັນຍາຫນ້ອຍຫລາຍປານໃດ ຄົນລາວເຮົາສະໄໝກ່ອນ ຖ້າຜູ້ໃດບໍ່ມີຄຳຜະຫຍາຍ່ອມສະແດງວ່າຄົນຜູ້ນັ້ນ ບໍ່ມີຄວາມສະຫລາດ ສະຫລຽວຂາດໄຫວພິບ ໃນການທີ່ຈະເວົ້າຈາໂຕ້ຕອບກັບຄົນອື່ນໆ. ຊຶ່ງສະທ້ອນໃຫ້ເຫັນເຖິງຜະຫຍາປັນຍາ ທີ່ຈະປະກອບອາຊີບໃຫ້ກ້າວສູ່ຄວາມມັ່ງຄັ່ງສົມບູນໄດ້.

- <u>ປະການທີສອງ</u> : ຄຳກອນຜະຫຍາບໍ່ພຽງແຕ່ຮູ້ກັນໃນເຊີງສົນທະນາ ແບບມ່ວນຊື່ນລະຫວ່າງບ່າວສາວເທົ່ານັ້ນ, ຍັງສະແດງເຖິງຄວາມສູງສົ່ງທາງດ້ານພາສາ ວັນນະກຳຂອງຊາດ ລວມຢູ່ໃນພາສາເຜົ່າຕ່າງໆ ທີ່ບໍ່ທັນປົນກັບພາສາບາລີພໍເທົ່າໃດ, ຄຳກອນຜະຫຍາ ສາມາດແຍກອອກເປັນໝວດໆໄດ້ດັ່ງນີ້ : 1. ໝວດກ້ຽວ ສາວ; 2. ໝວດພາສິດ; 3. ຄະຕິ ສອນໃຈ; 4. ໝວດຄຳສອນ ຫລື ແນະນຳ; 5. ໝວດຄຳຖາມ; 6. ໝວດຄຳຕະລົກ 7. ໝວດທຳມະຈາລິຍາ ແລະ ບັນຫາ(ຄຳທວາຍ).

2. ກອນລຳ ຜະຫຍາ :

ຄືການນຳເອົາ ຄຳຜະຫຍາ ມາຜູກເປັນຄຳກອນ ໂດຍແມ່ນໝໍລຳແຕ່ງຂຶ້ນ ເປັນກອນ ໄວ ຫານປະໂຫຍກສັ້ນໆ ຊຶ່ງແຕ່ງຂຶ້ນໃນທັນທີທັນໃດໃນນັ້ນ ລວມມີໝໍຈ່າຍຜະຫຍາ, ໝໍລຳກໍ່ນຳອອກມາລຳເປັນສຳນຽງສຽງ ທີ່ມ່ວນຊື່ນອອນຊອນ ສ່ວນໃຫ່ຍກໍ່ນິຍົມໃຊ້ ກ້ຽວພາລາສີ ກັນລະຫວ່າງໜຸ່ມໆ ສາວໆ ໂດຍການສວມບົດບາດຂອງການແອ່ວສາວ ເວົ້າສາວ ຊຶ່ງເປັນປະເພນີຂອງຄົນລາວລ້ານຊ້າງໃນອາດີດ ທີ່ມີຄວາມຈະເລີນຮຸ່ງເຮືອງທາງດ້ານສິລະປະວັນນະຄະດີ ທີ່ບັນທຶກໄວ້ໃນຄວາມຊົງຈຳໃນໝູ່ມະຫາຊົນຢ່າງກວ້າງຂວາງ.

- ຂັບ-ລຳ ທ້ອງຖິ່ນຕ່າງໆ ຂອງຊາວລາວ ແຕ່ເໜືອເຖິງໃຕ້ ຍັງມີກອນລຳຜະຫຍາ ສະເພາະ ເຊັ່ນລຳທ້ອງ ຖິ່ນມະຫາໄຊ ກໍ່ໄດ້ຜັນຂະຫຍາຍ ເນື້ອໃນເຂົ້າໃນລັກສະນະນິຍົມ ແບບລັກສະນະທ້ອງຖິ່ນ ໝໍລຳກໍ່ແຕ່ງບົດກອນ ພັນລະນາເຖິງຊີວະທັດທີ່ວທັດທຳມະຊາດ ແລະ ຊີວິດສັງຄົມ ເຊັ່ນ: ຫ້ວຍນ້ຳ, ລຳເຊ, ສາຍນ້ຳຍົມ, ນ້ຳອຸ ລາ-ເຊບັ້ງໄຟ ລວມທັງສິ່ງສວຍງາມໂດດເດັ່ນອື່ນໆ.

- ເນື້ອໃນກອນລຳຍັງມີ ລັກສະນະມູນເຊື້ອຕໍ່ສູ້ ສັນລະເສີນບັນພະບູລຸດ ຜູ້ກອບກູ້ຄວາມ ເປັນເອກະລາດແຫ່ງຊາດ ສືບຕໍ່ກັນມາຫລາຍຮູບຫລາຍວິທີຮອດສະໄໝການຕໍ່ສູ້ກູ້ຊາດປົດປ່ອຍປະຊາຊົນອອກຈາກແອກກົດຂີ່ ຂອງສັກດີນາ ແລະ ຈັກກະພັດຕ່າງດ້າວ ຄວາມອຶບາດສະກຳຈາກສົງຄາມ ແລະ ຄຳກອນສະດຸດີຊົມເຊີຍ ໝາກຜົນແຫ່ງໄຊຊະນະແຕ່ລະຂັ້ນ. ກອນລຳຜະຫຍາມະຫາໄຊ ກໍ່ມີເນື້ອໃນທີ່ເປັນອາວຸດອັນແຫລມຄົມກາວໂຈມຕີສັດຕູໂດຍກົງ. ພ້ອມນັ້ນກໍມີກອນປຸກລະດົມປະຊາຊົນທຸກເຜົ່າ ເຕົ້າໂຮມຄວາມສາມັກຄີສາງສັນພັນລະນາເຖິງຄວາມສະຫງົບສຸກ ແລະ ມະຫາໄຊຊະນະເຂົ້າມາທົດແທນຄວາມໝົດຫວັງໃນອາດີດໃຫ້ສູນສິ້ນໄປ.

VI. ລະດັບຂັ້ນຕອນ ດ້ານສິລະປະວິທີ ຂອງໝໍລຳຕອບຜະຫຍາ :

1-2. ປະເພດກອນຜະຫຍາ :

1. ກອນ ຂຶ້ນອໍ້ ຂຶ້ນຄາຍ ຄາລະວະ ຄູ ອາຈານ ແລະ ຜູ້ຟັງ.
2. ກອນ ຖາມຂ່າວ ລະຫວ່າງ ໝໍລຳຊາຍ-ຍິງ.
3. ກອນ ລຳກ້ຽວ ໜ່ຽວຂໍ ຕໍ່ແຍ.
4. ກອນ ອ່າວກະສັນ ຫລື ຂັນອາສາ.

5. ກອນ ຂໍຫມັ້ນ ຫລື ຂອດຮັກ.
6. ກອນ ສັ່ງລາ ລະຫວ່າງ ຫມໍລໍາ ຫມໍແຄນ.
7. ກອນ ລໍາສົ່ງ ອວຍພອນ ສະຖານທີ່ລໍາ ແລະ ຜູ້ຟັງລໍາ.

2-3. ພື້ນຖານອັນດັ່ງເດີມ ຫມໍລໍາຕອບຜະຫຍາມະຫາໄຊ :

ຫມໍລໍາຜະຫຍາມະຫາໄຊ ແມ່ນເອກະລັກທ້ອງຖິ່ນຂອງລໍາລາວ ທີ່ໄດ້ຮັບຄວາມນິຍົມຢ່າງກ້ວາງຂວາງ ໃນພື້ນຖານສັງຄົມລາວສະໄຫມບູຮານ. ຫມໍລໍາ ແມ່ນພາຫະນະທີ່ສໍາຄັນໃນການບັນທຶກພູມປັນຍາ, ຜະຫຍາ, ພາສິດຄໍາຄົມຕ່າງ ໆ ແລ້ວນໍາອອກເຜີຍແຜ່ ສູ່ສັງຄົມດ້ວຍການປະກອບສິລະປະຫມໍລໍາ ເຊັ່ນຕົວຢ່າງ :

ການກ້ຽວພາລາສີ ແວະໄວ້ ຕໍ່ແຍ ຈະສະແດງອອກເຖິງຄວາມຮັກ ທີ່ມີມາລະຍາດອາດເຊິງສົມທຽບອຸປະມາດ້ວຍກອນລໍາຜະຫຍາຫລື ຈ່າຍຜະຫຍາແກ້ກັນ ຂັ້ນຕອນຕໍ່ມາກໍມີການປະກອບຮູບວິທີ ຄື ຈ່າຍກອນກາບ, ຕື ກອນສິດ (ກອນໂວຫານ) ກາບເຊື້ອ ຊຶ່ງນິຍົມກັນໃນງານປະເພນີ ແລະ ງານບຸນຕ່າງໆ ເຊັ່ນ: ບຸນບັ້ງໄຟ, ບຸນເບີກ ພະແນກ, ບຸນພະເວດ ແລະ ງານບຸນອື່ນໆ.

ສະຖານທີ່ລໍາ ມີລັກສະນະງ່າຍດາຍ ໂດຍອີງໃສ່ເຮືອນໄຊຕົວຈິງ ເຊັ່ນ: ຕູບ, ຜາມ, ສາລາ ແລະ ສະຖານທີ່ ສາທາລະນະປະໂຫຍດຕ່າງໆ. ຕໍ່ມາກໍນິຍົມປຸກຮ້ານຫມໍລໍາ. ການສະແດງເທິງຮ້ານເລີ່ມມີການປະກອບຫມໍລໍາດ່ຽວ, ລໍາຄູ່, ລໍາພື້ນ, (ລໍາເລື່ອງ) ໂດຍໃຊ້ໂຄງສ້າງຂອງນິທານພື້ນເມືອງອະທິບາຍເນື້ອເລື່ອງ ດ້ວຍຄໍາກອນຜະຫຍາ ແລະ ກອນປະເພດຍິດຍາວເພື່ອຕອບສະຫນອງກັບການສະຫລອງງານບຸນຕັ້ງແຕ່ຫົວຄໍ່າຈົນຮອດແຈ້ງ.

3-4 ພິທີຂຶ້ນອໍ - ຄາຍຫມໍຂັບ - ລໍາ :

ເນື້ອໃນຄວາມຫມາຍຕົ້ນຕໍ ຂອງການຂຶ້ນອໍຂຶ້ນຄາຍ ແມ່ນສິລະປະການເຊື່ອຖື ຂອງຫມໍຂັບ-ລໍາໃນດ້ານເວດມົນຄາຖາ. ໂດຍແມ່ນຫມໍຂັບ-ລໍາໄດ້ຍົກສູງຖານະລະຫວ່າງຄູບາອາຈານ ແລະ ລູກສິດ ແລະ ຜູ້ຟັງນໍາອີກຊຶ່ງພວກເພິ່ນ ເຊື່ອວ່າ " ອໍລໍາ " ຫລື ຄາຖານິຍົມເປັນ ຄໍາອາລໍາພະບິດເບື້ອງຕົ້ນທີ່ຫມໍລໍາປະກອບພິທີ ຕາມສະພາບຂອງວັດຖຸ ແລະ ປັດໃຈຂອງ ຜູ້ເອົ້າວານເອົາຫມໍລໍາ ໄປລໍາໃນງານຂອງຕົນ ເຊັ່ນ: ເຫລົ້າແກ້ວ - ເຫລົ້າໄຫ, ໄຂ່ຫນ່ວຍ, ສົ້ມພົນແພວາ, ດອກໄມ້ ແລະ ທຽນ " ຂັນຫ້າ " ສອງຂັນ. ອັນເປັນເຄື່ອງແຕ່ງຄາຍຕົ້ນຕໍ. ຕໍ່ມາກໍມີແຖມເງິນ ແລະ ຂອງຂວັນໃສ່ຄາຍ ແລ້ວແຕ່ຜູ້ມີຄວາມປະສົງ ທຸ້ມທໍ່ຮັກແພງຫມໍລໍາ ທີ່ພາໃຫ້ເບີກບານມ່ວນຊື່ນ ແລະ ສ້າງຄະຕິຄໍາສອນ ຈາກເນື້ອໃນກອນລໍາ ແລະ ລໍາສຽງມ່ວນ.

ການຂໍພອນອະນຸຍາດຈາກຄຸນສິນ ຄຸນທໍາຕະຫລອດ ເຈົ້າພາບເຈົ້າພູມຜູ້ຮັກສາຄຸນທາດທັງສີ່ ເຊັ່ນ: ດິນ, ນໍ້າ, ໄຟ, ລົມ ແລະ ສິ່ງສັກສິດ ທັງຫລາຍໂດຍຄວາມເຊື່ອຫມັ້ນຍຶດຖືສິ່ງສັກສິດທີ່ຈະດົນບັນດານໃຫ້ມີພະລັງເຂັ້ມແຂງ ເອົາຊະນະຫມໍລໍາຝ່າຍຫນຶ່ງ ທີ່ເປັນຄູ່ໂຕ້ຕອບທາງກອນລໍາຄໍາຜະຫຍາ ບໍ່ໃຫ້ມີຄວາມຢ້ານກົວເວລາລໍາ, ບໍ່ໃຫ້ຄາຄ້າງ ແລະ ມີຄວາມກ້າຫານບໍ່ອໍາອາຍຂ້ອງຄາຄໍາຜະຫຍາໃດໆທັງສິ້ນ.

ການຂັ້ນອໍ່ຍໍຄາຍ ເປັນພິທີ ທີ່ຂາດບໍ່ໄດ້ສຳຫລັບໝໍຂັບ-ລຳ ອາດແຕກຕ່າງກັນໄປແດ່ແຕ່ລະ ປະເພດ ຂັບ-ລຳ ໃນຫລາຍທ້ອງຖິ່ນທີ່ຄູບາອາຈານ ໃຫ້ມີຫົວຄິດປະດິດສ້າງເປັນລັກສະນະປີກາຍຊຶ່ງເປັນເອກະລັກສີສັນຂອງທ້ອງຖິ່ນໃຜມັນທໍ່ນັ້ນ.

ຕົວຢ່າງ: ກອນລຳ ຂັ້ນອໍ່ຄາຖາ ນົກກໍລະອີກ ດັ່ງນີ້ :

☆	ບັດນີ້ ຮຽມຊິຮວາຍມົນອໍ່	ຄາຖາກໍລະອີກ
	ເສກໃສ່ໄມ້ລ່າວລົ້ມ	ລົມເປື້ອງປົ່ນໃບ
	ເສກໃສ່ນ້ຳ	ສະມຸດໄທຍຄົງຄາ
	ຈົນໃຫ້ນາຄາຍົກ	ມອບຕົວຖວາຍເກົ້າ
	ເສກໃສ່ເສົາສະເມນຟື້ງ	ຕີຟອງເຟືອນພາດ
	ມື້ນີ້ ອາຍສີເສກໃສ່ນ້ອງ	ໃຫ້ໂຕນເຕັ້ນແລ່ນນຳ.
☆	ຮຽມຂໍເຊີນຍັງອໍ່ ຄຸນນ້ຳໄຫລ	ຈົ່ງຄ່ອຍລັງຫລັ່ງລົງທ້ອນ
	ຈົ່ງຄ່ອຍໄຫລຫລັ່ງເລື້ອຍ	ຢ່າສູ່ຄ້າງຄາດຄວາມ
	ຂໍຈົ່ງໄຫລດັ່ງນ້ຳ	ຂໍອໍ່ປອງຮຽມຮຽມ ມານັ້ນ
	ຈົ່ງຢ່າມີ ຍາມຢຸດ	ຫລັ່ງລົງລິນເລື້ອຍ.
☆	ສາທຸເດີ ຄຸນທີ່ອາຈານເຈົ້າ	ຮຽມຮຽມຈົ່ງມາຊ່ວຍ
	ມື້ນີ້ ຮຽມຊິເຂົ້າຕໍ່ວ້າວ	ທົບສູ່ຕໍ່ຜູ້ສາວ
	ເຖິງຄາວຮຽມຄາຄ້າງ	ຄຸນອາຈານຈົ່ງນຳຊ່ວຍ
	ຢ່າໃຫ້ເສຍບາດເປື້ອງ	ຄາຍເຈົ້າແຕ່ງມາ.
☆	ຂໍອະນຸຍາດທ້ອນ	ນຳທ່ານຜູ້ເພິ່ນສອນ
	ຂໍອະນຸພອນທ້ອນ	ນຳນາຍເພິ່ນຜູ້ນັ່ງ
	ຢ່າໄດ້ຫົວໄດ່ວແຂ້ວ	ຂວັນຂ້ອຍຜູ້ບໍ່ເຄີຍ.
☆	ຂໍອະນຸຍາດ ນຳປ້າເຮືອນໃຕ້	ພອມກ່ອມຫລານນອນ
	ຂໍອະນຸພອນນຳຍ່ານາຍເຮືອນເໜືອ	ພອມກ່ອມໄກວຫລານນ້ອຍ
	ຢ່າສູ່ຟ້າວດ່າປ້ອຍ	ຕູຂ້ອຍຜູ້ນັ່ງລຳ.
☆	ຜູ້ຂ້າລຳຈັ່ງຊີ້	ບໍ່ໄດ້ສຽດໃຫ້ຊູ້ຜູ້ໃດເສຍ
	ຜູ້ຂ້າລຳຈັ່ງຊີ້	ບໍ່ໄດ້ສຽດໃຫ້ເມຍຜູ້ໃດຮ້າງ
	ຂອຍຊິລຳຂີດຂ້າງ	ພໍໃຫ້ສວ່າງເຫງົານອນ ໂອລະນໍ...

4. ຕອນ ຖາມຂ່າວ :

1-7 ໂອນໍ... ບຸນຫລາຍຈິ່ງມາພໍ້ ບຸນມີຈິ່ງມາຈອບ
ມາພົບນ້ອງໃນປາງ ມາພົບນາງໃນຫ້ອງ
ມາຈອບສາວພີ່ນ້ອງ ຄາວນີ້ບໍ່ຢາກໜີ

1-8 ຊາຕາມາຕົກໜີ້ ຈຳໜີອ້າຍຂໍຢູ່
ແຜ່ນດິນທີ່ໜາກາກບ້າ ແຜ່ນຟ້າທີ່ໜາກາກເບ້ຍ ຊິຂໍມ້ອນກະດູກດອມ.

3-9 ໂອນໍ...ນ້ອງແມ່ນລູກແຕ່ຫ້ອງ ກ້າຝ່າຍແດນໃດ
ຫລືວ່າລຸກແຕ່ຫ້ອງ ກຸມພີເມືອງນາກ ພຸ້ນບໍ
ຫລືວ່າລຸກແຕ່ຫ້ອງ ສະຫວັນຟ້າພາກພົມ
ບີດາມານດານ້ອງ ນາມໃດບອກອ້າຍແດ່
ຫລືວ່າອິນຢູ່ຟ້າ ເປັນເທວີ້າແຫ່ງພະນາງ ຊັ້ນບໍ.

4-10 ອ້າຍນີ້ ພໍແຕ່ຫລຽວເຫັນໜ້າ ນາງງາມຢາກຖາມຂ່າວ
ຖາມຂ່າວນ້ອງ ນ້ອຍນາດທະນີງສີ
ຍັງຄ່ອຍສຳລານສຸກ ເພື່ອບຸນກອມເກົ້າ
ບີດາມານດາເທວີ້າ ສອງອີງພໍ່ແມ່
ຍັງຄ່ອຍສຸກຢູ່ສ້າງ ສີນຊ້ອຍຄ່ອຍສຳລານ ຢູ່ບໍ.

5-11 ຖາມຂ່າວ ເຄຫັງຫ້ອງ ເຮືອນຊານບ້ານບ່ອນ
ຖາມຂ່າວເຮືອນພື້ນແປ້ນ ກະດານລວາດປູພຽງ
ທາງເທີງມຸງດິນຂໍ ໃສ່ກະແຈຈຳພົ້ນ
ຖາມຂ່າວກອນຂີ້ຂ້າວ ສີຍົວຍາວແປຜ່າງ
ຖາມຂ່າວຂາງສອດດັ້ງ ມຸງຫຍ້າຄ່ອຍຢູ່ດີ ບໍນໍ.

6-12 ຖາມຂ່າວໄຮ່ຝົນໜາ ຖາມຂ່າວນາຝົນກ້ວາງ
ຍັງຄ່ອຍສວຍລວຍເຂົ້າ ຮວງຍາວປ້ອງຖີ່ ບໍນໍ
ຍັງຄ່ອຍສຸກເຮື່ອເຂັ້ມ ເຫລືອງກຸ່ມທົ່ວທົ່ງນາ ຢູ່ບໍ.

7-13 ຖາມຂ່າວ ຕານສອງຕົ້ນ ແຄມເຮືອນ ແມ່ນ້ອງປູກ
ມີໃຜຂື້ນໂຫຍ້ມກົກ ມີໃຜຂື້ນໂຫຍ້ມກ້ານ ກິນນ້ຳກ່ອນ ພີ່ຊາຍ ແລ້ວບໍ

8-14 ພີ່ຂໍຖາມຂ່າວຕ່າງ ປະສີງສອດສອງຫູ
ຖາມຂ່າວໃບພູຄຳ ຫລີ່ນລີງແຄມຄາງ

ຖາມຂ່າວເຮີນວັງກ້ວາງ ທນອງສະພັງບ່ອນນ້ອງອາບ
ຍັງຄ່ອຍໃສສະອາດເຫລື້ອມ ຄືດ້ານດັ່ງເດີມ ບໍນໍ.

9-15 ຖາມຂ່າວຟືນຊາວທ້າ ປະສິ່ງສອດສອງສວຍ
ຖາມຂ່າວມວຍຜົມດໍາ ລູບມັນມວຍດື້ວ
ຖາມຂ່າວບົວບານບ້າງ ກາງສະພັງຕົ້ນປ່ຽວ
ຍັງຄ່ອຍໄຂກາບຊ້ອນ ຫອມກົ້ວກິ່ນລະອອງ ບໍ່ນໍ.

10-16 ຖາມຂ່າວອອ້ຍ ປ້ອງຖີ່ກິນຫວານ
ຖາມຂ່າວຕານ ຄຸມຕັດ ປາດຖວ່ວງກິນນ້ຳ
ຖາມຂ່າວຕອງປີກ້ວຍ ເຄືອຄໍາຕົ້ນຕ່ຳ
ຫລືວ່າມີຜູ້ປ້ຳ ຮານຮອນກິນຫມາກ
ຂໍໃຫ້ນ້ອງຕອບຖ້ອຍ ພະອວນອ້າຍແອ່ວຖາມ ແດ່ທ້ອນ.

11-17 ຖາມຂ່າວ ວັງແຫວນແກ້ວ ມະຫານິນລູກປະເສີດ
ຍັງຄ່ອຍຮຶ່ງງໃສ ດັ່ງພຸດໂທອົງລ້ຳ
ຍັງບໍ່ພາແສງເສົ້າ ມະນີໂຊຫນອງຫມົ່ນ ແທ້ບໍ
ຍັງຄ່ອຍໃສສ່ອງແຈ້ງ ຂາວເຫລື້ອມດັ່ງພະຈັນ ຢູ່ບໍ.

12-18 ຖາມຂ່າວງົວຄວາຍມ້າ ອາຊະໄນຕົວນ້ອງຂີ່
ກັບທັງເປັດໄກ່ຮ້ອງ ພະນາງປ້ອນເບື່ອຮໍາ
ຍັງບໍ່ຂໍາເຂືອກຮ້ອນ ຕຸ້ມຕອມເຖິງຖອງ
ຍັງຄ່ອຍນອງເນືອງນັນ ກ່ອນພະອວນຍາມເຊົ້າ.

13-19 ຖາມຂ່າວມ້ອນ ນາງກ່ອມດອມໄຫມ
ຖາມຂ່າວມອນໃບຄໍາ ນາງປູກຊອນແຄມຮົ້ວ
ຍັງຄ່ອຍສວຍລວຍຕົ້ນ ໃບມອນປົ່ງອ່ອນ
ຍາມນ້ອງໄຂແຂ່ດົ້ງ ເໝືອນໃສ່ມອນ.

14-20 ຖາມຂ່າວຖ້ວຍ ໄຕພາກສັນທີ
ກັບທັງພາສະນັງຫາ ເມື່ອຍາມແລງເຊົ້າ
ຖາມຂ່າວເງົາທຽມເນື້ອ ເຮືອແພທຽມທ່າ
ແພພູສາທໍ່ຕຸ້ມ ກາຍນ້ອງຄ່ອຍຢູ່ດີ ບໍນໍ.

15-21 ຖາມຂ່າວຕົ້ນດອກໄມ້ ແມ່ນ້ອງປູກແຄມສວນ
ກົກກ້ວຍຍອນແຄມຜາ ປາກະດອມແຄມບ້ານ

ຍັງຄ່ອຍບານຫອມກໍ້ວ ຈູມຈິບານແບ່ງ
ແມງຜູ້ບິນສອດແສ້ວ ຊິມກໍ້ວກໍ່ມລະອອງ ຢູ່ບໍ.

16-22 ຖາມຂ່າວກົກຂາມສົ້ມ ກົກຫມາກຍົມເທິງຫົວເຮືອນ
ແມ່ນ້ອງປູກຍັງຄ່ອຍຢູ່ດີບໍ
ຫລືວ່າມີຜູ້ຂຸດຮາກຊັ້ນ ມີຜູ້ຟັນຮາກແກ້ວ ຕາຍແລ້ວຕັ້ງແຕ່ດົນ.

17-23 ຖາມຂ່າວເຮືອນຫ້າຫ້ອງ ປະຕູທອງພ້ອມປ່ອງ
ພ້ອມທັງຂາງຂື່ຂ້າວ ສີຍິວດັ້ງກາຍແປ
ຝາກະດານຟື້ນ ເພດານມຸງມາດ
ຫວາຍຄາດຄະຫນ່ອງມ້າ ກໍຍັງຫມັ້ນດັ່ງເດີມ ບໍນໍ .

18-24 ຖາມຂ່າວບັນທົມຫ້ອງ ພະນາງນອນປິດທະເນັ່ງ
ກັບທັງຕຽງມ່ານກັ້ງ ຝາແອ້ມກ່ອມລະບຽງ
ກັບທັງຕຽງເມັງຕັ້ງ ຫມອນລາຍຊ້ອນເສື່ອ
ຍັງຄ່ອຍກ້ຽວກ່ອມຝັ້ນ ຂວັນນ້ອງເຂົ້າບ່ອນນອນ ບໍນໍ .

19-25 ພໍແຕ່ຫລຽວເຫັນຫນ້າ ຍາມດຽວຄິດແມ່ນວາດ
ອ້າຍຢາກຜັດແມ່ປ້າ ອ້າຍຢາກລາແມ່ລ້ຽງ
ອ້າຍຢາກຖຽງພໍ່ຄ້າ ມາຊ້ອນຢູ່ນຳ ນ້ອງເດ.

20-26 ຜີບໍ່ມັກມ່ວນຫລັ້ນ ຫມາກຣຸກ ຫມາກສະກາ
ຈິ່ງໄດ້ພັດມານດາ ດ່ວນມາເຖິງຜີ້
ຜີກໍຍິນດີດ້ວຍ ຄາລົມສຽງປາກ
ຫາກພໍໃຈມ່ວນຫລັ້ນ ນຳນ້ອງຈິ່ງຄ່ອຍມາ.

21-27 ອ້າຍບໍ່ຫລຽວເຫັນສົ້ມ ກຳເຖືອແລ່ນມາໃສ່
ກຳເຖືອມາຮອດແລ້ວ ຫມາກນາວສົ້ມພັດຢູ່ສູງ
ຄັນຊິບັກພັດບໍ່ມີຂວານ ຄັນຊິຮານພັດບໍ່ມີພ້າ
ມີແຕ່ມີດດວງກ້າ ມີແຕ່ພ້າຂີ້ຫລົ້ມ ຟັນໄດ້ກໍ່ບໍ່ຖອງ.

22-28 ນາງຫາກມີຜົວແລ້ວ ຫລືເປັນສາວໂດດດ່ຽວ
ຄັນວ່າພາກທີ່ຊ້ອນ ຮຽມຢາກໄຄ່ຄອຍດູ
ຄັນວ່າ ພໍໃຈມັກ ຮຽມໄຄ່ເຊີຍຊິມຊ້ອນ
ຮຽມຢາກບຸປ່າຜາງ ມ້າງປ່າຫວ້າ ມາຜີ້ເພື່ອປະສົງ ນ້ອງແລ້ວ.

24/VII
ห้ามจำหน่าย

23-29 ສັງມາງາມກະດັດເດ ທັງສອງກິ່ງໄມ້ທຶກ
ທັງສອງກົກໄມ້ພາງ ທັງສອງນາງພີ່ນ້ອງ
ອ້າຍປາກເກີດຮ່ວມທ້ອງ ສາຍໄສ້ແມ່ດຽວ ນ້ອງເດ.

24-31 ນ້ອງຜູ້ງາມງນັ້ນຍືມເພດໃຜມາຊາ ຍືມຊາໃຜມາຍ່າງ
ຫລືວ່ານ້ອງຫາກຍືມເພດນົກເຂົາ ຫລືວ່າຍືມເງົາຮົ່ມຊ້າງຄຽງນ້ອງຍ່າງມາ.

25-32 ເຈົ້າຜູ້ຄິງກິ່ມສ້ວຍ ສວຍລ້ວຍຄືທ້າຍເຮືອຊ່ວງ
ອ້າຍປາກຂໍຊ້ອນທ້າຍ ນຳນ້ອງຊ່ວຍພາຍ
ຄັນວ່ານ້ອງຂີ່ຫົວ ຊາຍຫມໍ່ລຳຂີ່ທ້າຍ
ຫລາຍຄືນພ້ອມກັນພາຍ ເຮືອນ້ອງຄືຊິມ່ອນ.

26-33 ນ້ອງຜູ້ງາມງນັ້ນ ແມ່ນນ້ອງເກີດວັນຫຍັງ
ຫລືນ້ອງເກີດວັນທິດ ແມ່ນ້ອງຈຶກເຂົ້າໃສ່ຂັນ
ຫລືນ້ອງເກີດວັນຈັນ ແມ່ນ້ອງຈຶກເຂົ້າໃສ່ບາດ
ພີ່ຊິໄປປາດນ້ຳ ໃຕ້ຮົ່ມໂພສີ
ລາງເທື່ອບຸນເຮົາມີ ຊິພົບກັນຢູ່ເມືອງຟ້າ.

27-34 ນ້ອງຜູ້ປີ້ວແລບສ້ວຍ ສີນາດນົງບານ
ຫລຽວເບິ່ງເກສາຜົມ ດັ່ງສາວສະຫວັນຍ້ອງ
ກວມພວງແກ້ມ ທັງສອງສີນາດ
ມວຍມຸ່ງຄິ້ວ ດຳກັຽວດັ່ງເທົາ
ຄິ້ວຄາດແກ້ວ ມະນີໂຊດແສງສາຍ
ມາລາແຖວ ກ່ອມກວມຕະເກືງເກົ້າ
ຫລິງໃສແທ້ ເຖິງພະນາງສີເກິ່ງ
ມີທັງເນື້ອຮາບກັຽງ ປຸ່ນດ້າມແຜ່ນທອງ.

28-35 ອ້າຍຂໍຂອດຄຳຮັກນ້ອງ ທີ່ເມັດເຂົ້າລວງແຄງໄດ້ບໍ
ອ້າຍຂໍຂອດຮັກນາງ ທີ່ເມັດແຕງລວງຕ່າວ
ຫລືທີ່ເມັດເຂົ້າຈ້າວ ຜ່າແປດລວງມົນ
ຫລືວ່າທີ່ເສັ້ນຜົມ ຜ່າກິນລວງຕັ້ງ.

29-36 ໃຫ້ນ້ອງອົດສາເວົ້າ ນຳຜູ້ບ່າວຕ່າງຕາ ແດ່ແມ
ໃຫ້ນ້ອງອົດສາຈາ ຕໍ່ພີ່ຊາຍຕ່າງບ້ານ
ໃຫ້ອົດສາຕ້ານຕໍ່ອ້າຍ ພໍໃຫ້ສ່ວາງເຫງົາ ແດ່ທ້ອນ.

30-37 ອິດທະແນມແດ່ອ້າຍໄດ້ນ້ອງ ກິນບໍ່ເປັນກໍຊິປ້ອນ
ນອນບໍ່ເປັນອ້າຍຊິກ່ອມ ຊິເອົາແຂນສອກຊ້ອານ
ຄຳນ້ອງຂື້ນໃສ່ຫມອນ.

31-38 ອິດສາເອົາຜີ່ເຂົ້າ ຜົມສິບຮ່ອມຮາວ
ອິດສາເອົາຜີ່ເຂົ້າ ຜົມຊາວຮ່ອມກໍ່
ອິດສາເອົາຜີ່ເຂົ້າ ຜົມເກົ້າຮ່ອມກະສວຍ ແດ່ທອ້ນ.

32-39 ຄັນບໍ່ສົມຍົດນ້ອງ ໃຫ້ຍຳໄວ້ຜ້ານກາງ
ຄັນບໍ່ສົມຍົດນາງ ໃຫ້ຍຳໄວ້ຜ້ານຕໍ່າ
ຄັນບໍ່ສົມຍົດແທ້ ຢ່າຜ້າວຍ່ຳລົງຕີນ ຫລາຍທ້ອນ.

33-40 ຫລືວ່າເອົາຜີ່ເຂົ້າທຮຸມຂ້າງ ຢ້ານແຕຣູບນາງຫມອງ
ຫລືວ່າເອົາຜີ່ເຂົ້າທຮຸມສອງ ຢ້ານແຕ່ຮູບນາງເສົ້າ
ຄັນຊິເອົາຜີ່ເຂົ້າທຮຸມເງົາ ຜັດຢ້ານຮູບນາງເກົ່າ ຊັ້ນບໍ.

34-41 ຜີ່ມີຮັກຮູບນ້ອງ ສະເຫມີດັ່ງຕາຕີນ
ຫາບໍ່ມີຄົນໃດ ປຣຸບປຸນປານໄດ້
ໃນທວງອ້າຍ ຢາກເອົາອວນເປັນເອກ
ລ້ານຫມື່ນຕື້ ຊິຍໍນ້ອງຜູດຮວ.

35-42 ໄດ້ຍິນເຜີ່ນຊ່າມາ ໄດ້ຍິນກາດຳເຜີ່ນຊາ່ເອົ້າ
ຊາວ່າໂພຊະນັງເຂົ້າ ເຕັ້ນເຍຍເລົ້າໃຫ່ຍ
ຜໍ່ແມ່ນ້ອງເຜີ່ນຫາກ ຕັດຂາດໄວ້ຂາຍຊື້ຊູ່ຍາມ
ອ້າຍບໍ່ມີເງິນຊື້ ຊິຍໍມີຂໍແຜ່
ຄັນວ່ານ້ອງບໍ່ເຫັນແກ່ ນາທີ່ງນ້ຳມັກຖ້ອມ ຊິເງີຍຫນ້າລ່ຳແຕ່ໂພມນ້ອງເອີຍ.

36-43 ຄືນເຂົາຊ່າວ່ານ້ອງ ເປັນຜູ້ປູກຜັກທຮຸມຫ້າວ
ກາງບ່ອນນອນ ບໍ່ເຫືອດບ່ອນຊັ້ນບໍ
ຂອງເກົ່າບໍ່ທັນກູ້ຊູ້ເກົ່າບໍ່ທັນໄລ ຜັດປູກໃຫ່ມເຕັ້ງລົງ
ປູກຜັກທຮຸມຍັງເຕັ້ນສວນ ຜັດປູກໃຫ່ມຊອນລົງຊ້ອນ.

37-44 ບໍ່ໄດ້ນ້ອງຊາດນີ້ ບຸນບໍ່ມີ ສົມພານອ້າຍຕ່ຳ
ຂໍອຳລາແຖທີວ ບອດເອົາບຸນຕັ້ງ
ຄ່ອຍບຳເພັນສິນທ້າ ພາວັນນາທຸກເຊົ້າຄໍ່າ
ອຸດທິສາຢາດນ້ຳ ໃຫ້ບຸນຄ້ຳຊາດຊິມາ.

38-45 ທັງຊາດນີ້ ຊາດໜ້າ ອ້າຍຊິບໍ່ຍິນຍອມ
ນ້ອງຕາຍເປັນຜັກຫອມ ເໜືອດແກງປາຢ້າງ
ອ້າຍຊິຕາຍເປັນໜໍ້ ນຳແກງຈີນໃຫ້ເປື່ອຍ
ບໍ່ເປັນເຂີຍສູ່ໄດ້ ຊິເອົານ້ອງລັກໜີ.

39-46 ຄັນນ້ອງເອົາຜົວຊ້ອນ ໄດ້ລູກໜຶ່ງອ້າຍຊິນຳໄປປ້ອງ
ໄດ້ລູກສອງ ອ້າຍຊິນຳໄປເວົ້າ
ໄດ້ລູກແປດລູກເກົ້າ ຫລື ຮາມຮ້າງໜ້າຍຜົວ
ອ້າຍຈັກພາຍຖົງຂື້ນ ເມືອເຮືອນໄປສູ່
ແມ່ນຊິລ້ຽງລູກເກົ່ານ້ອງ ຕົວອ້າຍກະບໍ່ແຫນງ
ຜູ້ເປັນລູກກົກ ມັນຊິເອີ້ນພໍ່ມ້າ
ຜູ້ເປັນລູກຫລ້າ ມັນເອີ້ນພໍ່ແທ້ ກໍເອົາແຕ່ ບຸນຊາຍນ້ອງເຮີຍ...

40-47 ຢ້ານແຕ່ນາດທະນ້ອງ ບໍ່ສອດສ່ອງ ສໍລະຍານ
ຕົວະຊາຍກິນແກງຫວານ ຂື່ມຂົມປານວ້ອນ
ຕົວະຊາຍໂຕນລົງນ້ຳ ກຸມປາກາງແກ່ງ
ແຫບໍ່ຊ້ອນ ບໍ່ຄອງໄດ້ ແຈ່ວແລງ.

41-48 ຈາກຊາດນີ້ ນ້ອງຊິຕາຍເປັນໄກ່ປ່າ ຊັ້ນບໍ
ອ້າຍຊິຕາຍເປັນແຮ້ວໜາກບົ້ງ ກາງໄວ້ຢູ່ທົ່ວຄົງ.

42-49 ຄັນນ້ອງຕາຍເປັນໄໝຄຳຝັ້ນ ພັນທະນັງກົ້ງກ່ອມ
ອ້າຍຊິຕາຍເປັນໄມ້ກຳຝັ້ນ ຝັ້ນເຂົ້າ ກອມກະສວຍ.

43-50 ຄັນນ້ອງຕາຍ ເປັນນົກແອ່ນແສ້ວ ບິນແສ້ວກາງຫາວ
ອ້າຍຊິຕາຍເປັນແຫລວຄໍຄຳ ແສ້ວລົງເອົານ້ອງ.

44-51 ຄັນນ້ອງຕາຍເປັນເຂົ້າ ກາງນາຂຽວອ່ອນ
ອ້າຍຊິຕາຍເປັນຄວາຍດ່ອນນ້ອຍ ນຳຫຍ້າຢູ່ທົ່ງນາ.

45-52 ຄັນນ້ອງຕາຍເປັນມ້າ ຕົວໃຫຍ່ສີລານ
ອ້າຍຊິຕາຍເປັນອານ ຂີ່ເທິງຫລັງມ້າ.

46-53 ຄັນນ້ອງຕາຍເປັນກ້າ ກາງນາຂຽວອ່ອນ
ອ້າຍຊິຕາຍເປັນນາໄຮ່ຫລົ້ງ ລົງກົ້ງກ່ອມກັນ.

47-54 ຄັນນ້ອງຕາຍເປັນນ້ອນ ກົ້ງກ່ອມຄອມໄໜ
ອ້າຍຊິຕາຍເປັນມອນໃບຂຽວ ກ່ອມກັນໃນດົ້ງ

48-55 ຄັນນ້ອງຕາຍເປັນບົ້ງ ປະສົງກ່ອມສາຂາ
ອ້າຍຊິຕາຍເປັນສັກກຸນາ ແສວກິນແມງບົ້ງ.

49-56 ຄັນນ້ອງຕາຍເປັນດົ້ງ ອ້າຍຊິຕາຍເປັນເປື້ອ ເພືອກັນຄືໄໜມກ່ອມ
ຄັນນ້ອງຕາຍເປັນໜອມ ອ້າຍຊິຕາຍເປັນຊີ້ນ ລົງໝໍ້ອ້ອມໃສ່ກັນ.

50-57 ຄັນນ້ອງຕາຍເປັນເປື້ອ ຊາຍໝໍລຳຊິເປັນໜ່າງ
ຄັນນ້ອງຕາຍເປັນຄ່າງ ອ້າຍຊິເປັນໜ້າໜ້ອງນຳປ້ອງຊູ່ງ່າຍາງ.

51-58 ຄັນນ້ອງຕາຍເປັນແກ້ວ ມະຫານິນລູກປະເສີດ
ອ້າຍຊິຕາຍເປັນຄຳ ຂອດເປັນແຫວນກ້ອຍ
ຄັນນ້ອງຕາຍເປັນອ້ອຍ ປ້ອງຖີ່ກິນຫວານ
ອ້າຍຊິຕາຍເປັນຕານຈຽວງາ ຖອກເຫລືອງອ້ອຍ.

52-59 ຢ້ານແຕ່ເສືອຫລັງນ້ອງ ມຸງມາຄືຮາກຝາງ
ຢ້ານແຕ່ເສືອຫລັງນາງ ມຸງມາຄືຮາກໄຜ່
ຢ້ານແຕ່ນ້ອງຕັດບໍ່ໄດ້ ຊິຕາຍຄ້າງຄອບເສືອ.

53-60 ບໍ່ໄດ້ນ້ອງເມືອເຮືອນ ແມ່ອ້າຍດ່າ
ບໍ່ໄດ້ນ້ອງເມືອຕ້ອນຍ່າ ແມ່ອ້າຍຕີ
ຢ້ານແຕ່ໜັງກັບແສ້ ຕໍ່ແຍກັນຢູ່
ຢ້ານແຕ່ຫົວກັບຄ້ອນ ຊິນອນກົ້ງກ່ອມກັນ.

54-61 ລົງເຮືອນມາ ແມ່ຊາຍກໍໄດ້ສັ່ງ
ຄືນຂາວກ່ຳ ແມ່ອ້າຍບໍ່ໃຫ້ຈາ
ຄືນຂາວກາ ແມ່ອ້າຍບໍ່ໃຫ້ເອົ້າ
ຄັນແມ່ນຜູ້ຈັ່ງເຈົ້າ ແມ່ອ້າຍພັດຈຳລົມ.

55-62 ຢາກໄດ້ນ້ອງ ບໍ່ແພ້ແລ້ວ
ພໍ່ແມ່ນ້ອງ ຫາກບໍ່ແບ່ງແນວມັນ
ພໍ່ແມ່ນາງ ຫາກບໍ່ປັນແນວເຂົ້າ
ເພິ່ນບໍ່ແບ່ງລູກເຕົ້າ ເມືອສືບເຮືອນຊາຍ.

56-63	ຢາກໄດ້ນ້ອງບໍ່ແພ້ແລ້ວ	ພໍ່ແມ່ນ້ອງເພິ່ນຫາກຄາດຄ່າຫລາຍ
	ຕາມາຍນາງ	ເພິ່ນຫາກຄາດຄ່າກ້ວາງ
		ຊ້າງສີ່ຄວາຍສາມ
	ຄັນພໍ່ແມ່ນາງ	ເພິ່ນຄາດຊ້າງສີ່ອ້າຍຊິຂໍຣອນລົງ
	ຕັ້ງແຕ່ສາມຕົວຊ້າງ	
	ຄັນເພິ່ນຄາດຊ້າງຫ້າ	ຂໍຣອນລົງຊ້າງສີ່
	ຄັນເພິ່ນຄາດຊ້າງເກົ້າ	ຂໍຣອນເຂົ້າແປດຕໍ່າລົງ
	ຄັນຕໍາລຶງຫນຶ່ງນັ້ນ	ອ້າຍຊິໄປຊື້ເຫລົ້າມາສູ່ລູງຕາ
	ຕໍາລຶງສອງມາ	ອ້າຍຊິໄປຊື້ປາມາສູ່ພີ່ນ້ອງ
	ຕໍາລຶງສາມນັ້ນ ອ້າຍຊິໄດ້ເອົາໄວ້	ເສຍຄ່າໃບນໍາຕ້ານ
		ປະຕິຍານຄັດເຄົ້າ
	ຖ້າວ່າ ອ້າຍຫນີຈາກນ້ອງ	ຈຶ່ງຫາເຖົ້າເລົ້ງເອົາ.
57-64	ເປັນຫຍັງນໍ	ນ້ອງຊິໄລອ້າຍຖິ້ມ
		ຄືຈອກກາງແຊງ
	ນ້ອງສັງໄລອ້າຍຖິ້ມ	ຄືຫມາກແຕງກາງໄຮ່
	ບາດຣໍາກິນຫມາກແລ້ວ	ຊິໄລຖິ້ມຕັ້ງແຕ່ເຄືອ.
58-65	ສັງມາຕົວະຍົວະອ້າຍ	ພໍໃຫ້ປອດໃຈກະສັນ
	ບາດວ່າພາຍລຸມມາ	ບໍ່ອາວເອົາຕາເຮືອ.
59-66	ຕົວອ້າຍທ້າວແຮ້ວຊ້າງ	ສັກຊຸມກາງດົງ
	ຕົວອ້າຍດໍານາໂພນ	ຊິຂາດເຂີນຕາຍແລ້ງ.
60-67	ນ້ອງຊິຕົວະໃຫ້ອ້າຍຫລົ້ມ	ຂີ່ເຮືອໄມ້ຍົມ
	ຕົວະໃຫ້ອ້າຍຈົມ	ຂີ່ເຮືອໄມ້ປ້າງ
	ຕົວະໃຫ້ອ້າຍຄ້າງ	ຄືດັ່ງເດືອນແຮມ ຊັ້ນບໍ.
61-68	ຊິມາຕົວະໃຫ້ຫລົ້ມ	ຕົກສະຫນົມວັງບອນ
		ກິນນໍ້າຫມົດມື້ເຮືອ
	ຕົວະໃຫ້ອ້າຍຫລົ້ມ	ກິນເກືອຫມົດມື້ຫມື່ນ
	ກິນຫມາກນາວ	ຫມົດມື້ລະຕົ້ນຄວາມຊິສົ້ມບໍ່ມີ.
62-69	ຄັນວ່າ ນ້ອງບໍ່ຕົວະອ້າຍ	ຄໍາປາກນ້ອງສັງມາເປັນຈາງໆ
	ຄັນວ່າ ນ້ອງບໍ່ພາງ	ຄໍາປາກນາງ ສັງມາເປັນລ່າງໆ
	ສັງມາບໍ່ຈັ່ນ	ຂັນກູເຂົ້າຮ່ວມຄອນ.

63-70 ເຫລືອແຮງອ້າຍ ຂຸດດິນຈີ່ປ້ານນ້ຳບໍ່ມາຍ
ເຫລືອແຮງກາຍ ຂຸດດິນຊາຍປ້ານນ້ຳບໍ່ຢູ່
ມືຫນຶ່ງຈົກມືຫນຶ່ງປ້ານ ທາງກ້ອງພັດຮົ່ວລົງ.

64-71 ເຫລືອແຮງອ້າຍ ທັງພາຍທັງຖໍ່
ມີແຕ່ໄມ້ຖໍ່ຈ້ຳ ມີແຕ່ນ້ຳຖໍ່ຍ້ອຍ ຜືນຜ້າຊຸ່ມເລີງ.

65-72 ບໍ່ມີທາງໄດ້ແລ້ວ ບໍ່ມີແນວຊິເຕື້ອງຕໍ່
ເຕື້ອງຕໍ່ດັ້ງ ດັ້ງພັດບໍ່ເຖິງແປ
ເຕື້ອງຕໍ່ນ້ອງ ນ້ອງພັດເລົ່າມີສອງ
ເຕື້ອງຕໍ່ເທົ່າໃນຫນອງ ພັດເກີດເປັນກໍໄດ້.

66-73 ອ້າຍບໍ່ມີໃສແລ້ວ ບໍ່ມີແນວຊິເຕື້ອງຕໍ່
ບໍ່ມີຫຍັງຊິຄ້າງ ຄືງອ້າຍທີ່ເມັດງາ
ລວງສ້ອນ ອ້າຍກໍຊິໄລ ລວງໄຊອ້າຍກໍຊິກູ້
ຊູ້ຢູ່ບ້ານ ໄດ້ຕັດຂາດ ສິນພຣງ
ອ້າຍໄດ້ຕັດຂາດກ້ຣງ ສິນພຣງກ້ຣງອ້ອຍຫ້ອຍ
ອ້າຍໄດ້ຕັດ ຫລ້ອນວ່າ ໂຮມຫ້ອນໃສ່ແຕ່ນາງ.

67-74 ຫນອງກະແສ ອ້າຍກໍໄດ້ໄປຜ້າຍ
ຫນອງຄາຍຄຳ ອ້າຍກໍໄດ້ລຽບລ່ຳ
ນ້ຳກ່ຳສົງຄາມ ອ້າຍກໍເລາະລຽບແລ້ວ ບໍ່ເຫັນແກ້ວຫມັ່ນນາງ
ຄັນຊິບັກຮູບຫີນ ຕາງນ້ອງກໍບໍ່ໄດ້
ຄັນຊິບັກຮູບໄມ້ ຕາງນ້ອງກໍບໍ່ຄື
ລາງເທື່ອຄືແຕ່ແກ້ມ ຫົວແຍ້ມພັດບໍ່ຄື.

68-75 ຄິດຮອດນ້ອງ ບາຍເອົາແວ່ນມາແຍງ
ຄືຊິເຫັນຈອມແພງ ຢູ່ໃນວົງແກ້ວ
ຄັນແມ່ນ ຕາເຫັນແລ້ວ ບາຍເອົາພັດບໍ່ຖືກ
ອ້າຍໄດ້ແຕ່ງບ້ວງຄ້ອງ ເປັນມື້ບໍ່ຖືກເງົາ
ເຫລືອໃຈແຄ້ນ ມະໂນຂ້ອນອີກສັ່ນ
ພິຢາກມາມອດມ້ຽນ ນຳແກ້ວຫນ່ອຍປະສົງ.

69-76 ນັບແຕ່ພັດພາກນ້ອງ ບໍ່ມີມື້ຊິສະບາຍ
ມື້ຫນຶ່ງເກີດເປັນເຈັບ ມື້ຫນຶ່ງເກີດເປັນໄຂ້
ມື້ຫນຶ່ງຊ້ຳພັດມີແຕ່ໄຫ້ ຫານ້ອງຢູ່ບໍ່ເຊົາ.

70-71 ເພິ່ນທັງຫລາຍໄຫ້ ນຳໄມ້ໄຜ່ຕາຍຂີ
ເພິ່ນທັງຫລາຍໄຫ້ ນຳຜີຜູ້ຕາຍຈາກ
ອ້າຍລຳບາກ ຄຶດຮອດຊູ້
ສິບມື້ກະບໍ່ຫາຍ ຊາວປາຍວັນນ້ຳຕາບໍ່ເຫືອດ
ຄືໄຟເຜົາເຄືອດຮ້ອນ ບໍ່ຄອງໄດ້ຢູ່ຍືນ ດອກແລ້ວ.

71-78 ອ້າຍນີ້ ເກີດມາຕັ້ງແຕ່ນ້ອຍ ບໍ່ເຄີຍພາຍນ້ຳຕາໄຫ້ ນຳລູກສາວໃຜຈັກເທື່ອ
ມາເຫັນນ້ອງຍ່າງກາຍ ມາເຫັນນາງຍ່າງຜ້າຍ ຊາຍແນມນຳບໍ່ເປີດຫນ່າຍ
ຕາລາຍງືມຍອດຄົ້ວ ມືຄວາມ້າວຈ່ອງບໍ່ເຖິງ.

72-79 ຄຶດຮອດນ້ອງ ອ້າຍໄດ້ໄປລັດຖ້າ
ສາລາຄຳ ບ່ອນນ້ຳຕ້ອງແທ່ນ
ຈັກແມ່ນນ້ອງແລ່ນຜ້າຍ ໄປກ້າຝ່າຍໃດ
ເຫັນແຕ່ນົກອີ່ອ້ຽງ ກີ້ກ່າງສັງກາ
ເຫັນແຕ່ກາເວົ້າວອນ ຮ່ຳໄຫ້ຫາຊູ້
ຄຶດວ່າບຸນຊູນ້ອງ ຟັງສຽງຜັດບໍ່ແມ່ນ
ຍິນແຕ່ແຈນງຮ້ອງ ມັນເວົ້າຕໍ່ກັນ
ມັນເວົ້າສຽງສັ້ນ ໆ ນຳກັນອ່ອນໆ
ວ່າຈອມແພງແຈ່ມເຈົ້າ ມີຊູ້ຕັ້ງແຕ່ດົນ.

73-80 ທູກແທ້ແລ້ວຍ້ອນຄະນິງເຖິງຊູ້ ຂອງແພງເພິ່ນຜູ້ອື່ນ
ຢ້ານແຕ່ຊີວິດສ້ຽງ ຕາຍຖິ້ມບໍ່ສິງ
ຊາດໃຫມ່ກັບຕ່າວຕັ້ງ ອິງພະບາດ ເມດໄຕໂຍ
ອ້າຍບໍ່ໄລຈອມແພງ ແຈ່ມສະຫມອນອິງນ້ອງ.

74-81 ຄຶດເຫັນບໍແຕ່ມື້ສອງເຮົາເວົ້າ ນຳກັນຢູ່ກ້ອງລ່າງ
ອ້າຍນຸ່ງເສື້ອກະບັງ ຍືນຕັ້ງຢູ່ຫວ່າງເສົາ
ອ້າຍໄດ້ເວົ້າຕໍ່ນ້ອງ ພັນຢາໃຫ້ອ້າຍແດ່
ຄັນນ້ອງທັດທ່ຽງແທ້ ຍັງຂັ້ນຕັ້ງແຕ່ງຕົງ
ນ້ອງຫາກຕົກລົງໄດ້ ປີນຂັ້ນໄດຂື້ນຊອນ
ບ່ອນນອນຄາໄລເອີຍ.

75-82 ເປັນແນວໃດນໍນ້ອງເອີຍ ສັດທາອ້າຍຊິບໍ່ຕ້ອງສາຍຄີກ ແດ່ບໍ
ຊີບໍ່ຍີກສາຍໂປງ ຊີບໍ່ທວງສາຍຄ້ອງ
ບ່າວຜີນ້ອງ ຊີບໍ່ຕ້ອງຕານາງ ແດ່ບໍ.

76-83 ເປັນສັງນ້ອງ ອຶງຕຶ້ງສັງບໍ່ປາກ
ຫລືວ່າຊູ້ນ້ອງຂຽນສະຫລາກ ໃສ່ໄມ້ກຳຖື
ຫລືວ່າຊູ້ນ້ອງຂຽນຫນັງສື ໃສ່ມືກຳໄວ້ ບໍ່ໃຫ້ປາກຄອມໃຜ.

77-84 ຄັນແມ່ນຊູ້ນ້ອງໃຊ້ຄ້ອນເຫລັກມາຂ້າ ອ້າຍຊິກົ້ງຫລັງຖ່ອງ
ຄັນແມ່ນຊູ້ນ້ອງໃຊ້ຄ້ອນທອງມາຂ້າ ອ້າຍຊິກົ້ງຫລັງໄວ້
ຄັນແມ່ນຊູ້ນ້ອງໃຊ້ຄ້ອນໄມ້ມາຂ້າ ອ້າຍຊິກົ້ງຫລັງເອົາ.

78-85 ເປັນຫຍັງແທ້ ບໍ່ຕໍ່ແຍຕອບອ້າຍແດ່
ຫລືວ່າແມ່ນ້ອງປ້ອນຊຸ້ນແຂ້ ຄາງກະແຕປາກບໍ່ລັ່ນ
ຫລືວ່າແມ່ນ້ອງປ້ອນຊຸ້ນຊ້າງ ຄາງກະຄ້າງປາກບໍ່ເປັນ
ອ້າຍນີ້ແມ່ຫາກປ້ອນຊຸ້ນເຫງັນ ປາກເປັນແຕ່ຍັງນ້ອຍ.

79-86 ເຫລືອແຮງອ້າຍ ໄດ້ຂໍຫມີກເຂົ້າຫລາມ
ເຫລືອແຮງອ້າຍ ໄດ້ຫາມຫມີກເຂົ້າຍ່າມ
ຖາມ ແລະ ເວົ້າຕໍ່ນ້ອງ ຈອນຊິແຈ້ງໄກ່ຂັນ.

80-87 ບໍ່ມັກໃຫ້ນ້ອງຈ່າຍຜະຫຍາຫລັ້ນ ບໍ່ເສຍສິນດອກຜູ້ໃຫ່ຍ
ເຫັນວ່າອ້າຍຜູ້ນ້ອຍ ປາຊິວກໍ່ຍັງໄຂ່
ບາດວ່າອ້າຍໃຫ່ຍແລ້ວ ເອົານ້ອງກໍ່ບໍ່ຂວງ ດອກນາ.

81-88 ຫລືວ່າ ເຊື້ອເຂົ້າກ່ຳ ແມ່ນ້ອງບໍ່ໃຫ້ປູກຮ່ອມນາ
ຄືນຂາວກາຄືຊາຍ ແມ່ນາງບໍ່ໃຫ້ເວົ້າ
ຜູ້ຊີ້ຮ້າຍຈັ່ງອ້າຍ ແມ່ນ້ອງບໍ່ໃຫ້ຈາ ຊັ້ນບໍ ?

82-89 ມັກບໍ່ມັກກໍໃຫ້ເວົ້າຫລັ້ນ ເຫງົ້ານອນຕາງໃຫ້ຊື່ນ
ຜົໄດ້ເປັນຜົນ້ອງ ເມື່ອຫນ້າຕື່ມສະຫາຍ ຊັ້ນດອກ.

83-90 ຄັນອ້າຍບໍ່ໄດ້ນ້ອງ ບໍ່ກັບຄືນໃຫ້ຊາວເມືອງເຂົາຊ່າ
ຄັນອ້າຍບໍ່ໄດ້ນ້ອງ ບໍ່ຄືນສູ່ຫ້ອງ ໃຫ້ຊາວບ້ານເຜີນເຫັນ.

84-91 ຫລືວ່າເຊື້ອຫມາກຟັກ ມັກຢູ່ໃນໃຈ ຊັ້ນບໍ
ຫລືວ່າເຊື້ອຫມາກໄຟ ລືງຊັ້ນໄດລືມຈ້ອຍ.

85-92	ເຊື້ອກ້ວຍຕີບ	ບໍ່ໃຫ້ປູກຮ່ວມສວນ ຊັ້ນບໍ
	ເຊື້ອກ້ວຍຍວນ	ບໍ່ໃຫ້ປູກຮ່ວມບ້ານ
	ເຊື້ອຂີ້ຄ້ານ	ບໍ່ໃຫ້ຮ່ວມຕາແສງ.
86-93	ສາວໃດບໍ່ເອົາອ້າຍ	ບໍ່ໄດ້ຜືອດຸໝັ້ນ
	ໄປເມືອໄຮ່	ອ້າຍຊິໄປກ່ອນກາ
	ໄປເມືອນາ	ອ້າຍຊິໄປກ່ອນໄກ່
	ອ້າຍເຊື້ອເລົ້າເຂົ້າໃຫ່ຍ	ຖ້ວມ ແລະ ແລ້ງມາອ້າຍແມ່ນບໍ່ມີ.
87-94	ສາວບໍ່ເອົາອ້າຍ	ບໍ່ໄດ້ຜືອຄືນທາມປ່າ
	ຊີ້ນຕອນໜາປາຄັບຂ້ອງ	ຈີ້ນເຫລືອລົ້ນອັ່ງຊາມ.
88-95	ຄັນອ້າຍ ບໍ່ໄດ້ນ້ອງ	ບໍ່ໝາຍວ່າຊິເອົາໃຜ
	ຄັນແມ່ນບໍ່ໄດ້ໄຖ	ຊິນຳເມືອເອົາງ້ອນ
	ບໍ່ໄດ້ຊ້ອນ	ເຮືອນນ້ອງແມ່ນບໍ່ຍອມ.
89-96	ຝົນຕົກມາຈ໊າກໆ	ໃຫ້ອ້າຍປາກດອມໃຜ
	ຝົນຕົກມາຈົ້ນໆ	ອ້າຍຊິໄປຢູ່ຊື້ນ
	ສາຍຄາເຮືອນ	ໄມ້ປ້ອງຫລໍ່ຜູ້ໃດເດ.
90-97	ທຸກເຫລືອຫລາຍ	ອ້າຍຈິ່ງມາຂໍຊື້ນ
	ແສນເຕັມທົນ	ອ້າຍຈິ່ງມາຂໍເພິ່ງ
	ໃຫ້ຂໍເພິ່ງຕະລ່າງເລົ້າ	ອ້າຍຂໍເຂົ້າຕະລ່າງເຮືອນ.
91-98	ເຫັນວ່າ ທຸກຫຍ້ອນໆ	ຂໍຊອນເຮືອນຢ້ານແຕ່ອ້າຍແກ່ມ
	ອ້າຍບໍ່ແກ່ມດອກເຂົ້າ	ສ່ວນວ່າຄວາມປາກເວົ້າ
		ຂໍແກມເຈົ້າຊູຄືນ.
92-99	ອ້າຍຢາກເມືອຢາມນ້ອງ	ບໍ່ມີເຮືອນເຊົາແວ
	ມີແຕ່ພໍ່ແມ່ນ້ອງ	ກິນເຂົ້າກໍເລົ່າອາຍ.
93-100	ນ້ຳອັງເລີກ	ບໍ່ຄອງໄດ້ຢູ່ລອຍ
	ຫອຍເມືອງນາງ	ບໍ່ຄອງໄດ້ຢູ່ຈູບ
	ຮູບຂີ້ຮ້າຍຈັ່ງອ້າຍ	ບໍ່ຄອງໄດ້ນັ່ງເມືອງ.

94-101	ຄັນແມ່ນສິມໃຈອ້າຍ ຂອດກັບອີກໄວ້ລ່ອງຄ້ອງ	ຊິເອົາແຂວນຄໍນຳເຮັດຄີປີ້ຝະລັ່ງ ຂອດກັບອອງໄວ້ໂລ່ງໂຄ້ງ ພັນນີ້ບໍ່ອີ່ມໃຈ.
95-102	ຊາດທີ່ແນວນາມແບ້ ມາຈອບພຸ່ມຫມາກເຂືອ ມາຈອບແຊງຫມາກພ້າວ ຫລອນພົບສາວພີ່ນ້ອງ	ປະສົງໃບບໍ່ເລືອກທີ່ ມາຈອບເຄືອຫມາກແຄ້ງ ມາຈອບຈາວມັນອ້ອນ ຄາວນີ້ບໍ່ຢາກຫນີ.
96-103	ເຈົ້າຜູ້ທີ່ງຄຳຝ້າຍ ເບັດໃສ່ໄມ້ແກ່ນສູງ ເບັດໃສ່ຂອນແດ່ນແດ້	ບໍ່ຫມາຍງອຍຕົ້ນໄມ້ຕ່ຳ ເບັດໃສ່ຍູງແກ່ນຫລ້ອນ ປາຍພົ້ວຈິ່ງຄ່ອຍງອຍ.
97-104	ໃຫ້ອ້າຍອົດສາລ້ຽງ ເຄືອນທົກຫຍ້າປົ່ງແລ້ວ	ຄວາຍໂຊ ຊາມມື້ມຮ່າ ຄວາຍຊິຫ້າວຮ່າບໍ່ກວນ ດອກນາ.
98-105	ໃຫ້ຄ່ອຍອົດສາເຍື້ອນ ເຂົ້າໃຫ່ມມາຮອດແລ້ວ	ກິນກອຍຕາງເຂົ້າໃຫມ່ ຊິວາງຖິ້ມກະຕ່າກອຍ.
99-106	ຕຶກຕາລີງລາຍປ້ຳ ຄັນງ່າໃດມັນຫາກອອກນອກຮົ້ວ	ຊິນຳຮອນຫມົດຊູ່ງ່າ ຊິຮອນເຂົ້າໃສ່ສວນ.
100-107	ຕຶກກະເທີນໄດ້ກຳຄໍແຂ້ ຕຶກກະເທີນໄດ້ກຳຄໍກະທ້າງ	ບໍ່ມີວາງໃຫ້ຫາງມັນຟາດ ບໍ່ວາງໃຫ້ແກ່ຜູ້ໃດ.
101-108	ຕຶກກະເທີນໄດ້ລີງລາຍມ້ອນ ບໍ່ເປັນຊ້າຜ້າອ້ອມ	ບໍ່ເປັນບຸງໃຫ້ມັນໄດ້ເປັນຕ່າ ໃຫ້ເປັນຂ້ອງໃສ່ປາ.
102-109	ໃຫ້ນ້ອງ ຍະປ່ອງໄຊ ໃຫ້ນ້ອງຄອບ ພໍ່ບ້ານ	ໃຫ້ນ້ອງໄຂປ່ອງລອບ ເອົາອ້າຍເຂົ້າຢູ່ນຳ.
103-110	ອ້າຍນີ້ຕັ້ງຕໍ່ໄອ ຄັນໄດ້ຕັ້ງຕໍ່ເຈົ້າ ບໍ່ລືມໄລແພງສີ ຢ້ານແຕ່ທາງຫລັງນ້ອງ ໃຫ້ນ້ອງມາຍຂອດກ້ຽວ	ບໍ່ໄດ້ຄືວນ້ຳເຕົ້າ ບໍ່ໄດ້ປາກດອມໃຜ ແກ່ຜູ້ໃດຫມາຍຊ້ອນ ແສນເຄືອຮ້ອຍຮອບ ມາຫນ່ຽວຫມັ້ນຕໍ່ຊາຍ.

24/VN
ຫ້າມຈຳໜ່າຍ

103-111 ຄັນຕົມຕິດເອົາຕົມລ້າງ   ແຖມລົງໃຫ້ມັນຫມື່ນ
ຄັນນ້ຳຕິດເອົານ້ຳລ້າງ   ແຖມຊ້ຳໃຫ້ຕື່ມງາມ.

104-112 ແນວວ່າເປັນເສືອແລ້ວ   ລາຍບໍ່ລາຍເຂົາກໍ່ຕູ່
ແຫນງທ່ ເອົາຫມີ້ນຫມີ້   ມາແຕ້ມໃຫ້ຕື່ມລາຍ.

105-113 ນ້ອງຜູ້ໄປທາງຫນ້າ   ຫມາຍທີ່ນາໃຫ້ອ້າຍແນ່
ໃຫ້ນ້ອງຫມາຍກ້າວງງ   ນາເຊື້ອອ້າຍຊິຖາງ.

106-114 ອ້າຍນີ້ປຽບດັ່ງຄວາຍບັກດຳນ້ອຍ   ຫລົງຮອຍພາກອີແມ່
ນ້ອງບໍ່ຫລົກຫຍ້າປ້ອນ ນ້ອງບໍ່ຖອນຫຍ້າລ້ຽງ   ຄວາຍນ້ອຍສ່ວນຊິຕາຍ.

107-115 ຊາດທີ່ຄວາຍບັກເລເຖົ້າ ເຂົາຈຶ່ງຕົກລົງເອົາ   ໄປຂາຍທາງເມືອງລ່າງ
ສິບສະຕາງ ກໍ່ບໍ່ມີຜູ້ຊື້   ເລີຍໄປໃຫ້ບ່າວນາ.

108-116 ອ້າຍໄດ້ວຽນຫານ້ອງ   ຄືຄວາຍວຽນແລ່ງ
ແສນຊິວຽນແຄ້ວງງ   ຫາທາງເຂົ້າກໍບໍ່ມີ.

109-117 ແຕ່ອ້າຍວຽນຫານ້ອງ ຫນອງບຶກກໍຈືນແຫ້ງ ຫນອງແວງກໍຈືນຂຸ່ນ
ບໍ່ໄດ້ຂຸ່ນແຕ່ຫນອງບໍ່ໄດ້ຟອງແຕ່ນ້ຳ   ຕົວອ້າຍກໍຫມົ່ນຫມອງ.

110-118 ຢາກໄດ້ນ້ອງ ຄ່າດອງແພງ   ອ້າຍບໍ່ມີເງິນແຕ່ງ
ເອົາເງິນນ້ອງແຕ່ງນ້ອງ   ບາດອ້າຍໄປຄ້ອງຊ້າງ
ບາດນາງມີລູກນ້ອຍ   ຫາໄດ້ຈຶ່ງຄ່ອຍແຫນ.

111-119 ຄັນແມ່ນສົມກັນແລ້ວ   ບໍ່ກິນດອງກໍຕາມຊ່າງ
ພ້ອມກັນຈັບໄກ່ກ້າ   ພ້ອມກັນຂ້າໄກ່ນ້ອຍ
ແລ້ວໄປເຊີນຜູ້ເຖົ້າມາເວົ້າ   ໃຫ້ຜີແລ້ວຮີດຜີ.

112-120 ຄັນແມ່ນອ້າຍໄດ້ນ້ອງສາມມື້ຊິບໍ່ໃຫ້ລົງເຮືອນ   ສາມເດືອນບໍ່ໃຫ້ລົງລ່າງ
ໃຫ້ນ້ອງນຸ່ງສິ້ນຂັ້ນ   ພັນຢາຢູ່ຕີນບ່ອນ
ເຖິງຍາມນອນອ້າຍຊິຊວນ   ເອົານ້ອງເຂົ້າໃສ່ຫມອນ.

113-121 ເປັນຫຍັງນ້ອງ   ສັ່ງມາຫລ່າຄືຫມາກເຜືອງ
ເປັນສັງນ້ອງ   ຈຶ່ງມາເຫລືອງກ້ວຍບົ່ມ
ຫລືນ້ອງໄຂ້ບົ່ມຊູ້   ໃຜຊິຮູ້ຮ້ອນປີວ.

114-122 ສາວຊັງອ້າຍ ຍາມຊາຍຍ້າຍຕັ້ງ
ສາວບັງຣຽງຜ້າໂຕ້ ເຖືອນທ້າຊິຜ່າລຶງ.

115-123 ຄວາຍກັດຫຍ້າ ສາມວັນຫາກຊິປົ່ງ
ຜູ້ສາວຄຣຸດໃຫ້ຊູ້ ສາມມື້ຫາກຊິເຫີຍ.

116-124 ສາວບໍ່ເອົາອ້າຍແທ້ ຫມົດຕໍ່ແຍຈຳທ່າງ
ບໍ່ໄດ້ທໍ່ ຂີ້ຊ້າງ ບໍານ້ອມມັດສະການ ນ້ອງແລ້ວ.

117-125 ຫມົດຄວາມວາຈາຕ້ານ ຄືນເຮືອນຊານໂດດດ່ຽວ.
ນອນຢູ່ປ່ຽວຂຶດຂີ່ຄູ້ ເອົາຊ້າງບຣຸດຝາ
ຝາບໍ່ມາບຣຸດໃຫ້ ຊິທຳລຶງກ້ອງລ່າງ
ຄັນກ້ອງລ່າງບໍ່ພ້ອມ ຊິຍໍ່ຂຶ້ນໃສ່ເຊຍ.

118-126 ເຫັນວ່າຄຳຂີ້ຫລີ້ ຢ່າຟ້າວຖໍ່ເຮືອກາຍ
ເຫັນວ່າຄຳຄອຍລອຍ ຢ່າຟ້າວພາຍເຮືອເວັ້ນ
ບາດວ່າ ເຮືອນາງຫລົ້ມ ດຳຄອຍລອຍຍັງຊິໄດ້ຍູ້ຊ່ອຍ
ຄັນບໍ່ໄດ້ຊ່ອຍຍູ້ ຍັງຊິໄດ້ຊ່ວຍພາຍ.

119-127 ອ້າຍນີ້ ຫມົດຜະຫຍາຄາຖາອໍ້ ຄວາມເຄັນຊິໄດ້ເປົ່ງ
ຫມົດຜິດບັ້ງນໍ້າອ້ອຍ ຫມາກນາວນ້ອຍຊິປ່ອຍນໍາ
ຊາດທີ່ເປັນຍິງນີ້ ນາມສະຕີເພດອ່ອນ
ລວມແປດຫມື່ນຄຳສອນ ອີງພະພຸດທະເຈົ້າ
ຖືເປັນເຄົ້າແມ່ນົມ

ຍິງໃຫ້ສົມທີ່ແມ້ງ ເຜີນບັ້ນແຕ່ງສະເຫນີຊາຍ
ຢ່າຫນ່າຍແຫນງຫນີລໍາ ຈ່າຍຜະຫຍາຖາມກ້ຽວ
ສົມພໍຄວນເຄັນຂ້ຽວ ເກືອຂີ້ທາບໍ່ຈ່າງຫລ່າ
ຟັງຜະຫຍາຍອດແຍ້ ຍິງຊິຕ້ານຕອບຊາຍ.

ຕົວຢ່າງ: ກອນລຳຜະຫຍາ ຖາມ-ຕອບຊາຍ-ຍິງ

120-128 ໂອນໍ... ໃຈບໍ່ໄສດາດັ້ງ ຄືນຊາຍໃຈບໍ່ຖີ່
ຄືດັ່ງນົກຈອກຟ້າ ປະມາໄວ້ໄຕ່ຕອງ
ຕັ້ງແຕ່ຄາວນີ້ເວົ້າ ອ້າຍຂັນລົມທັບຄາຍ ອ້າຍຂັນຕາຍຮ່ອມເຮ່ວ
ບາດຮ່າໄຟລຸກກົ້ວ ບາດຮ່າຫລົວລຸກກຸ້ມ
ບາດຊີ້ດິນຫຸ້ມໜ້າ ສັງວາງນ້ອງຢູ່ຜູ້ດຽວ.

121-129 ຄິດເຫັນບໍ່ຕັ້ງແຕ່ຄາວ ໄຟບໍ່ທັນມາໃກ້ຮວງຮັງທັງສອງກ່າວ
ວ່າຊິຕາຍມອດມ້ຽນ ດອມແກ້ວລູກຕົນ
ຍາມເມື່ອໄຟລາມໄໝ້ ໃຜເດບິນອອກກ່ອນ
ໂຕຜົວໂດດກ່ອນແທ້ ສັງມາປິ້ນຕ່າວວ່າເມຍ
ສັດຈະ ເປັນແນວນັ້ນ ຄືນຊາຍໃຈຖ່ອຍ
ປະໃຫ້ເມຍພ້ອມລູກນ້ອຍ ຕາຍຄາງແຄ່ຮັງ.

122-130 ຄັນບໍ່ມັກ ເຊີນຊາຍໜີເມືອທ້ອນ ໜີເມືອນອນເສຍກ່ອນ
ຕັດສິນໃຈເປັນລ້ອນຈ້ອນ ນາງຄອຍຕ້ອນຕອບຊາຍ
ຄັນອ້າຍຄືໃນເລື່ອງ ຜົວເມຍນົກກະຈອກ
ວ່າບໍ່ເອົາດອກອ້າຍ ຊິເປັນຍິງຢູ່ລ້າຍອມຕາຍມ້ອນໃຫ້ສ່ວງເວ່ນ.

123-131 ຍ່າມາຕີຖະແຫລງຫລັ້ນ ຖະແຫລງກິນແກງໄກ່
ແນວຕັບໄຕເຜີນຫ້າມ ຍ່າມາລົ້ມຫລ່ຽມຄອງ.

124-132 ຮຽມນີ້ ເຈັບອີກປານໄຟໄໝ້ ເຈັບໃຈປານຟ້າຜ່າ
ປຽບດັ່ງຟ້າຜ່າໄມ້ ເດືອນຫ້າກະບໍ່ປານ.

125-133 ໃຫ້ອ້າຍ ເມືອດີທ້ອນ ຄືນເມືອສາກ່ອນ
ໃຫ້ອ້າຍເມືອຈີບຜ້າ ຝົນຫລວງໄວ້ທີ່ມຊ້າງ
ໃຫ້ອ້າຍເມືອຈີບຜ້າ ຝົນກ້ວາງໄວ້ທີ່ມເມຍ ອ້າຍທ້ອນ !

126-134 ຮຽມບໍ່ໝາຍເປັນນ້ອຍ ເມຍປາຍໃຫ້ຄືນໜ່າຍ
ຄັນພໍ່ຮ້າງພໍ່ໝ້າຍ ນາງຍັງກ້າຕໍ່ລອງ.

127-135 ເກີດເປັນຍິງຊາດນີ້ ບໍ່ມີເຊື້ອຊາຍລອງ
ເປັນຍ້ອນ ດວງຊາຕານາງ ຫລືບາບກຳນຳກັ້ຮວ
ຈຶ່ງໄດ້ຕາຍດຮວແລ້ວ ໃນຮັງດອມລູກອ່ອນ
ຍາມເມື່ອໄຟລຸກຮ້ອນ ເຜົາໄຫມ້ມຸ່ນຜີງ.

128-136 ຊາຍເອີຍ ບ້ານຂອງນາງຢູ່ຊື້ງ ແຖວບ້ານທົ່ງເມືອງຫລວງ
ຍີມມະນານາມສາຍ ຍ່ານຍາວກະແສນ້ຳ
ງາມຫນ່ອຍພູຜາຂັ້ນ ລຽນກັນຊ້ອນເປັນລັ່ນ
ຫັນຕາແລລ່ຳໄຕ້ ຕຳຕ້ອງຕາຫລີ້ງເຊ.

129-137 ບຸບຜຸມມພາກພື້ນ ເມືອງມີ້ງມະຫາໄຊ
ຖິ່ນຜູ້ໄທຊຸມແຊງ ແຫລ່ງເຜົ່າຊົນໂຮມເຕົ້າ
ເຜົ່າບາລູມະກອງພ້ອມ ຢູ່ດອມກັນອີກຫລາຍເຜົ່າ
ສາມັກຄີເປັນແກ່ນເຫວົ້າ ສະເຫນີເຜີ້ງຢູ່ຮວງ.

130-138 ໃນຫ້ອງຖິ່ນ ທີ່ຫ້ອງ ຮ້ອຍຫມູ່ດວງມາລາ
ຊົນພະນາດົ້ງດອນ ເຫມືອດຂະຍອມຍາມແລ້ງ
ຄືດັ່ງພົງແພງເຊື້ອ ເຄືອຕະກຸນອົງອາດ
ອະນຸວົງລາດເຈົ້າ ມາເນົາຈົ້ວຫ່າລະວັງ.

131-139 ປະຫວັດຕັ້ງແຕ່ຄັ້ງ 200 ກ່ວາປາຍປີ
ຜູ້ເຜີນຫວັງມີໄຊ ເພື່ອປະຊາຊົນເຊື້ອ
ຍັງຄູຫາເຮືອນຖ້ຳ ເປັນຄຳລືບອກເລົ່າ
ອານຸລາດຊະເຈົ້າ ບໍ່ຍອມຂື້ນແກຕາງແດນ.

132-140 ນີ້ຄືຖິ່ນເຂດແຄ້ວນ ນາງຂໍລ່າວໄຂຂານ
ຄືບຖວນການເປັນມາ ອັງອລາຂັງໄວ້
ເຊບັ້ງໄຟ ສາຍນ້ຳ ບໍ່ຂວາງທາງທຽວທ່ອງ
ຜູ້ຫມາຍປ້ອງຄືຮ່ອງນ້ອຍ
ພໍດີໂຢ້ຢວາງຂາແກ້ມ ປາລາມະຫາໄຊງາມໆເອີຍ...

133-141(ຊາຍ) ນ້ອງເອີຍ ທາງໄປໄຮ່ ນ້ອງຢ່າຟ້າວແຝດຫນາມຄາ
ທາງໄປນານ້ອງຢ່າຟ້າວ ແຝດຫນາມໂຜ່
ທາງເຂົ້າບ້ານ ນ້ອງຢ່າຟ້າວໄຂວຫີນຕັນ.

134-142	ມັນຊິບິດເບືອນລ້າວ	ຜະນຽງໄຖໄມ້ເໝືອດແອ້
	ອ້າຍຊິຕາຍເປັນຂວານແງ່ນ້ອຍ	ນ້ຳແກ້ທຸກບ່ອນເບືອນ
	ຜີນຕຶກຍັງຮູ້ເອື້ອນ	ນອນໝົດຄືນຍັງຮູ້ຕື່ນ
	ບາດອ້າຍຄິດຮອດນ້ອງ	ບໍ່ມີເອື້ອນອິ່ມເປັນ.
135-143	ນອນລັບໄປຝັນເຫັນໜ້າ	ມືນຕາມາເຫັນຜູ້ອື່ນ
	ພີຢາກລັບຢູ່ເລື້ອຍ	ໃຫ້ເຫັນໜ້ານ້ອງຊູ່ຍາມ.
136-144	ຄວາມປາກບໍ່ໄດ້ທາ	ຄວາມຜະຫຍາບໍ່ໄດ້ຊື້
	ຄວາມໃດຄື	ອ້າຍຫາໃສ່
	ລີ້ນບໍ່ມີກະດູກຂັ້ນ	ຂັ້ນຂໍ້ຕໍ່ຜະຫຍາ.
137-145	ກະບອງກິດຈຳຂໍ້	ຂໍໃຫ້ຊາຍເມືອນອນກ່ອນ
	ຄັນວ່າມຸງມາດໜ້າ	ຫລາຍມື້ຈຶ່ງຄ່ອຍມາ.
138-146	ກົກຫມາກມີ້	ແມ່ນ້ອງແຝດໜາມຕັນ
	ກົກຫມາກຫັນ	ແມ່ນ້ອງແຝດໜາມໄອ້
	ແພງໄວ້ມອບໃຫ້ອ້າຍ	ຊາຍຫລ້າຜູ້ປະສົງ.
139-147	ນ້ອງຍັງມີສະຕິໝັ້ນ	ສະເໜີມັນເຄືອເກົ່າ
	ຊູ້ກໍ່ແມ່ນເຈົ້າ	ຜົວກໍ່ແມ່ນເຈົ້າ
		ບໍ່ຫວັງເຕື້ອງຕໍ່ຜູ້ໃດ ດອກນາ !
140-148	ຄັນນ້ອງບໍ່ໄດ້ອ້າຍ	ຊິໄປບວດເປັນຊີ
	ຕາຍໄປເປັນນາງນີ	ຢູ່ປ່າໄພພະນອມໄມ້.
141-149	ນ້ອງນີ້ ຜັດແຕ່ເປັນຍິງຂື້ນ	ບໍ່ມີເຄືອຊິກ້ຽວຝຸ່ມ
	ຜັດແຕ່ເປັນຝຸ່ມໄມ້	ເຄືອຊິກ້ຽວກະບໍ່ມີ.
142-150	ລືມບິດນ້ອງບໍ່ໄດ້ຖາມຂັ້ນ	ລືມອັນນ້ອງບໍ່ໄດ້ຖາມຂ່າວ
	ນ້ອງຢາກຖາມຂ່າວນ້ຳ	ຖາມຂ່າວທາງປາ
	ຖາມຂ່າວນາ	ຖາມຂ່າວທາງເຂົ້າ
	ຖາມຂ່າວເຈົ້າ	ມີເມຍແລ້ວຫລືບໍ່
	ຫລືວ່າມີແຕ່ຊູ້	ເມຍຊ້ອນຜັດບໍ່ມີ.

143-151 ຖາມຂ່າວອ້າຍ   ຖາມຂ່າວເຄືອມັນລາຍ
ຖາມຂ່າວສາຍມັນອ້ອນ   ໂພນຖຽງນາແມ່ອ້າຍປູກ
ຍັງຄ່ອຍຢູ່ດີບໍ
ຫລືວ່າ ມີຜູ້ໄງ້ຮາກແກ້ວ   ໄປແລ້ວກ່ອນຮີ່ອວນ.

144-152 ນ້ອງນີ້ ປອດລ້ອຍຊ້ອຍ   ສະເໜີໄຂ່ໃນຮັງ
ຍັງບໍ່ມີຫຍັງຕິດ   ປອດໄສປານແກ້ວ
ບໍ່ມີແນວຊິມາຄ້າງ   ຄາຄີງກ້ຽງອ່ອຍຮ່ອຍ
ຮັກກໍ່ແມ່ນອ້າຍ   ຊູ້ກໍ່ແມ່ນອ້າຍ
ຜົວກໍ່ແມ່ນອ້າຍ   ບໍ່ຫວັງເຕື້ອງຕໍ່ໃຜ.

145-153(ຊາຍ) ຫຍາບຍ່າງເຄືອຍາງເອີຍ   ວ່າບໍ່ມີເຄືອກ້ຽວ
ສັງມາເປັນຍາບຍ່າງ
ລາມແຕ່ກົກເຖິງງ່າເຄົ້າ   ລາມແຕ່ເຫງົ້າເຖິງງ່າຊີ້
ເຄືອຊິຝັ້ນວ່າບໍ່ມີ !

146-154 ຢ້ານແຕ່ປອດລ້ອຍຊ້ອຍ   ຊິຄືດັ່ງໃບບອນ
ໃນບ່ອນນອນສາວນາງມີ   ຕັ້ງແຕ່ກອງຜ້າອ້ອມ
ສອງຝ່າຍລ້ອມ   ມີແຕ່ຫມາກຕ່ຳແຍ.

147-155 ຄັນອ້າຍມີເມຍແລ້ວ ອ້າຍຊິຂັດຄີຂ້ອງ ອອງມາຄືກະຕ່າ
ຊິຂັດມາຄືດ້າມພ້າ   ຕາຫລ້າຫາກຊິເຫັນ.

148-156 ຄັນອ້າຍມີເມຍແລ້ວ   ບໍ່ລົງເຮືອນໃຫ້ຫມາເຫົ່າ
ອ້າຍຊິນັ່ງເຝົ້າບ້ານ   ຕາງໄພຫຍ້າໃສ່ເຮືອນ.

149-157 ດວງຊາຕານ້ອງຂື້ນ   ຂາງເຮືອນນ້ອງກ່ອງ
ດວງຊາຕານ້ອງຂື້ນ   ຂາງເລົ້າກ່ອງກາງ ແທ້ນໍ.

150-158 ໃຜຊິຫລີງເຫັນໄດ້   ພາຍໃນປ້ອງໄມ້ຊອດ
ຢ້ານແຕ່ມອດລັກດັ້ນ   ໃນທັ້ນຫມີ່ນໂຕ.

151-159 ນ້ອງວ່າບໍ່ມີຊູ້   ເຊີງແພນ້ອງສັງມາກ່ານ
ເຊີງກົກນ້ອງກ່ານດ້າຍ   ເຊີງທ້າຍນ້ອງກ່ານໄຫມ.

152-160 ທົ່ງລົງນ້ຳ ເພິ່ນວ່າທົ່ງຢາກກິນປາ
ທົ່ງລົງນາ ເພິ່ນວ່າທົ່ງຢາກກິນເຂົ້າ
ອ້າຍຢາກໄດ້ເຈົ້າ ອ້າຍຈຶ່ງໄດ້ດຸ່ງເດີນມາ.

153-161(ຍິງ) ຕາມຈິດເຜິ້ງ ຕາມໃຈເຜິ້ງ ຂາງໄຟທາກຊິເປື່ອຍ
ເອົາແຕ່ໄມ້ຊິເປື່ອງ ເອົາແຕ່ເຜິ້ງຊິຢູ່ເຊົາ.

154- 162 ຕາມຈິດເຈົ້າ ຕາມໃຈເຈົ້າບໍ່ໄດ້ຂືນຂັດອາດ
ອ້າຍຊິຮອາດນ້ຳເຜິ້ງ ປະສົມງ້ວນເບື່ອອີ່ນາງເປັນບໍ !

155-163 ນ້ອງນີ້ປາດຖະໜາຫ້ອຍ ນຳຮອຍຊູ່ບາດຍ່າງ
ປາດຖະໜາຢາດນ້ຳ ນຳອ້າຍຊູ່ຮີ່ມໂພ.

156-164(ຊາຍ) ໃຫ້ອ້າຍໄລເສຍນ້ອງ ບໍ່ຄອງໄລເສຍວ່າຍ
ໃບໜາກຂາມບໍ່ພໍທີ່ເຂົ້າ ຕອງກະເດົາບໍ່ພໍທີ່ແຈ່ວ
ຕອງຮູ່ງແຮ້ວບໍ່ພໍຫຸ້ມຫົວຊ້າງ ບໍ່ວາງນ້ອງວ່າຍດາຍ.

157-165 ຜັກກະເດົາຕົ້ນ ໃບມົນອ້າຍໄດ້ປູກ
ລູກບ້ານນາງອ້າຍໄດ້ເວົ້າ ຄວາມບໍ່ເອົາບໍ່ໄດ້ວ່າ
ຂັນຝ່າກໍ່ຮັບໄດ້ ໄຟໄໝ້ກໍ່ຮັບເອົາ.

158-166 (ຍິງ) ນ້ອງຄືກັນນັ້ນແລ້ວໃຫ້ນ້ອງໄລເສຍອ້າຍ ບໍ່ຄອງໄລເສຍວ່າຍ
ຝ້າບໍ່ຫວາຍ ຂີ້ດີນຊາຍບໍ່ຢື່ນ
ຫີນຢູ່ນ້ຳ ບໍ່ຟູຂື້ນແມ່ນບໍ່ໄລ.

159-167 ຄວາມຜິດບໍ່ມີຄວາມຂ້ອງ ປອງຫາແຕ່ຢາກຫ່າງ
ຄວາມຜິດບໍ່ມີທີ່ແມ່ບີ້ ຊິພາຍຖີ້ງໜີຈາກ
ຄວາມປາກບໍ່ທັນໄດ້ເວົ້າ ຊິການຟ້າວແຕ່ຢາກໜີ.

160-168 ອ້າຍຜູ້ງາມໆນັ້ນ ຍີມເພດໃຜມາຊາ
ອ້າຍຜູ້ງາມໆນັ້ນ ຍີມຂາໃຜມາຍ່າງ
ຜູ້ຂີ້ຮ້າຍຈັ່ງນ້ອງ ຍອງຫລັງຊ້າງເພີ່ນມາ.

161-169 ຄັນອ້າຍເມືອນຳນ້ອງ ບໍ່ໃຫ້ເຄືອງບາດແຂນ
ຄັນອ້າຍເມືອນຳນ້ອງ ບໍ່ໃຫ້ແຄນບາດຍ່າງ
ຄັນບໍ່ຢາກຂີ່ຊ້າງ ກອຣບລົ້ກໍ່ຫາກມີ.

162-170 ເຂົາຊາວ່າ ທາງບ້ານອ້າຍພຸ້ນ ຄອງກໍ່ດັງລະຄັງ ກໍ່ມ່ວນ
ສວນຝ້າຍກໍ່ງາມ ເຂົ້າກໍ່ແຊບຊີ້ແກບກໍ່ຫອມ
ເຂົ້າກໍ່ອ່ອນ ປ່າຍອນກໍ່ມັນ.

163-171(ຊາຍ) ທາງບ້ານອ້າຍພຸ້ນ ແມ່ນບ້ານສະແວດສະແວ
ປ່າແກ່ແກມປ່າເປົ້າ ໃຜເຂົ້າຕັ້ງແຕ່ກາຍ.

164-172 ຜິດໃຈເດ...ກົກຈິກສັງຊິມາບັງຫລັງ ກົກຮັງສັງຊິມາບັງໜ້າ
ບໍ່ເຫັນແກ້ມບ່ອນຊິແຍງ ນ້ອງເອີຍ.

165-173 ອ້າຍນີ້ ບໍ່ໄດ້ຫຍໍ້ ສັດທານ້ອງລົງຕ່ຳ
ມີແຕ່ຕັດໄມ້ຄ້ຳ ມີແຕ່ປ້າໄມ້ຍູ
ມີແຕ່ຊູໄມ້ສ້າວ ມີແຕ່ຈັບຈ່ອງນ້າວ
ຍັບຄ້າວເຂົ້າກ່າຍເຄືອ.

166-174 ປານໃດເດຊິໄດ້ຈູງແຂນເຂົ້າ ພາຂ້ອນປ້ອນໄຂ່ຫນ່ອຍ
ມີຂວາປ້ອນໄຂ່ອ້າຍ ມີຊ້າຍປ້ອນໄຂ່ນາງ.

167-175(ຍິງ) ອ້າຍເອີຍ ຊາດເພິ່ນ ແມ່ນຊາດໂພ
ຊາດໂຕ ແມ່ນຊາດຜ້າວ ໃຜຊິຈັບຈ່ອງນ້າວດຶງ
ຜ້າວເຂົ້າໃສ່ໂພ.

168-176 ນ້ອງນີ້ເວົ້າພື້ນທຸກ ສາມມື້ກະບໍ່ວາຍ
ທຸກຍ້ອນເດີນທາງຜ້າຍ ໄປຂາຍຄວາຍເມືອງລ່າງ.

169-177 ນ້ອງນີ້ມາຄິດຕ່າງ ເຮັດແນວໃດບ້ານເຮົາຊິຮຸ່ງ
ຄືດອກຄຳເຫລືອງ
ບ້ານເຮົາຊິເຮືອງ ຄືດອກຄຳຍ້ອມ
ໃຫ້ມັນເປັນອ້ອມລ້ອມ ຄືດອກຄຳສາວ.

170-178 ທຸກແຕ່ກີ້ ກໍ່ຍັງໄດ້ນັ່ງໜັງ
ທຸກແຕຫລັງ ຍັງພໍໄດ້ນັ່ງສາດ
ບາດວ່າທຸກກະດໍ້ ສະຫຍາມເຂົ້ານັ່ງເມືອງ ເຮົານາ!

171-179 ອ້າຍຄືກັນນັ້ນແລ້ວ ທຸກປີກ່ອນຍັງໄດ້ຂາຍຄວາຍ
ທຸກປີກາຍ ຍັງໄດ້ຂາຍເຂົ້າ
ທຸກເວົ້າຊູ້ຕ່າງບ້ານ ປານຝາກໄຂ່ໄວ້ນຳກາ ນ້ອງເອີຍ.

172-180 ທຸກບໍ່ມີເສື້ອຜ້າ ຜ້າເຮືອນຄື ພໍສີຢູ່
ທຸກບໍ່ມີຄູ່ຊ້ອນ ນອນສີຢູ່ບໍ່ເປັນ.

173-181 ຄັນວ່າ ທຸກນຳນ້ຳ ຊຸດສ້າງກໍ່ຍັງໄຫລ
ທຸກນຳຝືນນຳໄຟ ຕ່ອຍຫີນກໍ່ຍັງໄດ້
ຄັນວ່າທຸກບໍ່ມີໜັ້ ມີເງິນໄພຊີໄດ້ມື້ລະໜ່ວຍ.
ທຸກບໍ່ມີຊູ້ຊ້ອນ ແມ່ນຊິໄປທ່ຽວຊີ້
ຊາວບ້ານເພິ່ນບໍ່ຂາຍ ຫລ້າເອີຍ.

174-182 ຄຶດຮອດນ້ອງ ກິນເຂົ້າເຊົ້າແລ້ວງາຍ
ກິນເຂົ້າສວາຍ ແລ້ວຄ່ຳ
ນອນລັບໄປຝັນເຫັນໜ້ານ້ອງ ມາຄຽງຂ້າງຢູ່ຄອນ.

175-183(ຍິງ) ຊາຍເອີຍ... ເຮືອນບໍ່ມີສີໜ້າ ກາບີນມາມັນຊິລ່ອງ
ມີຝາຄັນບໍ່ເອົາຕອກຕື້ອ ຊິໄປໜັ້ນຮ່ອມໃດ.

176-184 ຊູ້ກໍ່ຮ້າງ ຂອງກາງນ້ອງກໍ່ສິ່ງ
ບໍ່ໄດ້ຮ້າງແຕ່ຊູ້ ຂອງອ້າຍສົ່ງຊາຍແລ້ວເດ.

177-185 ເງິນຄຳຂອງຫາໄດ້ ນ້ຳໃຈຂອງຫາຍາກ
ຄວາມປາກບໍ່ໄດ້ຊື້ ຄວາມໄດ້ຄືອ້າຍຫາໃສ່.

178-186 ໃຫ້ອ້າຍເມືອດີເຍີ ເມືອທັງກິກ້ວຍຍໍ
ເມືອທັງກິກ້ວຍຍ້ອງ ປ້ອງຖີ່ຫລາຍລຳ
ໃຫ້ອ້າຍເມືອຈິບຜ້າ ຜືນຫລວງໄວ້ຮົ່ມຊ້າງ
ໃຫ້ອ້າຍເມືອຈິບຜ້າ ຜືນກວ້າງໄວ້ຮົ່ມເມຍອ້າຍເດີ.

179-187 ເມື່ອທັງກິກ້ວຍຍອນ ເມືອທັງສອນກ້ວຍຄົ່ງ
ໃຫ້ອ້າຍເມືອນັ່ງເຜົ້າ ຄອນເຄົ້າມີ່ງເມຍອ້າຍເດີ.

180-188(ຊາຍ)	ຄັນນ້ອງເວົ້າຈັ່ງຊັ້ນ	ອ້າຍຂໍລາເມືອກ່ອນ
	ລາທັງຝາສາດຢັ້ງ	ລາທັງໜັງປູນັ່ງ
	ລາທັງອຸແອ່ງນ້ຳ	ບອຍພ້ອມຊູອັນ
	ລາທັງຂັນໝາກແກ້ວ	ລາທັງປອກປູນທອງ
	ລາທັງຂອງພູຄຳ	ຄອຍຢູ່ດີ ເດີເຈົ້າ.
181-189	ອ້າຍຊິລາຈາກນ້ອງ	ເມືອສ່ຽງຄຳຝັນ
	ຄັນວ່າຄຳຝັນຮ້າຍ	ອ້າຍຊິແກ້ຕໍ່ຜີ
	ຄັນວ່າຄຳຝັນດີ	ອ້າຍຊິແກ້ຕໍ່ນ້ອງ
	ຄັນວ່າຄຳຝັນບໍ່ຖືກຕ້ອງ	ອ້າຍບໍ່ຕ່າວຄືນມາ.
182-190 (ຍິງ)	ເວົ້າຊູ້ຮ້າງມັນບໍ່ຫ່າງຄືກະທໍ	ຮັງນົກເຂົາຫົວນາກໍ່ຍັງຮ້າງ
	ຄັນອ້າຍຮ້າງຈາກນ້ອງ	ໜີໄປຫາຜູ້ໃໝ່
	ຫາຍິງລືມນ້ອງ	ບຸນອ້າຍທີ່ແຜ່ນດິນ
	ມີຄວາມຜິດຈື່ງຄ່ອຍປ້ອງ	ຄວາມຖືກຈື່ງຄ່ອຍເວົ້າ
	ຢ່າຟ້າວເມົາແຕ່ດ່າ	
	ໂທດບໍ່ທີ່ແມ່ເທົ່າ	ຢ່າຟ້າວເມົາແຕ່ຢາກປ້ອຍ
		ຄືຕົວຂ້ອຍບໍ່ແມ່ນຄືນ.
183-191(ຊາຍ)	ຄັນວ່າດາວເຕັມຟ້າ	ຍັງບໍ່ຮຸ່ງ ທີ່ເດືອນ
	ຄັນວ່າຄົນເຕັມເມືອງ	ຍັງບໍ່ເຮືອງທີ່ນ້ອງ.
184-192	ອ້າຍຮັກນ້ອງ	ໃຈບໍ່ຂາດຍັງທີ່ສາຍຫລາ
	ທັນໃຈປາ	ຕັ້ງແຕ່ແລງວານນີ້.
185-193	ຄິດຮອດນ້ອງ	ແມ່ນບໍ່ມີແນວປານ
	ແສນຊິກິນແກງຫວານ	ກໍ່ເລົ່າຂົມປານງ້ອນ.
186-194	ມາເຫັນນ້ອງ	ງາມເກົ່ງກາຍກະດັດ
	ພັດແຕ່ເຫັນຍິງມາ	ບໍ່ປຽບປຸນປານໄດ້.
187-195	ຈົບກໍ່ພໍປານນີ້	ງາມບໍ່ງາມກໍປານນີ້
	ຢ່າເວົ້າສຽດຕິກົບ	
	ນ້ອງບໍ່ໄດ້ສືບອູບຄຳ	ບໍ່ໄດ້ງຳອູບແກ້ວ
	ແວວຕາມີ	ໃຫ້ອ້າຍລ່ຳເອົາທ່ອນ.

24/VII
ຫ້າມຈຳໜ່າຍ

188-196 ອັນນີ້ ແລ້ວເພີ່ນວ່າ ກົກກະດອນເຕ້ຍ
ຜັກອີ່ຕູພອຍທຸກ ນ້ອງນີ້ອຸກນຳຊາຍ
ພໍປານກິນຂວານຄົນ ໝື່ນດວງລົງທ້ອງ

189-197 ເພີ່ນຊ່າເຄືອເຂົ້າກ້ຽວ ລາມດົງເຕັມປ່າ
ໃຜບໍ່ມາຊ່ວຍຍ້ອງ ກໍ່ຍໍຂື້ນຕັ້ງແຕ່ໂຕ.

190-198 ນ້ອງບໍ່ຄິດເຫັນບໍ ແຕ່ມື້ນ້ອງຍັງນ້ອຍ
ແມ່ນ້ອງບອກໃຫ້ນັ່ງ ນ້ອງກໍ່ຍັງໄດ້ນັ່ງ
ແມ່ນ້ອງບອກໃຫ້ນອນ ນ້ອງກໍ່ຍັງໄດ້ນອນ
ແມ່ນ້ອງສອນໃຫ້ຮູ້ ນ້ອງກໍ່ຍັງໄດ້ຮູ້
ບາດນ້ອງໄປເວົ້າຊູ້ ຄຳດຽວບໍ່ສັ່ງແມ່
ບາດເຂົ້າກຸມນ້ອງບໍ່ແພ້ ຜົງງຮ້າຍວ່າແມ່ຫວງ.

191-199 ເຫັນວ່າງູເຫລືອມໃບ້ ຢ່າກາຍຫາງຈົກປາກ ມັນທ້ອນ
ໃຫ້ນ້ອງແຕ່ງບ້ວງຄ້ອງ ເຫລືອມຫາກຮູ້ຮ່ອນເອງ.

192-200 ຢ້ານແຕ່ຫອກ ແລະ ງ້າວ ເລັ່ງສອດທັນແທງ
ເຫລືອທີ່ຫນັງແມວມັກ ຄ່າບໍ່ມີສັນຊື້ນ.

193-201 ຝົນຕົກລົມເດືອນຫ້າ ແມ່ນໃຜເດຊິກ້າແຂ່ງ
ບໍ່ແມ່ນເຊື້ອໜໍ່ທ້າວ ໃຜຊິສູ້ຕໍ່ຕາວ.

194-202 ເຫລືອແຮງຝົນຕົກທົ້ງ ນາໂພນນ້ຳບໍ່ອັ່ງ
ເຫລືອແຮງອ້າຍນັ່ງເວົ້າ ແຕ່ຫາງນ້ອງບໍ່ຮັບເອົາ.

195-203 ໝົດຜິດອ້ອຍ ຄວາມອອຍອ້າຍໄດ້ອ່ອຍ
ໝົດຜິດບັ້ງນ້ຳເຜີ້ງ ຜີຮ້າຍຊິປ່ອຍນຳ.

196-204 ໝາຍມັກ ອ້າຍຈຶ່ງລົງລາຍເວົ້າ
ຫວັງເອົາ ອ້າຍຈຶ່ງລົງລາຍວ່າ ທຸກແຕ່ຜ້າຂີ້ຫລີ້ມ
ຂວານຄົມທັຣມ ຝັນໄດ້ກະບໍ່ຖອງ.

197-205 ເຫລືອແຮງມັກ ອ້າຍບໍ່ໄດ້ຢູ່ແຝງ
ເຫລືອແຮງແພງ ອ້າຍບໍ່ໄດ້ຢູ່ຊ້ອນ.

198-206 ໄກ່ຂັນຊອນ　　　ອ້າຍຂໍລາເມືອກ່ອນ
ຄຳປາກອ້າຍໄດ້ຈາ　　　ຄຳພະຫຍາອ້າຍໄດ້ເວົ້າ
ນຳນາງແຕ່ຫົວຄ່ຳ
ໃຫ້ນ້ອງກຳໃສ່ບັ້ງ　　　ໃຫ້ນ້ອງຟັງໃສ່ເນື້ອ
ເມືອພ້ອມຢ່າໄດ້ໄລ.

199-207 (ຍິງ) ເດິກກໍ່ເດິກມາແລ້ວ　　　ດື່ນກໍ່ດື່ນມາແລ້ວ
ເຈົ້າຫົວຕື່ນຕີກອງຍາມ
ໄກ່ຂັນສາມຍາມຕອນເຊົ້າ　　　ຍັງແຕ່ສອງເຮົາເວົ້ານຳກັນນ່າງ
ຄັນວ່າອ້າຍນ່າຂື້ນ　　　ຕົນນ້ອງພັດນ່າລົງ.

200-208 ນ້ອງຊິຕັດສິນໃຈ　　　ເອົາເຜື້ງຮ້າງກືອຕາຍ ແມ່ມັນຕອດ
ຄັນບໍ່ໄດ້ຍອດແກ້ວ　　　ມາຊ້ອນແມ່ນບໍ່ຍອມ.

201-209 ຢ່າຊູ່ສົງໄສທ້ອນ　　　ແກງບອນເຫມືອດສົ້ມຜ່າ
ຢ້ານແຕ່ໃຈອ້າຍບໍ່ກ້າ　　　ຂັນທ້າແຕ່ບໍ່ຫານ ປັ້ນທ້ອນ.

202-210 ຕາຍບໍ່ມີຜູ້ໄຫ້　　　ເຢັນຫົວໂລງໄປຈ່ອຍໆ
ຕາຍບໍ່ມີ　　　ຜູ້ບັກບິ່ມກ້ອຍ
ຕາຍບໍ່ມີ　　　ຜູ້ສ່ອຍຫນ້າໃຫ້
ເອນເຂົ້າແຈກປາ.

203-211 ຄັນອ້າຍຕາຍ　　　ຍ້ອນເຈັບຍ້ອນໄຂ້
ກິນທານຫາອ້າຍແດ່
ຕາຍຍ້ອນເບ້ຍຍ້ອນໄພ້　　　ກະບອງກ້ອມບໍ່ໃຫ້ທານ.

204-212 ຄຳທີ່ເຜັດເຄັມສົ້ມ　　　ຂົມຫວານອ້າຍໄດ້ຫວ່ານ
ບໍ່ເຫັນບ່ອນຊິໄດ້　　　ພິຄ້າຍຄ່າຂໍ້ມື.

205-213 ຄັນອ້າຍຕຶກລົງໄດ້　　　ແຫວນໃນມືອ້າຍຊິຝາກ
ສາຍຕະພາຍຂັດເນື້ອ　　　ຊິວາງໃຫ້ແກ່ພະນາງ.

206-214 ຊາດທີ່ເປັນຊາຍນີ້　　　ບໍ່ຍອມຄືນໂດຍງ່າຍ
ບໍ່ຍອມຂາຍຂີ້ຫນ້າ　　　ໃຫ້ຊາວບ້ານ ເພີ່ນຫຍັນ.

207-215 ຕົກຕາລົງລາຍປັ້ນ ຊີ້ດິນຊາຍໃຫ້ມັນກາຍເປັນແກ່ວ
ບໍ່ແມ່ນຊາຍແກ້ງເວົ້າ ຊອມທ້ອນທາກຊິເຫັນ.

208-216 ຄັນແມ່ນອ້າຍໄດ້ນ້ອງ ໃສ່ອູບເຫລັກກໍ່ຢ້ານຫມອງ
ໃສ່ອູບທອງກໍ່ຢ້ານເສົ້າ ມີທີ່ອອງໄປນຳຊູ່ບາດອ້າຍຍ່າງ.

209-217 ອ້າຍຊິມີຫນັງສືຫົ້ ຫນັງສືໄຫລົ່ງມາດ່າກໍ່ຕາຍແລ້ວ
ນ້ອງເປັນຜູ້ເກີດຫລ້າ ຜະຫຍາແກ້ນ້ອງບໍ່ມີ.

210-218 ຄັນແມ່ນເປັນຂອງຊື້ ຂອງຂາຍເຜີ່ນຈຳຫນ່າຍ
ນ້ອງຂາຍຄວາຍບັກຕູ້ ມາຊື້ຕັ້ງແຕ່ດິນ.

211-219 ຍາກແທ້ແລ້ວ ແມວໂຕຍົດຕ່ຳ
ເຕືອງຕໍ່ນຳຫນ່ວຍແກ້ວ ແມວອ້າຍຜູ້ຄ່າສູງ.

212-220(ຊາຍ) ອ້າຍຊິຝັນເຮືອເຫລັກ ລ່ອງລົງນ້ຳຂອງ
ອ້າຍຊິຝັນເຮືອຄຳ ລ່ອງລົງເອົານ້ອງ
ຄັນບໍ່ໄດ້ທອງຫລ້າ ຕາຍສາກໍ່ຕາມຊ່າງ
ຄັນບໍ່ໄດ້ຢູ່ສ້າງ ດອມນ້ອງອ້າຍບໍ່ຍອມ.

213-221 ຄິດເຫັນບໍຄາວມົດແດງຂົບນ້ອງ ສອງມືອ້າຍປ່າຍ
ມືຂວາອ້າຍປ່າຍແກ້ມ ມືຊ້າຍປ່າຍມົດແດງ.

214-222 ຄິດຍາກໃຈເດ ຊິໄດ້ລະນາງໄປ
ຊິໄດ້ໄລນ້ອງໄວ້ ຫນີໄປຄືນລະບ້ານ
ເຮືອນຊານຄືນລະຖິ່ນ
ນານປານໃດຈິ່ງໄດ້ເປືອງປິ່ນຫນ້າ ມາພໍ້ຈອບພະນາງ.

215-223 ຄັນແມ່ນໄກ່ຂັນແລ້ວ ຟ້າຮ້ອງຮ່ຳເຮົາໄດ້ຍິນນຳກັນ
ນົກເຂົາຂັນເຮົາໄດ້ຍິນ ຄືນລະບ່ອນ.

216-224 ຄັນນ້ອງຄິດຮອດອ້າຍ ແກງຫອຍໃຫ້ມັນເປື່ອຍ
ແກງຫອຍໃຫ້ມັນເປື່ອຍເບົ້າ ແກງຊ້າງໃຫ້ເປື່ອຍງາ
ແກງປາໃຫ້ເປື່ອຍງ້ຽງ.

217-225	ຄັນອ້າຍຄິດຮອດນ້ອງ ຊິຄາດຫ້າງໃສ່ປ່າເປົ້າ	ຊິປີນຕົ້ນໄມ້ຍໍຊິປີນຕໍໄມ້ຊາດ ຄະນິງເຈົ້າຢູ່ບໍ່ລືມ.
218-226	ອ້າຍນີ້ຄືດັ່ງສີທົນທ້າວ ແມ່ນຊິຜ້າຂາດສ້ອຍ	ຕາມຫານາງມະໂນລາດ ຈໍາກົ້ນກໍ່ບໍ່ຖອຍ.
219-227(ຍິງ)	ນ້ອງນີ້ເຫມືອນດັ່ງ ເຂົ້າບໍ່ກິນມີແຕ່ໄຫ້	ມະນີຈັນນາງນ້ອຍ ຄະນຶງຫາກາລະເກດ ຄອງມື້ແຕ່ຊິຕາຍ.
220-228	ຢ່າຊູ່ສິ່ງໃສທ້ອນ ຢ້ານແຕ່ແລ້ງ	ນາທາມນ້ຳແກ່ງ ທາງຊິຖ້ອມແມ່ນບໍ່ມີ.
221-229	ແນວທີ່ປີນເພີງປີ້ງ ຊ້າງກໍ່ຊິສູ້ເສືອກໍ່ຊິສູ້	ເລົາດຣວລູກຄູ່ ປະສົງຊື້ນອ່ອມແກ່ງ.
222-230	ອີງຕົ່ງ ຫມາກຂີ້ກາເອີຍ ບາດຫມາກຂຣບຂີ້ຣ້າຍງ	ທາງໃນພັດຂົມຂື່ນ ພັດຫວານຈ້ອຍຢູ່ໃນ.
223-231	ມັນຫາກລືຊາແລ້ວ ເຄີຍເອີ່ນກິນໄກ່ນ້ອຍ	ບັກແຫລວລີຄໍກ່ານ ກາງບ້ານກໍ່ແມ່ນມັນ.
224-232	ມັນຫາກລືຊາເຂັ້ມ ຝ້າຍໄຫມຍີບຍັງບໍ່ທັນສອດກົ້ນ	ເຂັມທາງໄທກົ້ນ ຊິບໍ່ປ່ອງ ຝືນເຂົ້າໃສ່ເຊີງ
225-233	ຫົວບໍ່ພຣງຕີນສົ້ນ ຫົວບໍ່ພຣງຫລັງເຕົ່ານ້ອຍ	ຢ່າປີນອີນເຮັດເພດບ່າວ ຊິລອຍເຂົ້າໃສ່ສາວ ເປັນບໍ !
226-234	ເຈົ້າຜູ້ຄໍາແດງເຂັ້ມ ຊິເອົາແຊ່ໃສ່ນ້ຳ	ສີເຕັມນ້ຳຄັ່ງ ພັນມື້ບໍ່ຫລ່າສີ, ງາຍແລ້ວ.
227-235	ເຈົ້າຜູ້ສີຄໍາຍ້ອມ ແມ່ນຊິນັ່ງຢູ່ລ້າ	ງາມກາຍເກີນຄ່າ ກໍ່ງາມເສື້ອຍຢູ່ເລີງ.
228-236	ແນວຄືນງາມມາແຕ່ເບົ້າ ແມ່ນຍໍຂື້ນໃສ່ຮ້ານ	ຊິເອົາຫຍັງມາປຽບໄດ້ນໍ ລາຄາລ້ານກໍ່ບໍ່ສົມຊັ້ນບໍ.

229-237(ຊາຍ) ແນວຊີ້ຮ້າຍຄືອ້າຍ   ຊິເອົາຄຳມາພອກກໍ່ ດາຍແລ້ວ
ແມ່ນຊິຂື້ນໃສ່ຮ້ານ   ໃຜບໍ່ເຕືອງຊິລ່ຳແຍງ ດອກນາ.

230-238 ຕັ້ງໃຫ້ທ່ຽງ   ຕະກຽງມົງຊິງເອີຍ
ເຖິງວ່າຮຸ່ງກ່ວາດາວ   ເຖິງວ່າຂາວກວ່າຟ້າ
ແຕ່ໃຈນ້ອງບໍ່ປະສົງ
ເຖິງວ່າຄ້ວນດຳປີ້   ກະບອງຊີ້ຍາວ ກໍ່ຕາມຊ່າງ
ອ້າຍຊິນຸ່ງເສື້ອອີ້ງ   ນອນກົ້ງເກືອກເອົາ.

231-239 ຄັນແມ່ນອ້າຍໄດ້ນ້ອງ   ມໍລະດົກຄົກຕຳແຈ່ວ
ຄົ້ງຈໍ່ມ້ອນບໍ່ແລ້ວ   ແນວແມ່ປີ້ຫາກໍ່ລ້ຽງ
ເຮືອນສາມນ້ຳສີ່ສ້ຽງ   ຊິຍໍ່ມ້ອນມອບພະນາງ.

232-240 ຄັນແມ່ນອ້າຍໄດ້ນ້ອງ   ສາມມື້ຊິບໍ່ໃຫ້ລົງເຮືອນ
ສາມເດືອນຊິບໍ່ໃຫ້   ລົງລ່າງ
ໃຫ້ນັ່ງທອດທະເນີ້ງ   ເອົາໝອນເທົ້າກ່າຍແອວ.

233-241 ຄັນແມ່ນອ້າຍໄດ້ນ້ອງ   ຊິເອົາຄຳມາພອກ
ຂອດກັບອີກໄວ້ລ້ອງຄ້ອງ   ພົ້ນມື້ບໍ່ອິ່ມໃຈ.

234-242(ຍິງ) ນ້ອງນີ້ ເກີດຜິດສ່ຳ   ບໍ່ທັນພົ້ວດອກຈານ
ນ້ອງນີ້ ເກີດຜິດປານ   ບໍ່ທັນຊາຍຜູ້ຮູ້
ອ້າຍຫາກໄດ້ຊູ້ແລ້ວ   ຕົວນ້ອງຈຶ່ງໃຫ່ຍລຸນ.

235-243 ອ້າຍຜູ້ງາມງນັ້ນ   ແມ່ນອ້າຍເກີດວັນຫຍັງ
ນ້ອງຢາກແທງຄໍລັດ   ນ້ອງຢາກຕັດຄໍຕາຍ
ເກີດດອມວັນອ້າຍ.

236-244 ອ້າຍຜູ້ຍຸ້ມກໍ່ຄ່ອງ   ອ້າຍຜູ້ແຍ້ມກໍ່ຄ່ອງ
ແມ່ນຊິເຕັ້ນຂ້ວາມຮ່ອງ   ຫລາຍຄືນກໍ່ຍັງຄ່ອງ
ແມ່ນຊິແກ້ຜ້າຄ້ອງ   ຄໍອ້າຍກໍ່ຫາກຄື.

237-246(ຊາຍ) ບໍ່ຢາກພັດພາກນ້ອງ   ເວນພັດຈ່ອງຈຳໜີ
ບໍ່ຢາກໄກສາຍຄໍ   ອີ່ແມ່ເວນຫາກພາເອັ້ນ
ຢາກເຫັນໂຕແມ່ເວນເດ   ຊິເປັນໂຕຄືດັ່ງຫອຍ
ຊິເປັນຮອຍຄືດັ່ງຊ້າງ
ອ້າຍຊິໄປນຳຈ້າງພານປືນມາຂ້າ   ພານໜ້າເພິ່ນໄລ່ຍິງເບິ່ງໜາ.

239-247 ຢ້ານແຕ່ໃຈຍິງນີ້   ຄືກອຍຕະແຫລອທ່າງ
ຖີ້ມໃສ່ນ້ຳໄຫລເຂົ້າສູ່ຕາ
ໃຈຊາຍນີ້ຄືຫີນໜັກໜື່ນ   ຖີ້ມໃສ່ນ້ຳຈົມປົ້ງບໍ່ຟູ.

240-248 ອ້າຍນີ້ ຕົກຕາໜີໄປໜ້າ   ຫາກິນປາໜອງໃຫ່ມ
ໜອງເກົ່ານີ້   ແສນຊິບ້ອນກະບໍ່ງົມ.

230-248 ອ້າຍມັກນ້ອງ   ບໍ່ໄດ້ມັກແຕ່ມື້ນີ້ ມື້ອານ
ມັກແຕ່ມື້ແມ່ນ້ອງ   ຕົບຜ້າລາຍປາຍຜ້າອ້ອມ
ມັກແຕ່ພຸ້ນ   ປານນີ້ຍັງບໍ່ອາຍ.

232-249 ອ້າຍມັກນ້ອງ   ມັກແຕ່ເມືອງທ່າແຂກບໍ່ທັນຕັ້ງ
ເມືອງລະຄັງບໍ່ທັນເກີດ   ຟ້າບໍ່ຜ່າເຄືອເຂືອງ
ເມືອງວຽງຈັນບໍ່ຮ້າງ   ບໍ່ວາງນ້ອງໃຫ້ແກ່ໃຜ.

233-250 ອ້າຍມັກນ້ອງ ມັກຕັ້ງແດ່ດົນໆ   ມັກແຕເມືອງສະກົນບໍ່ທັນຕັ້ງ
ສາລະຄາມ ຍັງເປັນບ້ານທ່າບໍ່   ມັກແຕ່ພຸ້ນປານນີ້ບໍ່ຈືດຈາງ.

239-251(ຍິງ) ນ້ອງຄືກັນນັ້ນແລ້ວ   ນ້ອງມັກອ້າຍ
ບໍ່ໄດ້ມັກແຕ່ມື້ນີ້ມື້ອານ   ມັກແຕ່ມື້ອ້າຍຄານ
ອອກຈາກອູທອນທ້ອງ   ມານດາຜູ້ບັງເກີດ
ແມ່ກຳເລີດຕ້ອງອ້າຍໄຫ້   ຕົນນ້ອງເຫລົ່າອອຍ.

235-252 ນ້ອງມັກອ້າຍພໍຢາກຂັດຄີຂ້ອງ ອ້ອງເອົາບໍ່ໃຫ້ຍ່າງ
ນັ່ງເວົ້າກັນຄືນລະຂ້າງ ກາງໂຮງຕັ້ງຕໍ່ເຂ່ຍກະບອງບໍ.

236-253(ຊາຍ) ອັດສະຈັນໃຈແຂ້ ຫາງຍາວງ ສັງບໍ່ໄດ້ຮອງນັ່ງ
ບາດກະຕ່າຍຫາງກ້ອມໆ ສັງມານ້ອມນັ່ງເປັນ.

237-254 ອັດສະຈັນໃຈໂອ້ ປາສະແວງບໍ່ມີງ່ຮງ
ບາດປາຊິວສັງມາປັກປອດຄົ້ນ ເປັນຜ້າປ່ອງປີ.

238-255 ອັດສະຈັນໃຈໂອ້ ເຂົ້າສານຢູ່ໂອຍໍຄໍຕອດໄກ່
ໄມ້ໄຜ່ຢູ່ກໍ ຍໍຄໍຕອດຊ້າງ
ປາຢ້າງຢູ່ທົ່ງ ໂຕນເຕັ້ນໃສ່ແມວ
ຄໍາຜະຫຍາແອ່ວນ້ອງ ສັງບໍ່ເຕືອງຕ່າວຄືງ.

239-256 (ຍິງ)ອັດສະຈັນມ້ອນ ກິນມອນສັງຮູ້ຍ່ຮງ
ອັດສະຈັນໄກ່ຜູ້ໂຈ້ນ ກິນນ້ໍາຍ່ຮງບໍ່ເປັນ.

240-257 ອັດສະຈັນໃຈໂອ້ ອອນພະນາງມັກເຜີ່ນ
ເຜີ່ນບໍ່ມັກດົ້ງ ສັນດົ້ນຕັ້ງແຕ່ໂຕ.

241-258 ປີນີ້ຕ່າງປີກາຍ ຄວາຍຕາຍບໍ່ມາແຫ່ລງ
ຂອງແພງຮັດທໍ່ນ້ຳຮົນ ພັດຂາຍຖືມຄ່າບໍ່ມີ.

242-259(ຊາຍ) ປີນີ້ຕ່າງປີກາຍ ຄວາມຕາຍຄ່າເຊືອກລ່າມ
ຜູ້ສາວງາມຮາມທ່າງຊູ້ ຕີນອ້າຍຊິລ່າມເອົາ.

243-260 ນ້ອງເອີຍໃຈຍິງນີ້ ຊູຊິໄດ້ກິນງ່າຍ
ເວົ້າຄວາມຈິງຊ້ຳວ່າຮ້າຍ ຫົວໃຈຫ້ອຍຢູ່ຫູ.

244-261 ສັງມາຂືນຂື່ນແທ້ ປານກິນຄີມດາບ
ປານວ່າສອນສຽບຈ້ຳ ໃນທ້ອງຫມື່ນດວງ.

244-262 ເຫລືອແຮງແຮ້ງ ຍືນແຮງລືມບໍ່ຊ່ວຍ
ລືມບໍ່ມາຊ່ວຍແຮ້ງ ຍືນໄດ້ກະບໍ່ແຮງ.

245-263 ຄັນວ່າເປັນຕາໄດ້ ຊິສານໄຊລຶງໃສ່
ຄັນບໍ່ເປັນຕາໄດ້ ອ້າຍຊິຊັດກະຊູ້
ອ້າຍຊິຄອນກະໄຊ້ ອ້າຍຊິພາຍຂ້ອງໂຢ້
ເມື່ອຈ້ຳແຈ່ວຜືງ.

245-264 ເປັນຕາໄດ້ ຊິຄາດຫ້າງລຶງສະ
ເອົາໃຫ້ເຫັນໂຕປາ ລ່ອງລອຍຕາມນ້ຳ.

246-265 ຄັນວ່າເປັນຕາໄດ້ ແຫວນໃນມືອ້າຍຊິຖອດ
ອ້າຍຊິເຂາະຂອດຫມັ້ນ ເອົາເຈົ້າຜູດຮອ.

247-266 ນ້ອງຊິມີສິບຊູ້ ຊາວຊາຍກໍ່ຕາມຊ່າງ
ອ້າຍຊິນຳກວາດລ້າງ ລຶງລວງກ້ວາງຮ່ອມໄຊອ້າຍແລ້ວ.

248-267(ຍິງ)ອິດທະແນມ ແຕ່ນ້ອງໄດ້ອ້າຍ ນ້ອງຊິຍອມເປັນແຫລ້ງ
ນອນສະແດງອອກຄຳສັ່ງ
ຄັນມີສັ່ງບໍ່ໄດ້ ຊິເອົາສິ້ນຕື່ມແຖມ.

249-268 ສັບພະເຫລວຫລາກ ຊີ້ດິນຕິດຫົວເລັກນ້ອຍ
ສັງໂງແງ້ນວ່າແຕ່ຫອນ

250-269(ຊາຍ) ນ້ອງຕີອ້າຍ ຕີສິ່ງສັນໃດ
ຕີອ້າຍເຖົ້າ ຖາງກົກເລົ້າກໍ່ຂາດ
ຜັດຖາງຫຍ້າຊີອົ້ນ ກໍ່ຍັງແລ້ວກ່ອນງາຍ.

251-270 ຕີອ້າຍເຖົ້າ ຫນັງຍານຫາກຊິເຄັ່ງ
ອ້າຍຊິກົ້ວຂີ້ຟ້າ ຕີຫລັ້ນດັ່ງກອງ.

252-271(ຍິງ) ຕີແຕ່ເຮືອນບໍ່ມີຄັ້ງ ຕີແຕ່ຕັ້ງບໍ່ມີດູກ
ບາດຍາມຂີ້ມູກຍ້ອຍ ຊິໄປຫ້ອຍຢູ່ໃສ.

253-272 ປານໃດເດ ຟ້າຊິຜ່າເຄືອເຂືອງ
ເມືອງວຽງຈັນບໍ່ຮ້າງ ບໍ່ວາງອ້າຍໃຫ້ແກ່ໃຜ.

254-273 (ຊາຍ) ແນວທີ່ຈິດປະສົງແລ້ວ ແນວທີ່ໃຈປະສົງແລ້ວ
ທາງແສນໄກກໍ່ດັ້ນຮອດ ຄັນບໍ່ໄດ້ຍອດແກ້ວ
ບໍ່ໄດ້ແນວຜູ້ຈັ່ງນ້ອງ ເມື່ອບ້ານແມ່ນບໍ່ຍອມ.

255-274 ບໍ່ໄດ້ນ້ອງ ອ້າຍຫມາຍປອງທັງສອງຊາດ
ຄັນຕາຍຈາກຊາດນີ້ ຊິເມືອຖ້າຢູ່ສະຫວັນ.

256-275(ຍິງ)ບໍ່ໄດ້ອ້າຍ ຕາຍໄປນ້ອງບໍ່ເນົ່າ
ຊິຫາວຍຶດຢູ່ດັ່ງໄຫມ ທາວໄຍດັ່ງມ້ອນ
ນອນນ້ຳດັ່ງຄວາຍ.

257-276 ບໍ່ໄດ້ອ້າຍ ຕາຍຂວ້ຳນ້ອງບໍ່ແຫນງ
ຕາຍແຄງນ້ອງບໍ່ຈົ່ມ
ຕາຍເອົາຫົວຫມູນຫີນ ຕາຍເອົາຕີນຈຸ່ມນ້ຳ
ຕາງໃຫ້ຊຸ່ມເຢັນ.

258-277(ຊາຍ) ຄັນວ່າມັກຜູ້ໃດແທ້ ສາວຄຳນາງໃຫ້ນ້ອງວ່າ
ຫລືວ່າມັກອ້າຍທິດຜູ້ນັ່ງຮຽງ
ຫລືວ່າມັກອ້າຍຊຽງ ຜູ້ນັ່ງໃກ້
ຫລືມັກອ້າຍ ຜູ້ນັ່ງລໍາ.

259-278(ຍິງ) ຄັນອ້າຍມັກທາງຂອກ ໃຫ້ອ້າຍຖີ້ມບ່ອງວາງ
ຄັນອ້າຍມັກຜູ້ນັ່ງທາງກາງ ໃຫ້ອ້າຍຖີ້ມບ່ອງຄ້ອງ
ຄັນອ້າຍມັກນ້ອງແທ້ ໃຫ້ອ້າຍບ່ອງດັ່ງເອົາ.

260-279 ເຂົາວ່ານ້ຳກວ້າງຕື້ນ ໃສ່ຊີຊີ່ນໃຈສະ
ຄັນແມ່ນນ້ຳເລິກຮອມ ໃຫ້ຮີບຕອມໃຈໃສ່
ຢ້ານແຕ່ເຮືອກແລະແຂ້ ຝັງລີ້ຢູ່ໃນຫັ້ນແລ້ວ !

261-280(ຊາຍ) ເຈົ້າຜູ້ບົວບານບ້າງ ກາງສະຖານກ້ານກ່ອງ
ຢູ່ກາງຫນອງໃຫ່ຍກ້ວາງ ມີອ້າຍເດ່ບໍ່ເຖິງ.

262-281 ຢ້ານແຕ່ບົວບານບ້າງ ເຫີງຕໍ່ກາງໂຄກ
ບານບາດຫລ້າ ຝົນຊ້ຳເລົ່າບໍ່ຮໍາ.

263-282 ເຈົ້າຜູ້ເປັນຄໍາແທ້ ຢ່າຟ້າວລືມຄໍາຍ້ອມ
ຂອງປອມປົນຂີ້ກົ່ວ
ບາດວ່ານ້ອງໄດ້ຜົວ ຢ່າຟ້າວລືມອຸ່ນອ້າຍ
ຊາຍຜູ້ຮ້າຍຄູ່ບໍ່ມີ !

264-283(ຍິງ) ນ້ອງນີ້ປອດລ້ອຍຊ້ອຍ ສະເຫມີອ້ອຍກາງກໍ
ຍັງບໍ່ມີຄວາຍກັດ ປົ່ງໃບຂຽວອ້ອນ.

265-284 ອ້າຍຜູ້ຈັນເພັງແຈ້ງ ທຽມດາວເກີນວ່າຄ່ອງ
ຂໍຈົ່ງໃສສ່ອງແຈ້ງ ແຍງນ້ອງຜູ້ປະສົງ.

266-285 (ຊາຍ) ຫມາກເຂືອສຸກທາງຂົ້ວນ ເຈືອລະເນືອກັນຢູ່
ອ້າຍຢາກເກັບວ່າໃຕ້ ພັດຂວາງຂັ້ນວ່າເຫີງ.

267-286 ໃຈປະສົງຕໍ່ໄມ້ ຈິ່ງໄດ້ແບກຂວານມາ
ໃຈປະສົງຕໍ່ ເຮືອຊາວວາ ແບກໄມ້ພາຍມາພ້ອມ
ຈິດປະສົງນໍາເຮືອພັນຂັ້ນ ຈິ່ງພັນແພລົງທ່າ
ຫວັງເຮັດມາຮ່ວມນ້ອງ ຈິ່ງຄອນກ້າແຊ່ງຝົນ.

24/VII
ຫ້າມຈຳໜ່າຍ

267-287 ທຳນຽມຄືນເຮົານີ້ ບໍ່ລືມໄລກັນງ່າຍ
ຄ້າຍຄືກັບຕົວເຕົ່າ ບາດມັນມີລະມື່ງມັຽນ
ຂ້ອນມັນວຽນຂື້ນຟ້າ ອອງນັ້ນກໍ່ຫາກຍັງ.

269-289(ຍິງ) ໄປເກັບຜັກ ຊ້ຳພັດພໍ້ບົ້ງ
ພີ່ຢາກຫນ່າຍທັງສອນ ນ້ອງນີ້ຢາກໄລສອນ
ປະໃຫ້ກາກີນບົ້ງ

ບົ້ງເອີຍບົ້ງ ກິນໃບໃຫ້ຈົ່ງກ້ານ
ກິນກ້ານ ໃຫ້ຈົ່ງແຫນງແດ່ຫ້ອນ.

270-290 ເຖີງວ່າຝາດກໍ່ຊິອົມ ເຖີງວ່າຂົມກໍ່ຊິຄ້ຽວ
ເຖີງວ່າແຫລວກໍ່ຊິຄັ້ນ ພັນກັນລົງໃຫ້ມັນເປັນອ່າວລ່າວ
ແມ່ນມີຊາວແມ່ນ້ຳ ແສນທ້າງກໍ່ຊິລ້ອຍ.

271-291(ຊາຍ) ນ້ອງຜູ້ນ້ອຍນາດເນື້ອ ນອນເສື່ອໃບບິດ
ຫລຽວເບິ່ງຄີງບິດຂື້ນ ເມືອເທິງອ່າວລ່າວ
ປານວ່າດາວຢູ່ຟ້າ ວົງລ້ອມຫນ່ວຍພະຈັນ.

272-292 ອ້າຍນີ້ ມັກຮູບນ້ອງ ກະສັນຄົ້ນດັ່ນຕາຍ
ກິນໄຂ່ກົບ ຫມົດມື້ກໍ່ແຂນ
ກິນໄຂ່ແລນ ຫມົດມື້ ກໍ່ແຂ່ງ
ກິນເຂົ້າຈ້າວ ໃສ່ນ້ຳອ້ອຍ ພີ່ແຕ່ນ້ອຍຢາກນອນ.

273-293 ເຕັມທີອ້າຍ ກຸມອ່ຽນກາງນາ
ເຕັມທີອ້າຍ ກຸມປາກາງແກ່ງ
ແຫບໍ່ຊ້ອນ ບໍ່ຄອງໄດ້ແຈ່ວແລງ.

274-294 ນ້ອງຜູ້ແມວນາມບົ້ງ ຫາກີນແຕ່ຍອດອ່ອນ
ໃບປົ່ງຊອນຂື້ນແລ້ວ ແມວບົ້ງບໍ່ຢາກກິນ.

275-295	ອ້າຍຢາກຫຍັບແດນໄຮ່ ຫຍັບແດນນາ ອ້າຍຢາກຫຍັບອູ່ໄມ	ເຂົ້າໄປຫາ ເຂົ້າໄປສູ່ ໄປແຂວນຮ່ອມຊານເກີຍ ນ້ອງເອີຍ.
276-296(ຍິງ)	ນ້ອງນີ້ ບໍ່ແມ່ນແມວແຫລວປີ້ ບໍ່ແມ່ນແມວລາຫູ	ຊິໄປບຣດຝູງກາໄດ້ບໍ ! ຊິບຣດບຣນພະຈັນໄດ້.
277-297	ນ້ອງນີ້ແມວນາມເຕັ້ຍ ແມວກາດຳ	ທຣມສານຮ່ອມຊິເກິ່ງ ທ່ອນຊິທຣມທົ່ງໄດ້.
278-298	ແມວນາມແກ້ວ ແມວນາມແຫວນຄ່າລ້ານ ຄັນແມ່ນແມວນາມສົ້ມ	ທຣມຫີນທ່ອນຊິແມ່ນ ທຣມສ້ອຍທ່ອນຊິສົມ ຊິອົດກິນໃຫ້ມັນຊື່ນ.
279-299(ຊາຍ)	ຂົມຜັກຂົມຫຍ້າ ຄັນແມ່ນຂົມຂີ້ເພ້ຍ	ຂົມຫມາກຂີ້ກາກິນຍາກ ຊິກິນກັຣງບໍ່ໃຫ້ເຫລືອ.
280-300	ສິຊິມພູຕົ້ນຫົວາ ເຫລືອງຂີ້ຫມີ້ນ ດຳຫມີ້ນຫມໍ້	ຂາວກາຫາຍາກ ຫາໄດ້ຢູ່ຊູ່ຍາມ ຫາຊື້ກໍ່ບໍ່ມີ.
281-301	ດຳຈັ່ງຊີ້ຍ້ອນແມ່ອ້າຍ ຍ້ອນແມ່ອ້າຍຖືພາ ອ້າຍຈຶ່ງດຳປອດປີ້	ຖືພິກໄລ່ກາ ດຳນາເຂົ້າກ່ຳ ຄືຂີ້ຖ່ານໄຟ.
282-302	ນ້ອງຜູ້ດຳນາຫລ້າ ຢ້ານແຕ່ກ້າຂື້ນຂໍ້	ກາງປີບໍ່ທັນຫມູ່ ດຳໄດ້ເຂົ້າບໍ່ງາມ.
283-303	ນອນດຶນກິນເຂົ້າຈ້າວ ແມ່ຢູ່ກຳບໍ່ກິນນ້ຳຮ້ອນ	ແມວຂອງມັນໃຜຊິຈົ່ມ ໃຜຊິຮູ້ຮ່ອມປືວ.

284-304 ຢ້ານແຕ່ແຈະນ້ຳເຜີ້ງ ຜັດທວານເລີງນ້ຳຂີ້ສູດ
ຜັດຮ່າແຈະນ້ຳອ້ອຍ ຜັດຫວານຈ້ອຍນ້ຳໝາກນາວ.

285-305 ອ້າຍນີ້ ເບັດໃສ່ແກ້ງ ຜັດຕຳຖືກຫົວດອນ
ເບັດໃສ່ຍີງນອນດຣວ ຜັດຖືກຊາຍນອນຊ້ອນ

286-306(ຍິງ) ຢ່າຊູ່ມາລໍລ້ຳ ຮັ້ງແຕນມັນຊິໄລ່
ຢ່າຊູ່ມາແຢ່ໄມ້ ຮັງເຜີ້ງຊິແຕກຮວງ.

287-307 ອີຕືນເປັດເດ ຢາກງອຍຄອນນຳໄກ່
ຕີນເປັດມັນຫາກເປັນປ່າງລະປ່າງລ້າງ ປີນຂຶ້ນພະລາດລົງ

288-308 ນ້ອງນີ້ເຫມືອນດັ່ງຫມີດແດງສົ້ມ ຢູ່ອຳພາຍອດມ່ວງ
ກີນກໍ່ກີນບໍ່ໄດ້ ຖະລອນຕຸ້ມຕັ້ງແຕ່ໃບ.

289-309 ນ້ອງນີ້ ເຫມືອນດັ່ງໄມ້ ລຳໂງບໍ່ເປັນແອກ
ຄົດກໍ່ຄົດແຕຕໍ ງໍຜັດງໍແຕ່ໄມ້ໃຈນ້ອງຊີ່ດັ່ງທຣນ.

290-310 ຢາກເມືອຢາມອ້າຍ ບໍ່ແພ້ແລ້ວບໍ່ມີເງີນຈ້າງລົດແລ່ນ
ມີແຕ່ເງີນທ້າຮ້ອຍ ພໍຈ້າງກຳປັ່ນເມືອ.

291- ຂວາງເມກເມືອລະນໍ ຂວາງຕາເວັນເມືອລະນໍ.

292-311 ເຈົ້າຜູ້ເມືອຫລັ້ງງ ບໍ່ຫລຽວຫລັງຄືນເອີ້ນສັ່ງ
ຄັນບໍ່ເອີ້ນສັ່ງໃກ້ ກໍ່ພໍເອີ້ນສັ່ງໄກ.

293-312(ຊາຍ) ອ້າຍນີ້ ຢ້ານບໍ່ສົມກະສັດໄທ້ ເຮືອນສູງເສົາຊຸຣນ
ຢ້ານບໍ່ສົມແຜ່ນຜື້ນ ຜືນເສື່ອນ້ອງນຸ່ງມາ.

294-313	ອ້າຍປີ້ ເໝືອນດັ່ງກວຽນກິງຮ້າງ ງົວບໍ່ທຽມແກ່ໃຫ້	ບໍ່ມີງົວທຽມແກ່ ກວຽນຊິຄ້າງໃຕ້ລ້າງເຮືອນ.
295-314	ຫລືວ່າ ໝາກສົ້ມບໍ່ຕ້ອງຕາ ທືວມັນແກວ	ໝາກສີດາບໍ່ຕ້ອງແຂ້ວ ບໍ່ຕ້ອງປັ້ນເຂົ້າໃຫ້ຍ.
296-315	ໝາກຜັກໄສ່ມັນບໍ່ສົ້ມຄືໝາກຕ້ອງ	ຂໍຫ້ອຍແດ່ທ່ອງເຄືອ.
297-316	ງາມຈັ່ງນ້ອງ ພໍໃຫ້ອ້າຍຫລົງລໍ່າ ພໍແຕ່ກາຍນອກຮົ້ວ	ສັງບໍ່ເດີນໄປຜ້າຍກາຍທົ່ວເຮືອນ ຕີນອ້າຍໄດ້ລໍ່າແຍງ ແດ່ທ້ອນ.

I. ລັກສະນະຄໍາກອນຜະຫຍາ ແລະ ກ້ຽວຕໍ່ແຍ :

ຄໍາກອນຜະຫຍາ ແລະ ກ້ຽວຕໍ່ແຍ ແມ່ນຂັ້ນຕອນທີ່ໝໍລໍາ ໝໍຂັບ. ໄດ້ສ້າງສັນ ພັນລະນາດ້ວຍບົດບາດວາດສີລະປະ ເລີ່ມແຕ່ລໍາຖາມ-ຕອບກັນຢ່າງຍືດຍາວ. ຂັ້ນຕອນທີ່ຂ້ຽວຂຸ້ນຈິງຈັງ ໝໍລໍາ-ໝໍຂັບ ຊາຍ-ຍິງ ຕ້ອງສວມບົດບາດເປັນ ບ່າວ ແລະ ສາວ ທີ່ມີອຸປະນິດໄສໃຈຄໍປ່ຽນລົ້ນໄປດ້ວຍພົມມະຈາລີ ສະແດງຄວາມເຄົ່ງຄັດ ຕໍ່ຮີດຄອງປະເພນີ: ຮີດບ່າວຄອງສາວ. ຝ່າຍຊາຍຈະຕ້ອງພັນລະນາອອກຢ່າງເປີດອົກເປີດໃຈ ດ້ວຍຄໍາກ່າວກະສັນຂັນອາສາ ສະແດງອອກເຖິງມິດຈິດມິດໃຈຂັນອາສາທຸກສິ່ງຢ່າງເພື່ອຂໍຄວາມຮັກຈາກຝ່າຍຍິງ ສ່ວນຜູ້ຍິງຈະຊອກຫາຄໍາຕອບຝ່າຍຊາຍປ້ອງກັນປັດປ່າຍ ຫລີກລຽງບໍ່ໃຫ້ຝ່າຍຊາຍລາມປາມລ່ວງລໍ້າ ສິດທິຂອງຜູ້ຍິງທີ່ໂອບອ້ອມດ້ວຍຮີດຄອງນານາປະການ. ບາງຄັ້ງກໍ່ມີການຢອກຫລິ້ຕໍ່ແຍປະກອບມີໝໍຈ່າຍຜະຫຍາຍ່ອຍໝໍສອຍເພື່ອເສີມໃຫ້ໝໍລໍາຝ່າຍຊາຍ-ຍິງສ້າງເສີມໃຫ້ບັນຍາກາດໃນວົງການໝໍລໍາມີຄວາມໝາຍເລິກເຊິ່ງດ້ວຍຖ້ອຍຄໍາຜະຫຍາສ້າງຄວາມຕິດໃຈ ເປັນຄະຕິສອນໃຈ ຊ່ວຍສຶກສາສັງຄົມອີກແບບໜຶ່ງ. ໃນການບັນທຶກຂໍ້ຄວາມ ແລະ ຄໍາຜະຫຍາໄວ້ດ້ວຍວາດເຊີງແຫ່ງວາທະສີນ ອັນສະຫລາດແຫລມຄົມ, ກະທັດຮັດແຕ່ຫາກມີຄວາມໝາຍອັນຍືດຍາວສະທ້ອນໃຫ້ເຫັນອາດີດ-ອານາຄົດອັນຮຸ່ງເຮືອງ ທາງດ້ານສີລະປະວັນນະກໍາຂອງປະຊາຊົນບັນດາເຜົ່າມາ ແຕ່ເຫິງນານ.

ຕົວຢ່າງ: ກອນຜະຫຍາຕອນອ່າວກະສັນ ແລະ ກັຽວຕໍ່ແຍະ:

297-317(ຍິງ) ຢ້ານແຕ່ບຸນບໍ່ຮອດ
ຢ້ານແຕ່ກຽວບໍ່ຢືນ
ຢ້ານແຕ່ຍອດບໍ່ກັຽວ
ຢ້ານແຕ່ຂາດຖຸອງກັນ
ແສນຊິຝັ້ນກໍ່ເລົ່າມາຍ.

299-318 ຝົນຕົກຍັງຮູ້ເອື້ອນ
ບາດນ້ອງຄິດຮອດອ້າຍ
ກົບກິນເດືອນຍັງຮູ້ອີ່ມ
ບໍ່ມີເອື້ອນອີ່ມເປັນ.

300-319 ຄິດໄປຫລາຍບັບມື້ຫຍຸ້ງ
ຄືກັບມີດແປດດ້ານ
ຄືໄພຫນາແສນຍ່ານ
ທາງຊິເວັ້ນກະບໍ່ມີ.

301-320 ເຈັບອີກປານໄຟໄຫ້ມ
ເກົ້າແມ່ນ້ຳສິບແມ່ນ້ຳ
ເຈັບຫົວໃຈປານຟ້າຜ່າ
ມາຕຸ້ມກະບໍ່ເຍັນ.

302-321 ໃນໃຈນ້ອງ
ຊິເອົາແສນແມ່ນ້ຳ
ກໍສັນດຽວໂດຍດັ່ງ
ມາຮົມໄວ້ກະບໍ່ເຍັນ ອ້າຍເອີຍ.

303-322 ຍາມເມື່ອຄິດຮອດອ້າຍ
ເຂົ້າບໍ່ຕົກຮອດທ້ອງ
ເປັນນອນໆນັ່ງໆ
ກໍ່ຍັງເອື້ອມອີ່ມເອງ.

304-323 ບາງເທື່ອນ້ອງໄດ້ລຸກນັ່ງໄຫ້
ຄອນໆລັບລົງໄດ້
ຝັນວ່າຊ້າງເຜືອກແກ້ວ
ຈົນແຈ້ງບໍ່ໄດ້ນອນ
ຊ້ຳຝັນໄປລາຍຕ່າງ
ຍົມ້ອນມອບໆາ.

305-324 ຄິດຮອດອ້າຍ
ຕາງອີນຍານດວງໃຈ
ສ່ວນທາງກາຍໄກລ້ຳ
ລົງລາຍຂີດຂຽນສານ
ສົ່ງມາຫາອ້າຍ
ຈິດໃຈໃກ້ນໍ່ ຊາຍເອີຍ.

306-325(ຊາຍ) ອ້າຍນີ້ ຄິດຮອດນ້ອງ ບາຍເອົາແວ່ນມາແຍງ
ຄືຊິເຫັນຈອມແພງ ນັ່ງທຣມເວົ້າອ້າຍ.

306-326 ຄິດຮອດນ້ອງ ມື້ຫນຶ່ງສາມຍາມ
ຍາມຫນຶ່ງນັ້ນ ເວລາຄວາຍຕອນແຫລ່ງ
ຍາມສອງນັ້ນ ເວລານ້ອງກິນເຂົ້າ ຕອນພາແລງຮ່ວມແມ່
ຍາມສາມນັ້ນ ເວລານ້ອງຈັບຫລາຝ້າຍ ເປຍລາຍລົງຂວ່ງ.

307-327 ຄິດຮອດນ້ອງ ເປັນເຣເຣຮ່ອນ ໆ
ຫມົດຄິດນອນນັ່ງແລ້ວ ມີແຕ່ໄຫ້ໃສ່ຫມອນ.

308-328 ຄ່ຳມາພໍປານນີ້ ນ້ອງກິນເຂົ້າແລງງາຍແລ້ວ ຫລືບໍ່
ເວລານ້ອງກິນເຂົ້າ ເຊີນຂ້ອນອ້າຍກິນແດ່.

309-329 ລາງເທື່ອຂ້ອນອ້າຍຂີ່ໄກ່ໂຈ້ນ ມາໂຕນເຂົ້າຮ່ວມແລງ ນ້ອງແລ້ວ
ຄັນແມ່ນໄກ່ຂັນທ້າວ ທາວຫາຂ້ອນນ້ອງມາຢູ່ ຄືງແລ້ວ.

310-330 ນ້ອງແນວມັດສາເຊື້ອຊີວຊະແວງ ລົດຫລາດ ກໍ່ຕາມທ້ອນ
ອ້າຍຊິຕາຍເປັນຝາກະຕາດຕ້ອນ ຕັ້ນຫນ້າບໍ່ໃຫ້ລົງ.

311-331 ນ້ອງຊິຕາຍເປັນຝ້າຍ ຫລາໃນໃຫ້ເຂົ້າແກ່ວງ
ອ້າຍຊິຕາຍເປັນໄມ້ຄຳຝັ້ນ ພັນກົ້ງກ່ອມແພ.

312-332(ຍິງ) ອ້າຍຢ່າຫຽວທາງເວົ້າ ເທິງຫລາຍມັນຊິຄ່ຳ
ໃຫ້ອ້າຍກຳຫວ່າງຂໍ້ ໃຫ້ອ້າຍຫຍໍ້ເລົ່າເລື້ອງ.
ໃຫ້ອ້າຍເວົ້າສັ້ນໄວ້ ເຫັນບັ້ນບ່ອນຊິເອົາ ແດ່ທ້ອນ.

313-333 ຊາດທີ່ເຊື້ອຫມາກຕ້ອງ ບໍ່ທ່ອນຫລິ້ນໄກກົກ
ຊາດທີ່ແນວຜົມດົກ ບໍ່ທ່ອນແປນເປັນລ້ານ.

314-334 ເຈົ້າຜູ້ໂຢ້ຊີ່ຕີນ   ມີນທີບຣົ່ມໃຫ່ຍ
ຄັນບໍ່ໄດ້ຢູ່ຊ້ອນ   ນ້ອງຂໍເຂົ້າເຜິ່ງເງົາ ແດ່ທ້ອນ.

315-335(ຊາຍ) ເຈົ້າຕ່ຽງຫລັງຽງ   ເຈົ້າຜູ້ນອນເທິງຕຽງ
ຄືຊິລືມສາດໄມ້ໄຜ່
ໄດ້ຝລັ່ງ ແລະ ທັ້   ຫອມເຈົ້າຢູ່ຍັ້ງຍາມ ຊັ້ນບໍ !
ຄັນຝລັ່ງບໍ່ເອື້ອ   ກັບເມືອບ້ານຊິນັ່ງເຫງົາ ນ້ອງເຮີຍ.

316-336 ມາເອົາຜືວທະຫານມ້າ   ຊາຕານ້ອງຕົກຕ່ຳ
ເອົາຜືວໄດ້ຍົດຮ້ອຍ   ເປັນເມຍນ້ອຍກະບໍ່ແຫນງ ເປັນບໍ!

317-337 ສິບປີລ້ຳຊາວປີລ້ຳ   ຈື່ງນຳຄວາມປົງຮອດ
ເຂາະຂອດ ຄວາມມັກຫມັ້ນ   ຜັນກັຽວຫນ່ຽວກະສັນ.

318-338 ເຈົ້າຜູ້ມີແອບແລ້ວ   ຢ່າຟ້າວເປີດລືມກັບ
ຢ່າຟ້າວລັບຕາຊັ້ງ   ບໍ່ຢາກຈາດອມຂ້ອຍ.

319-339 ເຈົ້າຜູ້ມີສາຍຫ້ອຍ   ຄະນິງເຖິງສາຍຊົ້ງ ແດ່ທ້ອນ
ເຈົ້າຜູ້ມາອັ້ງນ້ຳ   ໃຫ້ສະໂຊໃສ່ໂນນ ແດ່ທ້ອນ

320-340(ຍິງ) ອ້າຍຢ່າປູກຫມາກກ້ຽງ   ຮຽງກົກສົ້ມປ່ອຍ ຫລາຍເດີ
ຕົວະເທື່ອເລັກ ເທື່ອນ້ອຍ   ໃຫ້ນາງມ້ອຍສະແມ່ງນ້ຳ.

321-341 ນ້ອງນີ້ເຫມືອນດັ່ງປາເຂັ້ງຂ້ອນ   ກາງນາຢ້ານຕາຍແດດ
ຜົນບໍ່ມາສົ່ງໃຫ້   ຊິຕາຍຄ້າງແກ່ນາ ນ້ອງແລ້ວ.

322-342 ເຈົ້າຜູ້ຕົ້ນດອກງິ້ວ   ຄະນິງຮອດປ່າຫຍ້າຄາ
ເຈົ້າຜູ້ສັກກຸນານົກ   ຢ່າໄດ້ໄລເສຍແຮ້ວ

ເຈົ້າຜູ້ແນວໜ່ວຍແກ້ວ   ຢ່າໄດ້ເປີດດີນຊາຍ
ເຈົ້າຜູ້ແນວຄວາຍເຂົາ   ຢ່າໄດ້ລືມຄວາຍຕູ້
ເຈົ້າຜູ້ມີໝື່ນຊູ້   ຢ່າໄດ້ເປີດຄຳສະເໜ
ມັນຊິເປັນເວນກຳ   ບາບຊິນຳທັນແທ້
ເຈົ້າຜູ້ມີແປແລ້ວ   ປາຍກອນນ້ອງຊໍກ່າຍ
ຢ່າຟ້າວປັດປ່າຍຍູ້   ສະແດງຂວ້ຳຕະເລີນຊີນ ອ້າຍເອີຍ.

323-343 ອ້າຍໄປຄ້ານ້ຳເຜີ້ງ   ເຫີງປານຈັ່ງຊິຕ່າວ
ຫລືວ່າ ອ້າຍໄປຄ້ານ້ຳອ້ອຍ   ເຢັນຈ້ອຍບໍ່ຕ່າວຄືນ ຊັ້ນບໍ.

324-344 ນ້ອງນີ້ຄອຍຖ້າອ້າຍ   ຄືນົກເຈົ່າຄອຍປາ
ຄືນົກທາຄອຍປອກ
ຄືລູກຣອກຢູ່ນ້ຳ   ຄອຍຖ້າແຕ່ທ່າຝົນ.

325-345(ຊາຍ) ເດີກມາພໍປານນີ້   ຟັງສຽງນົກເຄົ້າກູກຮ້ອງ
ໃຫ້ນ້ອງໝັ້ນຖາມຫາ
ຄັນຍິນກາເວົ້າວອນ   ໃຫ້ນ້ອງໝັ້ນຖາມຂ່າວ
ຄັນຮອດມືດຊຸ້ມລ້າວ   ໃຫ້ໝັ້ນຄອຍທາງ ແດ່ທ້ອນ.

326-346 ຄັນແມ່ນອ້າຍຕົວະນ້ອງ   ໃຫ້ນົກຈິບຕາຍຕາງ
ໃຫ້ນົກຍາງຕາຍປ່ຽນ
ອ່ຽນຢູ່ນ້ຳ   ໃຫ້ຕາຍຊ້ຳຊູ່ຕົວ.

327-347 ຢ້ານແຕ່ຕົວະໃຫ້ອ້າຍລົ້ມ   ລົງງົມນ້ຳເຂົ້າໜ່າ
ຕົວະໃຫ້ອ້າຍຢ່າຊູ້   ມາແລ້ວວ່າບໍ່ເອົາ !

328-348(ຍິງ) ສິບປີນ້ອງຊິຖ້າ   ຊາວພັນສານ້ອງຊິຢູ່
ຄັນບໍ່ໄດ້ຜູ້ຈັ່ງອ້າຍ   ບໍ່ເອົາຊ້ຳສຳຜົວ.

329-349 ຄັນແມ່ນເຮືອຄາແກ້ງ   ແປງຫົວໃຫ້ມັນຄ່ອງ
ທາງຫົວອ້າຍຢ່າຍ້າຍ   ທາງທ້າຍ ອ້າຍຢ່າເວ.

330-350 ຢ້ານແຕ່ອ້າຍນັ້ນແລ້ວ   ປຽບຄືຄວາຍເຖີກເຖົ້າ
ປະສົງກິນແຕ່ຍອດຖົ່ວ
ຜັກຫອມບົ່ວມີບໍ່ແພ້   ຄວາຍເຖົ້າບໍ່ປະສົງ.

331-351 ບໍ່ຕ້ອງສິງໄສແລ້ວ ແນວເກືອບໍ່ທົ່ວແຣດ
ຖິ້ມໃສ່ນ້ຳແປດມື້ ຢ່າຄອງທ້ອນວ່າຊິຈາງ.

332-352(ຊາຍ) ອ້າຍນີ້ອອກຈາກບ້ານ ເອົາປ່າເປັນເຮືອນ
ເອົາເດືອນດາວ ຕາງແສງກະບອງໄຕ້
ຫັກຟືດໄມ້ ຕົ້ນສູງມາຮອງນັ່ງ
ຫັກຟືດໄມ້ ຕົ້ນຕ່ຳມາປູນອນ
ສາດບໍ່ໜອນ ຫົວຊອນປ່າຫຍ້າ
ແຜຂາວມ້າ ປູແລ້ວເລົ່ານອນ
ທາງຫົວແມ່ນມືດສັ້ນ ທາງຕີນແມ່ນມືດງ່າມ
ທາງຫລັງ ແມ່ນມືດເຫລື້ອມ ທາງໜ້າຜັດມືດຄັນ.

333-353 ທຸກຊາດໜຶ່ງ ຍືມເຂົ້າເຜີ່ນມາກິນ
ທຸກຊາດໜຶ່ງ ເສຍແຜ່ນດິນເມືອງບ້ານ
ທຸກຊາດໜຶ່ງ ຕ້ານຊູ້ທາງໂກ.

334-354 ຄັນແມ່ນນ້ອງຕົວະອ້າຍ ຄັນແມ່ນນາງພາງອ້າຍ ໃຫ້ສາຍເວນນຳຈ່ອງ
ນ້ອງຜິດຄອງພະເຈົ້າ ມຸສາລໍ້ລາຍພາງ
ຂໍໃຫ້ເປັນລາງຮ້າຍ ອັນຕະລາຍ ຫລາຍແງ່
ໃຫ້ເປັນລາຍຄືກັບແກ້ ເປັນແປຄືໂຕບາງ
ໃຫ້ເປັນງວງດັ່ງຊ້າງ ຄາງຮ້ອງດັ່ງຊະນີ.

335-355 ຄັນແມ່ນນ້ອງຕົວະອ້າຍ ບາດຮ່ານາງຕາຍໄປ ໃຫ້ເປັນຜີກອງກ່ອຍ
ມີແຕ່ຮ້ອງຈ້ອຍໆ ຢູ່ດົງກ້ອາງຜູດຮອ.

336-356(ຍິງ) ຄັນແມ່ນອ້າຍຕົວະນ້ອງ ໃຫ້ກ່າຍກອງໂຮມບາບ
ໃຫ້ອ້າຍທາບແຍ່ງແຍ້ ຈົນຫລັງຄ້ອມ ກ່ອນບໍ່ເຖີຍ
ໃຫ້ອ້າຍເປັນຂາກຸ້ນ ປາກແວ່ງມະເຮັງເກາະ
ເປັນມະລໍງວັດ ດັ່ງເສືອພັນໄມ້.

336-357 ຢ່າຢ້ານເນີ ສ່ຳນ້ອງຊິມີຜົວ ຢ່າກົວເນສ່ຳນ້ອງຊິມີຊູ້
ຄັນແມ່ນນ້ອງມີຊູ້ ນ້ອງບໍ່ອອກເຮືອນຄົວ
ຄັນແມ່ນນ້ອງມີຜົວ ນ້ອງບໍ່ອອກກ້ອງລ່າງ
ນ້ອງຊິນອນແນບຂ້າງ ປະສົງກົ້ງກ່ອນແຕ່ຜົວ.

337-358 ໄມ້ເຮັຍບ້ານນ້ອງ ກໍຍັງເປັນປ້ອງຍົກຢູ່ດອກ
ໄມ້ທົກບ້ານນາງ ກໍ່ຍັງເປັນປ້ອງຖີ່ຢູ່ໜາ !
ນ້ອງນີ້ຍັງຢູ່ໝັ້ນ ດອມແມ່ຄາບງາຍ
ນ້ອງນີ້ຍັງຢູ່ໝັ້ນ ດອມຊາຍຂອບນີ້.
ຍັງບໍ່ທັນມີຜູ້ຈັບຫົວຂາຍ ບໍ່ທັນມີຜູ້ບາຍຫົວບອດ
ບໍລິສຸດລ່ອຍຊ່ອຍ ເຊີນອ້າຍຜູ້ປະສົງ.

338-359(ຊາຍ) ອ້າຍນີ້ຕໍ່ ຄະນິງຢາຢ້ານ ຕ້ານຕໍ່ທັງເກງໃຈ
ຂ້າງພຸ່ມໄມ້ຢ້ານມີສຽງກາ ຂ້າງປ່າຄາຢ້ານມີສຽງແອ້ວ
ຢ້ານຊູ້ນ້ອງນັ່ງແຜ້ວ ປະຈານດ່າຂ້ອນຊາຍ.

239-360 ກົກໄມ້ໃຫ່ຍບໍ່ມີຜີ ສາວຜູ້ດີບໍ່ມີຊູ້ ຄອງຕາຍຟ້າຊິຜ່າເສຍນໍ

340-361 ມາເຫັນເຂົ້າບ້ານນ້ອງ ອ້າຍພັດຄຶດຢາກກິນ
ມາເຫັນດິນເມືອງນາງ ອ້າຍມາຄຶດຢາກຢູ່
ມາເຫັນນ້ອງຜູ້ຮູ້ ພັດຢາກກ່າວອົມເອົາ.

341-362 ໄມ້ເຮັຍຫລີໄມ້ປາວ ສາວດາຍຫລີຊູ້ເຜີ່ນ
ຫລີວ່າພຸ້ນກໍ່ຊູ້ຜີກໍ່ຊູ້ ດາລ້າບໍ່ແຕ່ງດອງ ຊັ້ນບໍ.

342-363(ຍິງ) ຢ້ານແຕ່ປ່າຫຍ້າແຝດ ບໍ່ພຽງຫລັງຄວາຍ
ຢ້ານແຕ່ປ່າຫຍ້າຫວານ ບໍ່ພຽງປາຍອ້ອຍ
ຢ້ານແຕ່ຂ້ອຍຜູ້ຮ້າຍ ບໍ່ສົມອ້າຍຜູ້ງາມ ຊ້ຳແລ້ວ.

343-364 ຄັນບໍ່ໄດ້ເປັນຝ້າຍ ນ້ອງຊິຂໍເປັນເປຍ
ຄັນບໍ່ໄດ້ເປັນເມຍ ນ້ອງຊິຂໍເປັນຊູ້
ຄັນບໍ່ໄດ້ຢູ່ຊ້ອນ ນ້ອງຊິຂໍເປັນຄົນລ້ຽງຄວາຍ
ສ່ວນວ່າແລງງາຍນັ້ນ ເອົາແຕ່ຊາຍຊິປັນແບ່ງ
ນ້ຳແກງໝົດຕ່ອນແລ້ວ ຕົວນ້ອງກໍ່ຊິກິນ ດອກນາ.

344-365 ອ້າຍຢ່າມາຢອກນ້ອງ ນ້ອງນີ້ບໍ່ແມ່ນລູກອິງກາຍ ບໍ່ແມ່ນນາຍອິງກ້ອນ
ນ້ອງເປັນຄົນຊາວບ້ານ ລາດສະດອນຍົດຕ່ຳ
ອ້າຍບໍ່ຄວນຊິຫຍ້ ຍໍຊື້ນຍ້ານໂທດທັນ.

345-366(ຊາຍ) ອ້າຍໄດ້ຕັ້ງໃຈລຸກ ແຕ່ບ້ານມາຫາ
ອ້າຍໄດ້ຕັ້ງໃຈລົງ ແຕ່ເຮືອນມາເວົ້າ
ຫວັງຊິເອົາເປັນເຫວົ້າ ເນຍຂວັນເທົ້າເຊັ່ນ
ອ້າຍຈຶ່ງພະອິງເຕັ້ນ ມາພີ້ເພື່ອຈາ ນ້ອງແລ້ວ.

346-367 ອ້າຍບໍ່ໄດ້ຕົວະໃຫ້ນ້ອງ ຈົກໂກນນົກໃຫ້ງູຕອດຕາຍ
ບໍ່ໄດ້ຕົວະໃຫ້ນາງບາຍ ຫົວເສືອໃຫ້ມັນກິນຊື້ນ
ອ້າຍບໍ່ເວົ້າຕ່າວປີ້ນ ຄືດັ່ງຝາມື ນ້ອງເອີຍ !

347-368 ຫລືວ່າສິບລວງຊ້ອນ ບໍ່ທີ່ຫນື່ງລວງໄຊ
ຫລືວ່າສິບບ່າວໄທໄກ ຊາວບ່າວໄທໄກ ບໍ່ທີ່ບ່າວຮ່ອມບ້ານ
ສິບຜູ້ມາກ່າວຕ້ານ ຊາວຜູ້ມາກ່າວຕ້ານ ບໍ່ທີ່ຊູ້ນ້ອງຢ່າງກາຍ ຊັ້ນບໍ.

348-369 ຄຳປາກ ອ້າຍໄດ້ເວົ້າຕໍ່ນ້ອງ ບໍ່ຫວັງປອງໂດຍງ່າຍ
ອິດສາຈາຄອມຊາຍ ບໍ່ຫວັງວ່າຊິໄດ້ຊູ
ບໍ່ອິດູອ້າຍແທ້ ໃຫ້ນ້ອງສະໃສ່ໄຟ
ຈຶ່ງຄ່ອຍໄຫລໃສ່ນ້ຳ ທາງຫນ້າຊິບໍ່ຂວາງ ດອກຫນາ.

350-370 ອ້າຍມັກນ້ອງມັກທັງກົກຜົມດຳ ມັກທັງລຳຄີງສ້ອຍ
ມັກທັງຫນ່ອຍຕາແກ້ວ ແອວກົມຄືວກົ່ງ
ມັກທັງຊີງວາດເວົ້າ ຂອງນ້ອງຄູ່ຊູ້ອັນ.

351-371 ນ້ອງອາບນ້ຳເຫມືອງໃດເດ ຈຶ່ງວ່າຂາວຄືໄຂ່ ຈຶ່ງວ່າໃຫມ່ຄືຄຳ
ອ້າຍຜູ້ດຳຄືກາ ອາບນ້ຳມາຕີນບ້ານ.

352-372 ອ້າຍຢູ່ທາງທິດໂຕ້ ໄດ້ຖືກກິ່ນຫອມມາ
ອ້າຍຢູ່ທິດບົວລະພາ ໄດ້ຖືກກິ່ນຫອມເອົ້າ
ອ້າຍຈິ່ງເອົາຕີນເຊົ້າ ເດີນດົງດັ້ນຮອດ
ເມື່ອມາເຫັນຍອດແກ້ວ ໃຈອ້າຍປອດກະສັນ.

353-373(ຍິງ) ຄັນນ້ອງຄິດຮອດອ້າຍ ໃຫ້ເອົາຫຍັງມາເບິ່ງ
ຄັນຊິປັ້ນຮູບເຜິ້ງ ເບິ່ງແລ້ວຜັດບໍ່ຄື ອ້າຍເອີຍ.

354-374 ອ້າຍລົງເຮືອນມາຫລັ້ນ ບໍ່ໄດ້ເຮັດຕີນພະລິກບໍ
ນົກຈິກບໍ່ໄດ້ບິນຜ່ານທາງ ນົກຍາງບໍ່ໄດ້ບິນຜ່ານໜ້າ
ຊູ່ອຸ່ນຫລ້າ ບໍ່ໄດ້ສັ່ງສັນໃດ ບໍນໍ !

355-375 ອິດສາລັຽງຄືນໄຂ້ ຍັງຊິໄຄກ່ວາລັຽງຄືນປ່ວຍ
ອິດສາຊ່ວຍລັຽງໄວ້ ຍັງຊິໄດ້ຊ່ວຍແຮງ.

356-376 ນ້ອງນີ້ເຫມືອນດັ່ງໄມ້ ລຳດຽວຕົ້ນປ່ຽວ
ເຄືອບໍ່ກ້ຽວລຳຄົ້ວ ຢູ່ປ່ຽວດາຍ
ເຄືອບຸ່ມກ້ຽວ ເຄືອບຸ່ມຊ້ຳຜັດມາຍ
ເຄືອຫວາຍກ້ຽວ ເຄືອຫວາຍຊ້ຳຜັດເນົ່າ
ຄັນແມ່ນຊູ້ເກົ່າກ້ຽວ ຕົວນ້ອງບໍ່ສະຫງວນ.

357-377(ຊາຍ) ອ້າຍນີ້ປຽບດັ່ງບົວບານບ້າງ ກາງສະພັງບໍ່ມີຄູ່
ແມງຜູ້ພັນບໍ່ມາຊ່ວຍກ້ຽວ ບົວຊິຄ້າງເຄິ່ງວັງ.

358-378 ແຜ່ນດິນໄຂ້ ຊິເອົາຫຍັງມາທີ່ມ
ແຜ່ນດິນອອກຫມາກໄມ້ ຮາກຢາແກ້ແມ່ນອີ່ຫຍັງ.

359-379 ເຂົາວ່າ ດາວສະເດັດຄົ້ວ ບໍ່ຫມາຍລົງເກືອກຂີ້ຝຸ່ນ
ຄືກັນກັບອຸ່ນນ້ອງ ບໍ່ຫມາຍຊ້ອນບ່າວຟີຊາຍ.

360-380 ທຳມະຊາດໄມ້ ໃນດົງເຕັມປ່າ
ແນວເປັນຢາແກ້ໄຂ ໂພຍຮ້າຍກໍຫາກຫລາຍ.

361-381 ເຈົ້າຜູ້ດຳດອນຖົ້ວ ເອົາຜົວມາລ້ຽງແມ່
ຄັນຄຸບໃສ່ບໍ່ມາ ຄັນຄວາໃສ່ບໍ່ໄດ້
ໄວ້ບ່ອນໃດບໍ່ພໍ້ ເອົາອ້າຍກໍ່ຫາກເປັນ.

362-382 ເຈົ້າອີ່ງຕີ່ງ ເຈົ້າຜູ້ຕິ່ງມັນແກວ
ເຈົ້າຜູ້ແນວມັນຫມີກ ຢ່າໄດ້ໄລສຽມທັຽມ.

363-383(ຊາຍ) ເຈົ້າອຸ່ມຫລຸ້ມ ຊຸມຂີ້ຍາງຄີຊີໃຫ່ຍ
ຄັນຕັກເຮັດເຫລັ້ມໂຕ້ ຄີຊີໄດ້ຫມື່ນກະບອງ.

364-384 ອັດຕະປືປື້ງ ຊາຍຄຳແລກຂີ້ໄກ່
ປິ່ງພະໂພຂີ້ໄຮ້ ຊາຍຊ້າງແລກກະບອງ
ຫົວຫຍອງລົ້ງມຸດນ້ຳ ຄຳຄ້າງເທື່ອຂະຫນານ.

365-385 ອັດຕະປືບ່ອນບ້ານ ຕຳນານແຜ່ນດິນຄຳ
ຂໍຝາກຄຳຄືນຄາຍ ຈ່າຍຜະຫຍາຍ້ຍ້ອງ
ລາວທັງສອງ ຈິ່ງສົມດ້ານ ສະເຫນີຄຳສືບຫລ່າ
ຂໍລາລົງທໍ່ນີ້ ເວທີຕ້ອຍຕອບຜະຫຍາ ທ່ານເອີຍ.

ຫມວດ IV

I. . ກອນລຳພະຫຍາ ຕອນກ້ຽວສັ່ງລາ :

ກອນລຳຜະຫຍາກ້ຽວສັ່ງລາ ລະຫວ່າງຄູ່ຫມໍລຳຊາຍຍິງ ຫລື ຫມໍລຳກ່າວຄຳອຳລາສະຖານທີ່ບ່ອນລຳ. ຖ້າແມ່ນສະຖານທີ່ເປັນລັກສະນະນັບຖື ເຊັ່ນ:ງານບຸນວັດ ແລະ ປູຊະນີຍະສະຖານຫມໍລຳກໍ່ກ່າວຄຳສົມມາຄາລະວະຂໍອະໄພຍະໂທດ. ຖ້າມີເຖົ້າແກ່ຜູ້ຊີງຄຸນວຸດທິລັດຖະກອນຊັ້ນຜູ້ໃຫ່ຍຕະຫລອດທັງຜູ້ຟັງແລະເຈົ້າພາບຜູ້ຈັດງານປະເພນີຕ່າງໆກໍມີການກ່າວສະຫລອງອວຍພອນເຈົ້າພາບຜູ້ມີສັດທາສະຫລະວັດຖຸປັດໄຈ ເພື່ອການກຸສົນກໍ່ຄືສາທາລະນະປະໂຫຍດ. ດັ່ງຖ້ອຍຄວາມຄຳກອນຜະຫຍາດັ່ງນີ້:

366-386(ຍິງ) ບັດນີ້ ກໍ່ທາກສົມພໍແລ້ວ ຊິລໍາໄລລາລ່ອງ
ຂໍລາພວກພີ່ນ້ອງ ລຸງປ້າຄູ່ຊູ້ຄືນ.

367-387 ໃຫ້ອ້າຍເມືອດີທ້ອນ ຊາຍງາມສົມຊໍ່າ
ຄັນອ້າຍຂຶ້ນໂຄກສູງ ຄັນອ້າຍລົງໂຄກຄ້ອຍ
ຄັນອ້າຍຄອຍເມືອບ້ານ ຫລຽວຄືນຫລັງສັ່ງນາງແດ່.

368-388 ຢ່າມາຕິຖະແຫລງແປ້ງ ແປງເອົາແຕ່ບ່ອນນັ່ງ
ອ້າຍຫາກມັກຜູ້ອື່ນພຸ້ນ ຫາກມາຜົຽນໃສ່ອື່ນາງ.

369-389 ຢ່າມາຕິຖະແຫລງເວົ້າ ເອົາເລົ້າມາປູກ
ບໍ່ແມ່ນເຊື້ອລູກອ້ອຍ ກິນໄດ້ກະບໍ່ຫວານ.

370-390 ຢ່າມາຕິຖະແຫລງລົ້ມ ຕີນບໍ່ມີພະລາດຫມີ່ນ
ຢ່າມາຕິພະລາດລົ້ມ ເດືອນຫ້າກ່ອນຝົນ.

371-391 ອ້າຍນັ້ນຄືກັບນົກເຕັ້ນແຕ້ນ ສະເດັ້ນລົງເອົາກອ່ນ
ນ້ອງນີ້ຄືກັບນົກເຈົ່າລັ້ງ ຄອຍລ້າຢູ່ດາຍ.

372-392 ເຫລືອແຮງຮ້າຍ ຄວາຍບໍ່ຕາຍແຮ້ງສົ່ງມາເອີ້ນ
ກາບໍ່ມາຊ່ວຍແຮ້ງ ບິນໄດ້ກະບໍ່ແຮງ.

373-393 ເຫລືອແຮງອ້າຍຫ້າງ ກອງກັນຖືມບໍ່ໄດ້ທອດ
ບັດວ່ານ້ອງບໍ່ຫ້າງ ສົ່ງມາໄດ້ທອດທານ.

374-394 ອິດສາເຍື້ອນ ກິນຂີງຕາງຂ່າ
ອິດສາພໍ້ຜູ້ຮ້າຍ ຊາມພໍ້ເພິ່ນຜູ້ດີ.

375-395 ນ້ອງນັ້ນ ເໝືອນຄັ່ງໄໝຄຳຫຍຸ້ງ ໃນບຸງບໍ່ເຫັນເງື່ອນ
ແມ່ນອ້າຍຊຸກເຊື່ອງໄວ້ ຢ້ານເຫັນສົ້ນຄ່າວາ.

376-396(ຊາຍ) ນ້ອງຜູ້ມີສອງແລ້ວ ຊອນສາມບໍ່ທ່ອນເບື່ອ
ບາດວ່ານ້ອງນຸ່ງເສື້ອ ກໍ່ຍັງຊ້ອນແຜ່ນແພ.

377-397 ຄັນນ້ອງເປັນເມຍນ້ອຍ ເມຍປາຍລ້າງກະໂຕກ
ນ້ອງຫາກກິນ ຫາກລ້າງ ກໍ່ແສນຄ້ານບໍ່ທ່ອນຕາຍ.

378-398 ທາງຫລາຍເສັ້ນ ຕາມໃຈນ້ອງຊິໄຕ່
ນ້ອງຢາກໄຕ່ເສັ້ນເຮື້ອງ ເອົາແຕ່ນ້ອງຜູ້ຊິໄປ.

379-399 ສິບຍ່ານນ້ຳ ຊາວຍ່ານນ້ຳ ກໍ່ຊິຖໍ່ເຮືອຫາ
ສິບຍ່ານພູຍ່ານຜາ ກໍ່ຊິດັ້ນຫາກັນສະເໝີຕຸ່ມ.

380-400 ນາງຊິຂັນເປັນນ້ອຍ ເມຍປາຍສ້າງກະໂຕກ
ຖ້ອຍຢູ່ທີ່ງ ຊິຂັນລ້າງຊູ່ໃບ
ຄັນນ້ອງລ້າງໃບໃດ ຊິທັບນຳໃບນັ້ນ.

381-401 ຄັນບໍ່ໄດ້ເປັນຊູ້ ຊິຖູລົງເປັນສຽວ
ຄັນບໍ່ເປັນສຽວແທ້ ພໍໃຫ້ເປັນພີ່ນ້ອງ ທຽວຢື້ຍ່ອງຢາມ.

382-402 ເຈົ້າຜູ້ແພພື້ນກ້ວາງ ປູມາໃຫ້ມັນເຫລື່ອມ
ນ້ອງເຫລື່ອມອ້າຍ ອ້າຍເຫລື່ອມນ້ອງ ຄືຟ້າເຫລື່ອມຊີ້ດິນ.

383-403 ຈິດດຽວເປັນຫລາຍໄສ້ ໃຈດຽວເປັນຫລາຍໜ່ວຍ
ຈິດໜຶ່ງເປັນເສື່ອງຫລ້າງ ຄືນ້ຳໃສ່ກະປາງ.

384-404 ຢ້ານບຸນຫົວບໍ່ສົມຮົ້ວ   ບຸນງົວບໍ່ສົມຕ່າງ
ຢ້ານແຕ່ບຸນອີ່ນາງ   ມັ້ນບໍ່ສົມອຸ່ນອ້າຍ
ນ້ອງເປັນຜູ້ຂີ້ຮ້າຍ   ແສນຊິໃກ້ກໍເລົ່າໄກ.

385-405 ຕຶກຕາເຕີນໄປໜ້າ   ບໍ່ຄືນມາໃຫ້ຊາວເມືອງເຂົາຊ່າ
ໄດ້ກໍໜ້າບໍ່ໄດ້   ບໍ່ຫວັງເຕື້ອງຊິຕ່າວຄືນ.

386-406 (ຊາຍ)ອ່ຳທ່ຳຫຍັບໜີຫຍັບນຳ   ຕຳຝາຫາກຊິຮ້ອງ
ຕຳນ້ອງຫາກຊິຫົວ   ຊູ້ນ້ອງຍັງຄາຜົວນ້ອງຍັງຄາເອີຍ.

387-407 ເອົາສາຫລ້າ   ເອົາຜົວມາລ້ຽງແມ່
ຢູ່ໄປຫລາຍ   ຫຍ້າຂັດມັນຊິແລ່ນເຂົ້າຕາ
ດອກຫຍ້າຄາ   ມັນຊິແລ່ນເຂົ້າເກົ້າ
ໄມ້ຄ້ອນເທົ້າ   ມັນຊິແລ່ນເຂົ້າມື.

388-408 ບໍ່ມັກອ້າຍກໍ່ບໍ່ເວົ້າ   ບໍ່ເອົາອ້າຍກໍ່ບໍ່ວ່າ
ບໍ່ແມ່ນທ່າ   ອ້າຍບໍ່ຕິຄວາຍລິງ
ຕີລິງແລ້ວ   ຕີຄືນມັນຊິຍາກ
ມັນຊິລຳບາກອ້າຍ   ແສນຊັ້ນເວດທະນາ.

389- 409 ເອົາຜົວໄທທາງໃຕ້ບາດຍາມໄປ   ຢ້ານເຂົາຄາດແພລ່ອງ
ຄັນເອົາຜົວຮ່ວມບ້ານ   ຍັງຊິໄດ້ຝາກຫລານ.

390-413 ຄັນແມ່ນຊູ້ເພິ່ນແລ້ວ   ອ້າຍຂໍເວົ້າຕັ້ງແຕ່ໄກ
ຄັນແມ່ນໄຟເພິ່ນແລ້ວ   ອ້າຍຂໍຜີງຕັ້ງແຕ່ຖ່ານ
ຄັນແມ່ນຊູ້ຕ່າງບ້ານ   ອ້າຍຂໍຕ້ານຕັ້ງແຕ່ຄວາມ.

391-414 ເສື້ອ ແລະ ຜ້າ   ປີນກັນບໍ່ທ່ອນເປື່ອ
ເຮືອ ແລະ ນ້ຳ   ພາຍຂື້ນບໍ່ທ່ອນຂວາງ
ບ່ອນມັກຊ້ຳບໍ່ໄດ້   ບ່ອນຂືນໃຈພັດປ້ອງໃສ່.

392-415 ຄິດຮອດບໍ່ເດ
ທາງປາກເວົ້າຈ້ອຍໆ

ແຕ່ມື້ສອງເຮົາເວົ້າ
ຢູ່ຖຸຮງໄຮ່ບໍ່ມີຝາຢູ່ຖຸຮງນາ ບໍ່ມີຟາກ
ໃຈສັ່ນດັ່ງໝາກນາວ ຊັ້ນບໍ.

393-416 ຄິດຮອດບໍ່ເດ
ໃນຖຸຮງໄຮ່
ໃນຖຸຮງນາ
ແມ່ນ້ອງຈັບໄມ້ແສ້
ຫົວໃຈອ້າຍສະທ້ອນ

ແຕ່ມື້ສອງເຮົາເວົ້າ
ແມ່ນ້ອງນຳໄປຫາ
ແມ່ນ້ອງນຳໄປດ່າ
ແມ່ນ້ອງແລໄມ້ຄ້ອນ
ນ້ຳຕາຍ້ອຍຍ່າວລົງ.

394-417 ບໍ່ຄິດເຫັນບໍ
ໃນເດືອນສີ່ປີຈໍ
ເຮົາຍັງພາກັນຕ້ານ
ໝາກປາງລາງ

ແຕ່ມື້ເຮົາຍັງນ້ອຍ
ຕໍ່ໃສ່ກຸນເປັນລາງ ບໍ່ຢູ່ດີ ເມືອງບ້ານ
ອໍລະຫົນຢູ່ກອງລ່າງ
ນ້ອງບໍ່ທັນໄດ້ມຮຸນ
ໜີໄປຄ້າງໝັ້ນເຂົ້າແລງ.

395-418 ນ້ຳຂອງກ້ວາງຕໍ່ກ້ວາງ
ຄັນແມ່ນຫົວໃຈຄືນ

ໄມ້ຖີ່ຍັ້ງກໍ່ຍັງເຖິງ
ບໍ່ຍັ້ງເຖິງຖອງໄດ້.

396-419 ສິບແໜ່ງໄມ້ຊາວແໜງໄມ້
ສິບຊາວຜູ້ຢູ່ໃກ້

ບໍ່ປານແໜງໄມ້ໄຜ່
ບໍ່ປານນ້ອງຜູ້ຍ່າງກາຍ.

397-420 ສິບຜືນຜ້າ ຊາວຜືນຜ້າ
ສິບຜູ້ຢູ່ຊ້ອນຊາວຜູ້ຢູ່ຊ້ອນ

ບໍ່ໜາປານເນື້ອອຸ່ນ
ບໍ່ປານນ້ອງນັ່ງຮຽງ.

398-421(ຍິງ) ຜິດດ້ານຂໍ້
ໂທດບໍ່ທັນພໍຊ້າ
ຜິດດ້ານເລັກດ້ານນ້ອຍ

ຂໍທານນຳອ້າຍແດ່
ຢ່າພັນຄານມາໃສ່
ຂໍໃຫ້ອ້າຍບອກສອນ.

399-422 ນ້ອງປີ້ ບໍ່ໄດ້ບວດບໍ່ໄດ້ຂຽນ   ບໍ່ໄດ້ຮຽນບໍ່ໄດ້ອ່ານບໍ່ໄດ້ຜ່ານບືດແປ
ບໍ່ໄດ້ແຖທົ່ວເຂົ້າ   ໃນຄອງພຸດທະບາດ
ບືດໂອອາດບໍ່ຮູ້   ພໍ່ຄູນ້ອງກໍ່ແມ່ນຊາຍ.

400-423 ສິນສະຕິດ   ນ້ອງບໍ່ທັນເຂົ້າໃຈ
ສິນໄຊ   ຍັງບໍ່ທັນເຂົ້າຫ້ອງ
ສິນທອງບໍ່ໄດ້ອ່ານ
ບ່ອນໃດຜິດພາດພັ້ງ   ອະໄພທ້ອນບ່ອນບໍ່ງາມ.

401-424 ນ້ອງຜູ້ງາມຈັ່ງຊີ້   ແມ່ນ້ອງທານດອກພຸດທັງກໍ
ແມ່ນ້ອງທານດອກຍໍທັງຕົ້ນ   ຕົນນ້ອງຈຶ່ງຄ່ອຍງາມ ອ້າຍເອີຍ.

401-425 ເຂົ້າວ່າລາບໃສ່ເພີຍ   ຍັງບໍ່ຂື່ນປານບີ
ຄັນເອົາທົ່ວໃຈຕີ   ຜັດເນົ້າບູມໃນເນື້ອ.

402-426(ຍິງ) ປາກເນືອນຳອ້າຍບໍ່ແພ້ແລ້ວ   ຕົນນ້ອງເປັນທົ່ວເຕືອນ
ນ້ອງລົ່ງເຮືອນບໍ່ໄດ້   ນ້ອງຊິຂື້ນກົກໄມ້ເອັ້ນສັ່ງຊາຍເນືອ.

403-427 ຢ້ານແຕ່ປາດຸກບ້ອນ   ວັງບອນບໍ່ເຫັນບ່ອນ
ຢ້ານແຕ່ປາຈາດບ້ອນ   ກິນນ້ຳບໍ່ແມ່ນເອີນ.

404-428 ຄວາມທີ່ສັນຍາຫມັ້ນ   ພໍປານຕະປູແປດ
ຊິເອົາຄືນນຶກເຄົ້າ   ມາຫີ້ນກະບໍ່ຕືງ.

405-429 ທິດກໍ່ທິດໄມ້ຄານ   ຈານກໍ່ຈານໄມ້ຄ້ອນ
ຂະຫຍອນຊຽງລ້າງ   ແມ່ນຊຽງນ້ອຍສາກເຂົ້າເບືອ.

406-430 ທິດກໍ່ແມ່ນທິດເຂົ້າສານ   ຈານກໍ່ແມ່ນຈານເຂົ້າຫນື້ງ
ຊຽງຜູ້ຍັງຫນຸ່ມນ້ອຍ   ໄອຣຸ່ນຫນຸ່ມຄະນອງ.

407-431 ເອົາຜົວທິດ		ສານກະໂຕກກໍ່ໄດ້ຮຽນ
ເອົາຜົວຊຽງ		ສານທະບຽນກໍ່ໄດ້ມາງ
ເອົາຜົວພໍ່ຮ້າງພໍ່ໝ້າຍ		ຂອງເກົ່າເຄີຍເລີງ.

408-432(ຊາຍ) ນ້ອງຢາກເຫັນໃຈອ້າຍ		ໃຫ້ລອງເລຍເບິ່ງກົ້ນຕໍ່
ມັນຫາກເຈັບປວດຮ້ອງ		ໃຈອ້າຍກໍ່ດັ່ງດຽວ.

409-433(ຍິງ) ອ້າຍຢາກເຫັນໃຈນ້ອງ		ໄດ້ລົງຄອຍເບິ່ງນ້ຳກ່ຳ
ມັນຫາກຄິດຫາກລ້ຽວ		ໃຈນ້ອງກໍ່ດັ່ງດຽວ.

410-434 ນົກເຂົາລົງກິນເຂົ້າ		ທົວນາເລົ່າສັງບໍ່ໄລ່
ບາດຮ່ານົກກະປິດນ້ອຍໆ		ສຽງເຈົ້າບໍ່ຂາດສາຍ.

411-435 ຄາດຊິເປັນຕາໄດ້		ໝາກັບແມວພັດມາຜ່າ
ຄັນວ່າຮ່າບໍ່ກິນໄກ່ລ້ຽວ		ຊິເປັນເສືອບໍ່ຮຽງດຽວ.

412-436(ຊາຍ) ໃຫ້ນ້ອງໄຂປາກຖ້າ		ອ້າຍຊິວ່ຽງກະຍຸງຕັກ
ຄັນນ້ອງໄຂກະທໍ່ຢາ		ຊິຈີກຕອງມາພ້ອມ.

413-437 ອ້າຍນີ້ຫາກແມ່ນເຊື້ອຊາດຫຍ້າ		ຊິທຽມຢາງແຄນຄູ່ ເປັນບໍ
ບໍ່ຄອງໄດ້ຢູ່ຊ້ອນ		ແນວນ້ອງໝໍ່ເມືອງ.

414-438 ນ້ອງຜູ້ເຊື້ອຊາດນ້ຳ		ສ້າງໃຫ່ຍໃສເຢັນ
ໃຜຊິເປັນຄົນຕັກ		ເອົາອູ່ມຂັງເອົາໄວ້
ນ້ອງຜູ້ເຊື້ອຊາດໄມ້		ລຳຍາວປາວຊີ່
ຄັນມີເງີນອ້າຍຊິຊື້		ເອົາເມືອໄວ້ເຮັດມູນ.

415-439 ເຈົ້າຜູ້ຈັບໂທແຈ້ງ		ລາຫູສັງຈຳເງືອດ
ຊິງໃສ່ດາວຢູ່ຟ້າ		ພໍແຍງຟື້ນພ່ຳເດືອນ ຢູ່ເດ.

416-440 ຕອງຕັດຍັງມີສິ້ນ ຫວາຍສີວັງຍັງມີເງື່ອນ
ເຈົ້າຜູ້ເຊື້ອງເງື່ອນໄວ້ ພັດແມນສິ້ນຄ່າວາ

417-441 ຕົກຕາລົງລາຍສູ້ ອ້າຍຊິນຳເມືອຊູໃຫ້ເປັນໃພ້ ແມ່ຍາ
ບໍ່ໄດ້ເອີ້ນແມ່ບັກນ້ອຍ ເສຍແລ້ວເລົ່າບໍ່ຍອມ.

418-442 ອ້າຍນີ້ເຫມືອນດັ່ງກາດຳປີ້ ຈັບຕໍກາງທົ່ງ
ບໍ່ສົມທົ່ງຜ່ອງແຜ້ວ ຂາວຝ້າຍເຜົ່າພະຍາ.

419-443 ເຈົ້າຜູ້ເຊື້ອຊາດຊ້າງ ຍິດໃຫ່ຍສະກຸນສູງ
ຢ່າສູ່ລືມຄວາມພຣົມ ຜູ້ຂີ່ເທິງຄໍຊ້າງ
ຢ່າຊູ່ວາງໄລຖິ້ມ ດົງດອນປ່າໄມ້ໄຜ່
ໄດ້ຢູ່ໂຮງອາດກ້ວາງ ດອມເຈົ້າທ່ານຂຸນ.

419-444 ອ້າຍຢາກຍໍແຢງຂື້ນ ໄປປີນຕາຍເປັນແຢ່ງ
ຂໍເປັນແຫ້ລວງລ້ຽງຊ້າງ ນຳນ້ອງຜູ້ຢູ່ວັງ.

420-445 ຊາດທີ່ແມວຜົມດົກ ເຈົ້າຜູ້ກົກຜົມດຳ
ຄືຊິທຳພຣົມສ້າງ ຄອງມູນຄູນຮັ່ງ
ນາໂພນບໍ່ອັ່ງນ້ຳ ຍາມນ້ອງມາຢູ່ສ້າງ
ຊິຂຽວເຂົ້າດັ່ງເທົ່າ ນ້ອງເອີຍ !

421-446(ຍິງ) ຊິບໍ່ສົງສານຕີ ຄືນດຳປີ້ຄືຊາຍບໍ່ຢາກຮ່ອມ
ຄັນຟ້າກ່ຳຝົນຕົກຫນ່ຳ ນ້ຳຖ້ວມເຂົ້າຊິຈູງເຈົ້າ
ຂື້ນສູ່ໂພນ ນ້ອງເອີຍ !

422-447 ເຈົ້າຜູ້ຄິງກົມສ້ວຍ ຄືກະສວຍເຮືອນຫລອດ
ຄືຕ່ອນຄຳຢາດຍ້ອຍ ປະມານມື້ບາດຂັນ.

423-448 ເຈົ້າຜູ້ເຊື້ອຊາດນ້ຳ ກ້ວາງໃຫ່ຍວັງເລິກ
ອ້າຍຢາກລົງລອຍຊົມ ໃຫ້ສ່ວາງໃຈຫາຍຮ້ອນ.

24 / VII
ຫ້າມຈຳໜ່າຍ

424-449(ຍິງ) ປານໃດເດຊິໄດ້ ກິນເຂົ້າຮ່ອມພາ
ກິນປາຮ່ອມຖ້ອຍ ກິນກ້ອຍຮ່ອມຫວີ
ກິນປີຮ່ອມກາບ ອາບນ້ຳຮ່ອມວັງ :

425-450 ນ້ອງນີ້ປາດຖະໜາເຂົ້າ ພາຂວັນປ້ອນໄຂ່ໜ່ວຍ
ພໍ່ແມ່ນ້ອງບໍ່ມກ້ອຍ ຝານຂ້ອນໃຫ້ດ່ອນເຫລືອງ.

426-451(ຊາຍ) ໃຫ້ນ້ອງລະເຄືອກິາ ໃຫ້ນ້ອງຫລົກ ເຄືອກ້ຮວ
ແນວເປັນກອຍຂອງເກົ່າ ໃຫ້ມາກິນເຂົ້າເຫມົ້າ
ນຳອ້າຍຈຶ່ງຊິຫອມ.

427-452 ອ້າຍຂໍຕິດຂໍຫ້ອຍ ຂໍງອຍບ່ອນຫມີ່ນງ
ແຮມມື້ຕິດຈຶ່ງຄ່ອຍລ້າງ ເມືອຫນ້າຈຶ່ງຄ່ອຍໄລ.

428-453 ອ້າຍນີ້ເດີນທາງຮ້ອນ ຢາກຫາຊອມຊຸ້ນຮົ່ມ
ບໍ່ໄດ້ຊຸ້ນຮົ່ມກ້ວາງ ຝາງເຕ້ຍກໍ່ຊິເຊົາ.

429-454 ບໍ່ໄດ້ນ້ອງ ອ້າຍຊິໄປຮຽນເອົາຫວ້ານ ສະເໜນຈັນມາໃສ່
ຮຽນເອົາມົນສວດນ້ຳ ນຳນ້ອງດ່ອນຫນີ.

430-455 ແນວທີ່ໃຈປະສົງແລ້ວ ຫນາມກະແທວກໍ່ຊິຜ່າ
ຫນາມຊີອັ້ນ ພັນຊັ້ນກໍ່ຊິຖາງ.

413-456 ຄັນວ່າ ເຫລົ້າຈອກນີ້ ອ້າຍຂໍມອບຖະຫວາຍນາງ
ຄັນບໍ່ສົມໃຈສົງ ໃຫ້ຖອກເຫລືອນ້ຳ.

432-457 ອ້າຍນີ້ ກິວກໍ່ກິວຕັ້ງແຕ່ຄໍ ວໍກໍ່ວໍແຕ່ແຂນສອກ
ຢູ່ໃນຫ້ອງບໍ່ມີຕູ້ໃສ່ຜະຫຍາ

ດອມອາຈາດຄວາມເວົ້າ ກົງກັບໃຈບໍ່ທັນປຮມ
ຄວາຍແມ່ນຄວາຍບັກຕູ້ ສິນເຄົາແລ້ວຊິໄປ
ປີ້ງແລ້ວຈັບຈີ່ພ້ອມ ສຸກແລ້ວຈິ່ງຄ່ອຍກິນ ນ້ອງເອີຍ.

433-458 ບຸນບໍ່ມີສີບໍ່ໃຫ້ ເວົ້າຊູ້ໃດໄດ້ແຕ່ປ່ອຍ
ເວົ້າຜູ້ສາວມາເກືອບຮ້ອຍ ເມຍຊິຊ້ອນກໍ່ບໍ່ມີ

434-459 ຄັນຊິຫຍັບ ເຂົ້າໃກ້ ພັດຢ້ານກິດພວງຫລາ
ຄັນຊິຫຍັບເຂົ້າໃກ້ ພັດຢ້ານຫມານອງເທົ່າ
ຢ້ານແຕ່ຊູ້ເກົ່ານ້ອງ ມານັ່ງທາງຫລັງບັງຂ້າ
ຢ້ານແຕ່ຊູ້ເກົ່ານ້ອງ ມານັ່ງທາງທັນາບັງຟັນ
ອ້າຍນີ້ ບໍ່ສິນຄືນທອກ ຢ້ານແຕ່ຕາຍທາງຍືນ
ອ້າຍນີ້ ບໍ່ມີມີນຄົງປືນ ຢ້ານແຕ່ຕາຍເສຍລ້າ

435-460 ບໍ່ເຫັນຫນ້າ ເຫັນແຕ່ນາກໍ່ພີ່ຢູ່
ເຫັນແຕ່ແພພາດຮື້ວ ກໍປານໄດ້ນັ່ງນໍາ

436-461 ນົກພາກຄູ່ ກໍ່ຍັງຮ້ອງສຽງດັງ ກາພາກຮັງກໍ່ຍັງສົ່ງສຽງກ້ອງ
ບາດຮ່າອ້າຍພາກນ້ອງ ຄໍາດຽວບໍ່ເອີ້ນສັ່ງ
ຄັນບໍ່ເອີ້ນສັ່ງໃກ້ ກະພໍເອີ້ນສັ່ງໄກ.

437-462 ຫມາແມ່ແດງຮ້ອງແດ້ວງ ສະແທວງຫາກິນແຕ່ເຫຍື່ອ
ບາດຮ່າຖືກໄມ້ຄ້ອນ ຈິນວ່າສິນຕ່ອນຊີ້ນ
ຕາບໍ່ລ້ຽວເຫລືອດຫລຽວ.

438-463 ເປັນຫຍັງນໍເສີກບໍ່ເສືອ ສັ້ງມາແຕກຄືນລະດ້ານ
ຫມໍ້ບໍ່ທ້ານ ສັ້ງມາແຕກຄືນລະທາງ.

439-464ຊາຍ) ອ້າຍນີ້ ເຫມືອນດັ່ງມ້າຫມົດຫຍ້າ ຊົງມີງມ້າລາຍຍາດ
ຄັນແມ່ນນ້ອງບໍ່ລ້ຽງ ຊິໂຂ່ງທ້ອງຢູ່ດາຍ.

440-468 ເວົ້າດີຊິເປັນຮ້າຍ ຄຶນບໍ່ຕາຍສັງມາລາກຄໍແກ່
ອ້າຍມັກນ້ອງແທ້ງ ຈົ່ງມາເວົ້າກ່າວອືມ.

441-471 ອ້າຍຂໍທານໂທດທ້ອນ ຂໍເພິ່ງຊີວິດ
ຄວາມຜິດບໍ່ພຽງປາຍຕານ ຢ່າຟ້າວຟັນຄໍຂ້າ
ກະລຸນາອ້າຍແດ່ ໂທດໃສ່ແສ້ໃສ່ຄານ
ໃຫ້ນ້ອງທານໂທດໃຫ້ ຈໍາໃຊ້ບອກສອນ ເອົາທ້ອນ.

42-472 ໃຫ້ນ້ອງຜິດຈາຖ້ອນ ຂະບອນແຄມເອົາຕີນຢຽບໄປຫລີ
ຫລືວ່າເຫັນແກ່ຄວາມຄຽດແຄ້ນ ແລ້ວຍັງວາວຕາວຟັນເປັນບໍ.

443-473 ສຽງສະເທືອນອ້ອມຂ້າງ ໃຫ້ນ້ອງຄຶດແລເສິກ
ເສິກບໍ່ທັນມາເຖິງ ຊິແຕກເມືອງເພບ້ານບໍ່ເປັນດາຍ.

444-475(ຍິງ) ຄັນຕີຫລັງດ້ວຍໄມ້ຄ້ອນ ຊິເອົາມື້ມາລູບອ່ອຍເປັນບໍ
ແສນຫມື່ນບັ້ງນໍ້າອ້ອຍ ມາອອຍໄວ້ກໍ່ບໍ່ຟັງ.

445-476 ຄວາມປາກເຈັບແສບຮ້ອນ ຮ້າຍກ່ວາແກ່ນຂະຍູງຕີ
ແມ່ນຊິເອົາແສນຢາ ມາປິ່ນປົວບໍ່ຫາຍໄດ້.

446-477 ຄັນເປັນເຈັບເປັນໄຂ້ ປົວຢາດີ ກໍ່ຍັງສ່ວາງ
ເຈັບດ້ວຍຄວາມປາກອ້າຍ ເອົາຫຍັງແກ້ຈັ່ງຊິຫາຍ.

447-478 ຄວາມທີ່ເຈັບແສບແຄ້ນ ແມ່ນຕາຍໄປລືດຊົ່ວ
ແຜນດິນຖົມທັບຫນ້າ ເຈັບໃຈນ້ອງຈັ່ງສິ່ງຄືນ .

448-479 ເຫັນວ່າເປັນຍິງແລ້ວ ຊິມາບາຍເກົ້າປິ່ນເປັນບໍ?
ສິນຢູ່ຫົວຊິໂທດເຈົ້າ ຄອງເຄົ້າຊິບາບໃຫມເຈົ້າແລ້ວ.

449-480(ຊາຍ) ຢ່າຟ້າວຕັດໂທສາ   ໂທດຊາຍກາຍກະດໍ້
ໂທດບໍ່ທັນເຖິງກ້ານ   ເຖິງສານໃຫ້ຄ່ອຍອ່ານ
ບໍ່ຄືຄຳກ່າວຕ້ານ   ປານເບື້ອງນ້ອງວ່າມາ.

450-481 ເພິ່ນວ່າໂມໂຫນີ້   ຊິພາໂຕຕົກຕ່ຳ
ຂໍໃຫ້ຄຳຄ່າລ້ານ   ພະນາງນ້ອງຂີ່ມເພິງ

451-482 ໂທດບໍ່ທັນພໍຂ້າ   ຊິຟັນຄາມາໃສ່
ໂທດບໍ່ພໍຂື້ນກ້ານ   ຊິໂຍນເຂົ້າໃສ່ຕະລາງເປັນບໍ !
ໂທດຝລັ່ງມັນກໍ່ຍັງໂທສິກາ   ໂທດອາຍາເພິ່ນກໍ່ໂຜດ
ອ້າຍຜິດພຽງເລັກນ້ອຍ   ອະໄພຂ້ອຍແດ່ເທາະນາງ.

452-484 ອ້າຍຂໍສົມມາສາວ   ໂທສາອ້າຍໄດ້ວ່າ
ອະໄພຍາໂທດໄວ້   ສົມມານ້ອງຢ່າຂູ່ຊາ.

453-485(ຍິງ) ບູຮານວ່ານ້ຳບໍ່ຍ້ອຍ   ຫອຍບໍ່ໄຕ່ໃຫ້ເຫັນຮອຍ
ຄັນວ່າໄມ້ບໍ່ເນົ້າ   ຕົວເພີ້ງກໍ່ບໍ່ເຊົາ.

453-486 ນ້ອງຕັ້ງແກ້ງເວົ້າຫລັ້ນ   ລອງໃຈຊາຍເບິ່ງ
ມັນຊິເຢັນດັ່ງນ້ຳ   ຫລືຊິຮ້ອນດັ່ງໄຟ
ຂັງຢູ່ໃນໃຈນ້ອງ   ພໍບໍ່ຕາຍຢ້ານອ້າຍພາຍ
ຄວາມມັກຊາຍ   ທີ່ແຜ່ນຟ້າ
ຊິມາມ້າງໄດ້ງ່າຍດາຍ   ບໍ່ເປັນແລ້ວ
ຄັນອ້າຍຕາຍນ້ອງຊິກີ້ງ   ຄອມກອງພອນໃຫ້ມືອມອດ
ຄັນບໍ່ໄດ້ຍອດອ້າຍ   ບໍ່ເອົາຊ້ຳສຳຜົວ.

454-487 ຢ່າຊູ່ຫົວຊາຫ້ອນ   ແນວຍິງມັກຈົ່ມ
ຖ້າມັນຂົມຝາດແທ້   ຄາຍຖີ້ມກໍ່ບໍ່ຂວງ   ດອກຫນາ.

455-488 ນ້ອງໄດ້ເຫັນອີກອ້າຍ   ໃຈຊາຍຈັ່ງແມ່ນທຸ່ມ
ບຸນນ້ອງມີທີ່ຝາ   ຄັນໄດ້ບ່າວພີ່ຊາຍ.

456-489 ຄວາມມັກຫລາຍ　　ຄວາມອາຍຫນ້ອຍ
ນອນບໍ່ຫລັບເຕັມຕາອີ່ມ
ຄັນບໍ່ໄດ້ອຸ່ນອ້າຍ　　ຊິຕາຍຖີ້ມໃຫ້ສ່ວາງເວນ.

457-490 ຄັນແມ່ນນ້ອງໄດ້ອ້າຍ　　ຊິເອົາໃສ່ກະຢັງຄຳ
ຊິເອົາງຳກະທໍເງີນ　　ບໍ່ໃຫ້ໃຜເຫັນຫນ້າ.

458-491 ຄັນແມ່ນນ້ອງໄດ້ອ້າຍ　　ຊິຍົກຂື້ນໃສ່ຫໍ
ຊິຍໍຂື້ນໃສ່ຮ້ານ　　ນ້ອງຊິບູຊາທານ
ດ້ອຍດອກໄມ້ບານຄ່ຳ　　ນ້ອງຊິຫລີງລ່ຳຢ້ຽມ
ແຍງອ້າຍຢູ່ຊູຍາມ.

459-492(ຊາຍ) ຈັ່ງແມ່ນດີໃຈລົ້ນ　　ຄືນງາມສົມຊຸ່າ
ອະໄພຍາໂທດໃຫ້ອ້າຍ　　ຊາຍຫລ້າດັ່ງດຽວ
ຄວາມທີ່ອ້າຍໄດ້ສ້ຽວ　　ນ້ອມຫນ່ຽວວອນກະສັນ
ຍົກໂທດທັນໂທສາ　　ໂທດໄລລາລ້າງ
ເຮັດໃຫ້ເຫັນທາງໄດ້　　ຈອມໃຈຈັ່ງແມ່ນຊື່ນ
ພໍປານໄດ້ຫມື່ນຕື້　　ຄຳເຂັ້ມໃສ່ຖົງ
ປີ້ບໍ ເພິ່ນວ່າເຄີຍຄາດໄດ້　　ໄຫລມາຄືນ້ຳທ່າ
ຄັນແມ່ນຄາດບໍ່ໄດ້　　ພັດໄຫລຂື້ນດັ່ງນ້ຳເຊ.

460-493 ບໍ່ໄດ້ສົງໄສລ້າງ　　ຫມາກໂປງລາງເມືອງລ່າງ
ວ່າແຕ່ເຕົາະມັນກໍ່ກ້ອງ　　ວ່າແຕ່ຕ້ອງມັນກໍ່ໂປ່ງ
ແມວໂປງໄມ້ໃຜປ້ອງ　　ຢ່າປອງປີ້ງປຽບປານ.

461-494 ຕົກລົງໃຈໄປຄ້າ　　ຍອມທີນມັນເສຍທ່າ
ຂ້າຄວາຍເສຍດາຍຫມາກພົກນ້ອຍ　　ຊິທັນກ້ອຍໃສ່ ອີ່ຫຍັງ.

462-495 ຕົກຕານາງໄດ້ວາງບ້ວງຄ້ອງ　　ຢາຫວັງຄອງນ້ອງຊິວາງມືງ່າຍ
ຕົກຕາໄປຄ້ອງຊ້າງ　　ເອົາຈົນໄດ້ຂີ່ມາ.

463-496 ສິມໃຈນ້ອງ ຢາກຂັດເມືອຄືຂ້ອງອອງມາຄືກະຕ່າ
ຄັນບໍ່ລາຟີນ້ອງ ບໍ່ລາຄອງກ່າວໄວ້
ຊິຍໍເຂົ້າກະຕ່າພາຍ.

464-497(ຍິງ) ນ້ອງຢາກຕາຍເປັນຊ້າງ ບັກຫລາວຄຳໃຫ້ອ້າຍຂີ່ ເມືອເດ
ກະບຸງຍັງຖີ້ມໃສ່ທ້າຍ ຕົນອ້າຍໃຫ້ຄາບຄໍ້.

467-498 ຄັນອ້າຍເມືອນຳນ້ອງ ບໍ່ໃຫ້ຍາກໃຫ້ຊາ
ນ້ອງຊິຂັນອາສາ ແຕ່ງດອງ ເອົາອ້າຍ.

468-499 ຄັນອ້າຍຕົກລົງແທ້ ລອງລອບໃຫ້ອ້າຍໄລ
ລວງໃຊໃຫ້ອ້າຍຖອດ ຊູຂອດອ້າຍໄລຖີ້ມນ້ອງຈຶ່ງເອົາ.

466-500(ຊາຍ) ບໍ່ຕິຊິ ກະຄີຮ້າງ ຂໍທະແນມນ້ອງໃຫ້ແຕ່ງ
ແພງປານໃດກໍ່ຊື້ ຂາງຂ້າວແມ່ກະໄດ
ຄັນເຫັນທ່າບ່ອນໄດ້ ຊິໄຂເປົ້າມັດຈໍາ.

467-501 ມາເຫັນນ້ອງ ກອງແພງອ້າຍຂໍແຕ່ງ
ເປັນເມຍກົກອ້າຍກໍ່ໄດ້ ເປັນເມຍນ້ອຍ ອ້າຍກໍ່ເອົາ

468- ອ້າຍນີ້ຄົນກໍ່າພ້າ ພໍ່ແມ່ຫາກຍັງມີ
ເປັນຊາຍໄທນ ລູກເມຍເຕັມສ້ອມ
ຢາກມາອົມເອົານ້ອງ ເປັນເມຍຊາວເອົາສາວຊ່າ
ຈຶ່ງໄດ້ດັ້ນກີບຟ້າ ມາຜີເຜືອປະສົງ.

469-503 ນ້ອງນີ້ ມາຊ່າງຈາ ໃຫ້ຈານຕົກບອກ
ຝົນບໍ່ລ່ວງຮອດຟື້ນ ໃບຫຍ້າຊິທ່ຽວເຫລືອງ.

470-504 ໃຜຊິທວນເຫັນໄດ້ ຫົວໃຈຊາຍຈອບອ່ອຍ
ຄວາຍປາກຫວານດັ່ງອ້ອຍ ແຕ່ໃຈສົ້ມດັ່ງມົດແດງ.

471-505 ລາຍຄືນມັນບໍ່ຄືລາຍຊ້າງ ລາຍເສືອມັນເຫັນງ່າຍ
ລາຍໃນຄືນເຊື່ອງໄວ້ ຕັ້ງພັນເລັ່ຫລ່ຽມລາຍ.

472-506(ຍິງ) ອ້າຍເອີຍ ອວດວ່າໄດ້ເປັນເພຍ ອວດວ່າມີເຍຍເຂົ້າ
ພາກິນກ້ອຍຢ້ານຕາຍຮ່າ
ອວດວ່າມີແມ່ຊ້າງ ສັງໄດ້ໄປຮັບຈ້າງຂໍກິນເຂົ້າຊູ່ວັນ.

473-507 ສັນດານຜູ້ຊາຍນີ້ ອາຍຸສາມຊາວແລ້ວ
ລົງເຮືອນກໍ່ຊິງບ່າວ
ເຫັນຜູ້ສາວສ່ຳນ້ອຍ ພັດເຊຍເຂົ້າບໍ່ຖອຍ.

474-508 ນ້ອງນີ້ແຈ້ງຄືດາວ ຂາວກໍ່ຂາວຄືຟ້າ
ໃສມອງໆຄືໜ້າແວ່ນ
ແບຝາມືຮັບຕ້ອນ ເອົາອ້າຍຢູ່ຊູ່ຍາມ.

475-509(ຊາຍ) ອ້າຍຢ້ານແຈ້ງຕັ້ງແຕ່ດາວ ອ້າຍຢ້ານຂາວຕັ້ງແຕ່ຟ້າ
ຫາເມກບໍ່ມີບັງ
ອ້າຍຢ້ານມີລາຫູ ບຽດບຽນພະຈັນເຈົ້າ.

476-501 ອ້າຍນີ້ ບຸນບໍ່ເຄີຍ ຄາດໄດ້ເປັນນາຍທ້າງ
ຊື້ນເມືອປາງພະລາດໝື່ນ
ບຸນບໍ່ເຄີຍໄດ້ໜ່ວຍແກ້ວ ມີແລ້ວ ບໍ່ຊ່າງປອງ
ບໍ່ເຄີຍຄາດໄດ້ນ້ອງ ເປັນສົ່ນໆເຊາ
ບໍ່ເຄີຍມີເມຍຊົມ ຊິຊອກຫາໃສໄດ້
ມັນແສນຈົນໃຈອ້າຍ ຢາກຕາຍໄປລົດຊື່ອ
ບໍ່ຫົວຊານຳຜູ້ມັ່ນຮຽມ ຊິຕາຍແດ້ງໃຫ້ແດດເຜົາ.

477-511 ບຸນບໍ່ເຄີຍ ຂີ່ມ້າ ຢ້ານມັນແລ່ນສະເດັນຕົກ
ບຸນບໍ່ເຄີຍຈົກຮູ ປ່ອນແຂນລົງພັດຄາເຊື້ອມ
ບຸນບໍ່ຮອດຍອດແກ້ວ ປີນຊື້ນກໍ່ບໍ່ເຖິງ.

478-512 ແນວບຸນໂຕບໍ່ສົມອ້ອຍ ຕັດລຳໃດຖືກແຕ່ອ້ອຍປ້ອງຖີ່
ເຂົ້າຈີ່ບໍ່ສົມບັ້ງນ້ຳເຜີ້ງ ທາໄດ້ກໍ່ບໍ່ຫວານ.

479-513(ຍິງ) ນ້ອງຄືກັນມັ້ນແລ້ວຄັນບໍ່ເຄີຍກໍ່ລອງຫລິ້ນ
ຄັນບໍ່ເປັນກໍ່ລອງເບິ່ງ ມືບໍ່ເຄີຍປັ້ນບ້າງ
ບໍ່ເຄີຍຫ້າງແຮ່ວຊ້າງ ຊິລອງຫລິ້ນຮ່ອນຂີ້ຊາຍ.

480-514 ບຸນບໍ່ເຄີຍເຂັນຝ້າຍ ຈັບຫລາໃດມີແຕ່ຖືກຫລາເປ່
ບຸນບໍ່ເຄີຍເຈ່ຍນ້ອງ ອອງຂື້ນພະລາດລົງ.

481-515 ບຸນບໍ່ເຄີຍໄດ້ຊູ້ ລົມຜູ້ໃດມີແຕ່ຂອງເພິ່ນ
ບຸນບໍ່ຄາດໄດ້ຊອນ ບໍ່ເອົາຊ້ຳດອກຜືວ

482-516 ແນວບໍ່ເຄີຍຄາດໄດ້ ຊິເອົາໃສ່ໄຕຄຳ ມາໄວ້ແລ້ວພັດບ່າ
ຫວນຊິເປັນພະຍາ ປວດທ້ອງຂີ້
ແນວບຸນໂຕບໍ່ມີ ຫາກມີແນວມາຜ່າ
ຊາຕານ້ອງນາດຫລ້າ ກໍ່ຄືດ້ານດັ່ງດຣອ.

483- 517(ຊາຍ) ອ້າຍຢາກຈົກເອົາໄສ້ ຕັບໄຕໃຫ້ນ້ອງເບິ່ງ
ຢ້ານແຕ່ ຂາວລ້ອຍຊ້ອຍ ນ້ຳມັນລ້າງກໍ່ບໍ່ປານ.

486-519 ວ່າແຕ່ທາງນ້ອງນັ້ນ ຊ້ານຕອບພີ່ຊາຍຈາ
ຊິອິດສາເຊົາລຳ ຟ້າວແລ່ນນຳຕົນນ້ອງ
ມຸ້ງມ່ານຫມອນ ກຣມນອນຊ້ອນ ເຮືອນຊານບ້ານເຊົ່າ
ເອົາກັນຊູ້ຍອນຟ້າວ ນາງຊິລ້າວບາດຢ່າລຳ.

487-520(ຍິງ) ລະອິດຫມອງລະຄອງເສົ້າ ເຊົາງອ້າຍຢ່າກ່າວ
ແມ່ຍິງລາວ ແສນເອກອ້າງ ບໍ່ຫານມ້າງສາດສະຫນາ ອ້າຍເອີຍ.

488-521 ເອົາຜົວຊູມັນບໍ່ຂ້ອງ ມັນບໍ່ເສຍເງິນທອງກິນດອງໄດ້ແຕ່ຊາ
ຕັ້ງແຕ່ເຈົ້າພະຍາ ຕັດອາຈາຍາກໄດ້ສາວໃຊ້ກໍ່ສັ່ງເອົາ.

489-522(ຍິງ) ອ້າຍເອີຍຄອງລາຊາ ບໍ່ຄືຄອງຊາວບ້ານ
ນາງບໍ່ຫານຍ້ານຟ້າຜ່າ ຕາຍແລ້ວ
ເຊົາອ້າຍຢ່າຊູຈາ ວ່າເອົາກັນຢູ່ຮ້ານ
ບູຮານເຖົ້າບໍ່ກ່າວສອນ

ໃຜຊິເອົາກັນຊ້ອນ ໃນວົງລຳສະຖານທີ່
ບ່ອນພຸດທະພິທີ ຫນີສົງສານບໍ່ເກືອກກົ້ວ
ຕົວເຈົ້າຊ່າງວ່າຫລົງ
ຄຳຕົກລົງຂອງນ້ອງ ໃຫ້ອ້າຍຄືນເມືອຫ້ອງ
ເຮືອນຊານບ້ານພໍ່ແມ່
ຕົກລົງເອົາເຖົ້າແກ່ ແລະ ຍາດຕິພີ່ນ້ອງ
ມາເວົ້າກ່າວອີນ.

490-524(ຊາຍ) ຄັນພໍ່ແມ່ເພີ່ນຫາກຈັບແຂນຂວາ
ຄັນຕານາຍ ເພີ່ນຫາກບາຍແຂນຊ້າຍ
ອ້າຍ ແລະ ນ້ອງ ເຂົ້າຮ່ວມບາຍພາຂ້ວນ
ນ້ອງຊິນອນຊະແດງລະ ບໍ່ກ່າວຊາຍຊິບາຍປັ້ນ
ຊາຍຊິຂື້ນເຫີງໂລ້ນ ໂຕນລົງວົມກໍ່ຕາມຊ່າງ
ຄັນວ່າກົກບໍ່ມີປາຍ ຄັນວ່າສາຍບໍ່ແລ້ວ
ຄັນວ່າແຮ້ວບໍ່ລັ່ນ ຄັນວ່ານ້ຳບໍ່ຂ້ອນ
ຢ່າຝັນທ້ອນຊິໄດ້ວົມ.

491-525 ຄັນວ່າຂອງແພງນັ້ນ ນ້ອງຊິຂັ້ນກູນແຈໄວ້
ຊິຕາມໄລໄມ້ແກ່ນ
ຄັນທາງການປະກາດໃຊ້ ຄັນທາງໃນໄດ້ຮູ້.
ຊິເຂໃຫ້ບາວພີ່ຊາຍ...

526- ຢ້ານແຕ່ທາງອ້າຍນັ້ນ ຫາກມາຕີຖະແຫລງເຜີງ
ຄັນເອົາຂາງໄຟເຫີງ ຊິເປັນນ້ຳລ່ອາງງ
ໄກຈາກນາງຢ້ານແຕ່ອ້າຍ ບໍ່ເຫັນຫນ້າຕ່າວມາ.

493-527 ຕາຍກໍ່ໃຫ້ຕາຍນຳນ້ອງ ຄັນແມ່ນຍັງເປັນຄືນ
ກໍ່ໃຫ້ໄດ້ຢູ່ສ້ອມ ນຳນ້ອງກ່ອມສອງ.

495-529(ຍິງ) ຄັນບໍ່ມັກອ້າຍຢ່າມາພາງານ   ຄັນບໍ່ເອົາການ ອ້າຍຢ່າພາໂລເວົ້າ
ໜີເມື່ອນອນສາດີກ່ວາ   ຢ້ານແຕ່ເມຍຂອງອ້າຍຢູ່ບ້ານ
ຄອງຖ້າຢາກນອນ.

496-530 ນ້ອງນີ້ຊິວ່າບົວເຄືອຫລ້າ   ຫາຜົວມາລ້ຽງແມ່
ຊອກຫາມາແຕ່ນ້ອຍ   ເລີຍຈ້ອຍບໍ່ພົບພານ
ຄັນພົບອ້າຍແຕ່ເວັນ   ຄັນເຫັນອ້າຍແຕ່ເຊົ້າ
ຄັນເຫັນເວົ້າແຕ່ກີ້   ຊິເອົາແລ້ວຕັ້ງແຕ່ດົນ.

497-531 ອ້າຍຢ່າພາໂລເວົ້າ   ຖະແຫລງແປງໂຕະຕັ້ງ
ບ່ອນນັ່ງມີບໍ່ແພ້   ຊິແປງຫລົ້ນໃຫ້ເມື່ອຍຫຍັງ.

498-532 ນ້ອງນີ້ ຕັ້ງແຕ່ນຸ່ງສິ້ນໜັ້ນ   ດັ້ນດຸ່ງຫາຜົວ
ຍັງບໍ່ມີພານພົບ   ຢູ່ໃສຊິພໍ້ໄດ້
ມື້ນີ້ນ້ອງໄດ້ມາເຫັນໜ້າ   ອາຈານຊາ ຫົວໃຈຕ່າງ
ເປັນໜາວໆຮ້ອນໆ   ຄືໄຂ້ໜ່າຄືງ.

499-533 ອ້າຍຢ່າພາໂລເວົ້າ   ບໍ່ຢາກເອົາກໍ່ຕາມຊ່າງ
ເປັນສາວແກ່ຄ້າງບ້ານ   ຕາຍຖິ້ມກໍ່ຊ່າງມັນ.

500-534 ຊາຕານ້ອງບໍ່ສິ້ນ   ອາດສະໜານ້ອງຕົກຕ່ຳ
ປີກາຍນ້ອງເພິ່ງມ້າ   ປີນີ້ນ້ອງເພິ່ງງົວ
ຄັນເອົາຜົວຢ້ານໄດ້ເປັນເມຍນ້ອຍ   ຂອງເຂົາແນວແມ່
ແນໃສ່ໃສເພິ່ງແຕ່ຊູ້   ຜົວຊ້ອນເພີ່ນທັງຫລາຍ.

501-535 ເຫັນວ່ານ້ອງຜູ້ນ້ອຍ   ຍິງພອຍຢ່າພ້າວຂົ່ມຫລາຍເນີ !
ການຂົ່ມຄົນ   ມັນບໍ່ຄືຂົ່ມໄມ້
ຖ້າວ່າຫົວໃຈຍັງ   ຢ້ານມັນປິ້ນຂື້ນຂີ່.

502-536 ອ້າຍນີ້ບໍ່ເລືອກເຫລັ້ມ   ຂອງເກົ່າເພີ່ນກໍເລັ້ນ
ວ່າແຕ່ບຸນອ້າຍຮອດ   ຕາບອດກໍ່ຊິເອົາ
ຕາຈາວກໍ່ຊິຊື້   ຄົນຄືນາງຊິເອົາມ້ານມາຕ່າງ.

24/VII ຫ້າມຈຳໜ່າຍ

503-537 ລາກ່ອນເດີ ຈື່ໜ້າຈຳໜອດ   ບໍ່ໄດ້ບອດປີໜ້າຊິມາຢາມ
ຢ້ານແຕ່ສິມນ້ຳໜ້າ   ປາລະມີງຳຮອດ
ບໍ່ໄດ້ບວດຍ້ອນນ້ອງ   ເປັນຄົນລ້າຢູ່ດາຍ.

504-538 ອົດທະແນນ   ແກມຄະເນີນ
ວ່າແຕ່ອ້າຍໄດ້ນ້ອງ   ຄືອັນໃດໃຫ້ນ້ອງວ່າ
ຄືຂາລາຍອ້າຍຊິແກ້   ຄືຜົມໂດງອ້າຍຊິແປງ.

505-539 ຢ້ານແຕ່ນ້ອງນີ້ແລ້ວ   ກ້ຽງຄືໜາມກະແທວ
ຊື່ຄືແມວນອນໜວດ
ສ່ວນອ້າຍນີ້ ຄຶດກໍ່ຄຶດຄືເຫລັກໄນ   ໃສກໍ່ໃສຄືແກ້ວ
ແປ້ວກໍ່ແປ້ວແຕ່ໜ້າ   ໃຈອ້າຍຜັດດັ່ງທຽນ.

506-540(ຊາຍ) ຄັນແມ່ນສາວແມ່ໝ້າຍ   ສາມຄວາຍອ້າຍຊິແຕ່ງ
ຄັນແມ່ນສາວແມ່ຮ້າງ   ສາມຊ້າງຊິແຕ່ງດອງ
ສາວສ່ຳນ້ອຍ ອ້າຍເອັ້ນຄ່າວາ   ສາວກະຈາອ້າຍຂໍເອັ້ນຄ່າສອກ
ສະຕາງແຫລ້ບໍ່ແຕ່ງດອງ.

507-541(ຍິງ) ຄວາມປາກຄືຕາງຄ້ອນ   ເຈັບເມົ້າບໍ່ຮູ້ ສວ່າງ
ງູງອດ ເຈັບປວດຄັ້ນ   ຢາດີແກ້ກໍ່ສວ່າງເຊົາ
ອີ່ນາງເຈັບຄວາມປາກອ້າຍ   ປານວ່າໄຂ້ ປ່ອງປີ

508-542 ນ້ອງນີ້ ຄຶດຮອດອ້າຍ   ເຂົ້າແລະນ້ຳຂອງແຊບກໍ່ເລີຍຂົມ
ບາດວ່າເກືອຂອງເຄັມ   ຜັດເລົ່າຈາງປານນ້ຳ.

509-543 ເວົ້າວ່າເຮືອນມຸງຫຍ້າ   ຝົນຕົກມາສັ້ງມາຮົ່ວ
ບາດວ່າລົດຫຍ້າໄວ້   ຝົນເທົ້າກະບໍ່ຖອງ.

516-544 ເຈົ້າຜູ້ ງູເຫລືອມອໍ້   ສັງຫາກິນແຕ່ຕົວເຕົ່າ
ສັງບໍ່ຂຶ້ນໂຄກກ້ວາງ   ຫາກິນຊ້າງຄ່າແພງ.

511-545 ເພິ່ນວ່າ ຕາດີໄປຄ້ອງຊ້າງ   ສາມປີຄືນມາເປົ່າ
ບາດຕາບອດໄປຄ້ອງສ້າງ   ສາມມື້ໄດ້ຂີ່ມາ.

512-546(ຊາຍ) ນ້ອງຜູ້ນອນໃນມຸ້ງ
ບາດອ້າຍນອນເປືອຍຕົວ
ສັ່ງມາໃຫ້ຍຸງກັດ
ເຫລົ່າບໍ່ມີຫຍັງຕ້ອງ.

513-547 ເກົ້າຊິຮ້າຍ ສິບຊິຮ້າຍ
ຢ່າຊູ່ເອົາບາລີ
ໃຫ້ເອົາແກ່ນຂະຍຸງຕີ
ຕ່ອຍຕີຕາງຄ້ອນ.

541-548 ອັດສະຈັນໃຈໂອ້
ບາດກະໄປຫມາກພ້າວ
ໂອຫອງສັ່ງມາແຕກ
ສັ່ງມາຫມັ້ນກ່ອາໂອ.

515-549 ຮຽມຢາກພັນອີກມ້າງ
ມັນຊິເຢັນຈັ່ງນ້ຳ
ຈີກຫົວໃຈໃຫ້ນາງເບິ່ງ
ຫລືຊິຮ້ອນດັ່ງໄຟ.

550- ເຂົາຊ່າວ່າ ໄມ້ທີກ
ເຂົາຊ່າວ່າໄມ້ພາງ
ຫອຍກາບກໍ້
ຕົວປາຊິວມີເຂົາ
ບ້ານນ້ອງປ້ອງບາງ
ບ້ານນາງປ້ອງຖີ່
ພັດຮູ້ປາກຄືຄົນ
ພັດໄລ່ຊີນຄວາຍຕູ້.

516-551 ມື້ບໍ່ຊາດທີ່ງາມງມື້
ງາມບໍ່ມີງາມຄ້ຳ
ງາມຕາຍກໍ່ຕາມຊ່າງ
ຊິໂຍນຖິ້ມເຂົ້າໃສ່ໄຟ.

517-552 ຄັນນ້ອງເມືອນຳອ້າຍ
ບໍ່ໃຫ້ເຄືອງບາດແຂນ
ບໍໃຫ້ແຄນບາດຍ່າງ

ຮອດບ່ອນຕ່ຳ
ຮອດບ່ອນສູງ
ຄັນຮອດພູໄມ້ເຮ້ຍ
ອ້າຍຊິເຈ່ຍໂຕ່ງໂຕ້ນ
ຊາຍຫມໍລຳຊິຈູງ
ຊາຍຫມໍລຳ ຊິເຈັ່ຍ
ອ້າຍຊິເຈ່ຍໂຕ່ງໂຕະ
ຄັນມັນຫນັກລື່ນພົ້ນ
ຊິໂຍນຖິ້ມໃສ່ປ່າຫມາມ.

518-553 (ຍິງ) ໃຫ້ອ້າຍເມືອດີທ້ອນ
ຫມາມໄຜ່ຢ່າຂ້ອງຂາ
ໃຫ້ອ້າຍເມືອງແຂ້ວງງ
ຕາມທາງບ່ອນອ້າຍໄຕ່
ຫມາມກຸນທາຢ່າຂ້ອງແຂ່ງ
ເຖິງບ້ານອີ່ແມ່ຊາຍ.

519-554 ໃຫ້ອ້າຍເມືອດີທ້ອນ
ເຮືອນຊານບ່ອນອ້າຍຢູ່
ຄັນອ້າຍເມືອເຖິງບ້ານ
ອ້າຍຢ່າໄປກ່າວເອົ້າ
ຂ້ອນນ້ອງໃຫ້ເຜີ່ນຖາມ.

520-555	ຢ່າໄດ້ເອົາຂ້ອນນ້ອງ	ໄປລັບໃສ່ຫີນສໍ
	ຢ່າໄດ້ເອົາຂ້ອນນາງ	ໄປຮໍໃສ່ຫີນແກ່ນ
	ອ້າຍຢ່າໄປແອ່ເວົ້າ	ຂອັນອີ່ນາງໃຫ້ຊາວບ້ານ ເພີ່ນຊ່າ.
521-556	ຄັນເມືອຮອດຮົ່ມຈິກ	ໃຫ້ອ້າຍຫລຽວຫລັງ
	ຄັນເມືອຮອດຮົ່ມຮັງ	ໃຫ້ອ້າຍຫມັ່ນຫລຽວລ່ຳ
	ຄັນວ່າມືດຊຸ້ມລ້າວ	ໃຫໄວ້ຟ້າວດ່ວນເຖິງ ນາງເດີ.
522-557	ຄັນອ້າຍເມືອເຖິງບ້ານ	ຄຳອ້າຍເວົ້າຕໍ່ນາງ ຢ່າໄດ້ຖີ້ມ
		ໃສ່ປ່າຫຍ້າຄາ
	ຄຳອ້າຍຈາຕໍ່ນາງ	ຢ່າໄດ້ຖີ້ມໃສ່ປ່າຫຍ້າແຝກ
	ໃຫ້ອ້າຍຖັກແຊກໄວ້	ປານແກ້ວຄ່າແພງ.
523-558	(ຊາຍ) ຜັກກາດໄຮ່	ນ້ອງຢ່າເຫມືອດແກງປາ
	ຜັກກາດນາ	ນ້ອງຢ່າເຫມືອດແກງອ່ຽມ
	ຄັນນ້ອງເວົ້າຊູ້ຜັຽມ	ນ້ອງຢ່າປ່ຽນຫລາຍຊາຍ.
524-559	ອ້າຍຂໍຝາກຊີວິດ	ໄວ້ຕາງຕາ
	ອ້າຍຂໍຝາກຜ້າວາ	ໄວ້ໃຫ້ເບິ່ງຕາງຫນ້າ
	ໃຫ້ນ້ອງຖືເມືອນຳ	ເອົາເມືອໄວ້ຫລິງລ່ຳ
	ແພໄຫມຂວິດ	ໃຫ້ຖືເປັນຂອງກາງ
	ແພໄຫມບາງ	ໃຫ້ຖືເປັນຂອງຝາກ
	ຄຳປາກອ້າຍ	ໃຫ້ຖືເປັນ ຄຳຄ່າລ້ານ
		ຊາມຊາໄດ້ແຕ່ງດອງ.
525-560	ແຫວນວົງເພັດ	ອ້າຍຂໍຈຳ
	ແຫວນວົງຄຳ	ອ້າຍຂໍຝາກ
	ສາຍສະຂາບຂໍ້	ຂໍມ້ວນມອບນາງ.
526-561	ຄວາມຫມາຍຫມັ້ນ	ສັນຍາກັນເດືອນສີ່
	ເດືອນຫ້າຫ້າງ	ເດືອນຫົກຕາມກ່າວອົນ.

527-562	ໄດ້ຍິນຟ້າຮ້ອງຂ້ວາມ	ຢ່າລືມຄວາມອ້າຍສັ່ງ
	ຟ້າແລ່ນພຸ້ນແລ່ນພີ້	ຢ່າລືມອ້າຍໄດ້ສັ່ງນາງ
	ເດືອນ ສິບເອັດອ້າຍຕຽມເຫລົ້າ	ເດືອນສິບສອງອ້າຍຊິໄປຖາມຄ່າ
	ໃຫ້ນ້ອງຄອຍລັດຖ້າ	ແຄມຮົ້ວປ່າຫມາກເຍົາ.
528-565	ອ້າຍນີ້ເຫມືອນດັ່ງໄກ່ຜູ້ນ້ອຍ	ຕີບປີກຮຽນຂັນ
	ທັງຂັນທັງຢ້ານ	ແຫລວແດງໂຕຄໍກ່ານ
	ຄັນແມ່ນໄກ່ຜູ້ກ້າ	ຊິຂັນທ້າບໍ່ຍ່ອນແຫລວ.
529-566	ເຫັນວ່າປາຊິວນ້ອຍ	ຢ່າຟ້າວຂຶ່ມຫົວຫຍິກ
	ບໍ່ແມ່ນ ແນວປາຊິວ	ຊິບີບຫົວລີງກ້ອຍ
	ແນວຄືນພອຍ	ຢ່າຟ້າວໄລລາຖິ້ມ ບໍ່ຫົວຊາຕາລ້າ
	ລາງເທື່ອບຸນກ່ຳພ້າ	ພອຍໄດ້ຂຶ້ນນັ່ງເມືອງ ແທ້ໃດ.
530-567	ນ້ອງນີ້ຄືດັ່ງ	ມືນຕາບໍ່ເຫັນຜີ
	ຕີຕາບໍ່ເຫັນນ້ອງ	ທອນທໍ່ຢູ່ຜູ້ດຽວ.
531-568	ອ້າຍຜູ້ງາມໆນັ້ນ	ງາມຕາຍຕັ້ງແຕ່ເຄື່ອງ
	ການເມືອງອ້າຍບໍ່ຮູ້	ຄັນເປັນຊູ້ກໍ່ຍາກໃຈ.
532-569(ຊາຍ)	ນ້ອງຜູ້ງາມຈັ່ງຊີ້	ເອົາຜົວສາດີກ່ວາ
	ຖ້າອ້າຍທິດບໍ່ມາຫາ	ຖ້າຈານຊາກໍ່ຊ້ອຍມ້ອຍ
	ຢ້ານນ້ອງເຖົ້າຄ້າງບ້ານ	ເຂົາຊິເອີ້ນແມ່ກະປາງ.
533-573	ເຫັນວ່າຄືນດຳປີ້	ບາດຮ່າບຸນຊາຍມີ ລາງເທື່ອໄດ້
	ເມຍກ່ອນ	
	ລາງເທື່ອບຸນມະລອດສອດແສ້ວ	ບຸນແອວທີ່ແມ່ຊ້າງ.
		ເອົານ້ອງກໍ່ຫາກເປັນ.
534-574	ງາມໄຫມຍ້ອນເຂົ້າຍ້ອມ	ງາມນາງຍ້ອນເຂົ້າຊ່າ
	ງາມນາຍ້ອນຝຸ່ນບ້ານ	ບູຮານຕ້ານກ່າວມາ
	ງາມຕາເປັນຍ້ອນຄິ້ວ	ຖົງກະທຽວງາມຍ້ອນແສ່ວ
	ງາມແອວງາມຍ້ອນທ້າຍ	ເອົາໃຫ້ຈົ່ງຄ່ອຍງາມ.

535-575 (ຍິງ)ເຜີ່ນທັງຫລາຍອິດປາອິດເຂົ້າ ສາວຄຳນາງອິດອ້າຍບ່າວ
ຜູ້ຊາຍມີບໍ່ແພ້ ຜູ້ເປັນຊູ້ນ້ອງບໍ່ມີ.

536- ນ້ອງໄດ້ອົດທົນກັ້ນ ກະສັນແດດິ້ນດັ້ນ
ຢ້ານໃຈຂາດສະບັ້ນ ຕາຍຍ້ອນອ່າວກະສັນ.

537-577 ໃຫ້ອີ່ດູຕົ້ນໜ້າ ດວງຕາທັງສອງໜ່ວຍ
ໄດ້ແຕ່ມີນມ່ອງກ້ອງ ສອງເບື້ອງປາກບໍ່ເປັນ.

538-578 ນ້ອງໄດ້ມາເຫັນໜ້າ ຕາດຳຊາຍຜູ້ປະເສີດ
ຜົຍປາກທອບໃສ່ຊ້າ ເອົາເນື້ອພ້ອມໜ່ອມອີ່ນາງ.

539-579 ຄັນບໍ່ຄາໜາມບຸ່ນ ນ້ອງຊິມອບຕົວຖວາຍ
ຄັນບໍ່ຄາໜາມຫວາຍ ນ້ອງຊິມອບຕົວໃຫ້
ເອົາແຕ່ໃຈຂອງຊາຍ ຊິລົງຕົມຫວັງຈັບອ່ຽມ.

540-580 ແນວທີ່ຕາເຫັນແລ້ວ ບາຍເອົາກໍ່ຍີນຍາກ
ບຸນບໍ່ຊູ ຊ່ວຍຍູ້ ຍໍຂື້ນກໍ່ບໍ່ເຖີງ.

541-581(ຊາຍ) ຢ້ານແຕ່ບຸນຂອງອ້າຍ ກຳປາໂຕມີວ່ຽງ
ບຸນບໍ່ມາສົ່ງໃຫ້ ຈົ່ງກຸມປ້ຳຖືກວ່ຽງປາ.

542-582 ເຈົ້າຜູ້ຄໍກິ່ມປ້ອງ ປານນາງ ເທວະລາດ
ນາງມະທີນາດນ້ອຍ ປາງນັ້ນກໍ່ບໍ່ປານ
ນາງມະໂນລານ້ອຍ ທອງອີນຖະອີນແຕ່ງ
ຍັງບໍ່ປານຮູບນ້ອງ ດຽວນີ້ ຜູ້ງາມ.

543-584 ຄືນຜູ້ງາມຄືນ້ອງ ແມ່ນໃຜນໍປັ້ນຫລໍ່
ຫລືວ່າອີນຢູ່ຟ້າ ແຖມປັ້ນຫລໍ່ມາ
ຍິງຢູ່ໃຕ້ລຸ່ມຟ້າ ຊິມພູທີບເມືອງຄົນ
ຊິບໍ່ມີໃຜປານ ທຽບທຽມນາງໄດ້
ອ່ອງຕ່ອງແກ້ມ ງາມແຍ້ມຊູ່ບາດຈາ
ຫລຽວເບິ່ງຫູຕາໃຫ້ ແຂນກົມຄືວກ່ອງ.

544-586(ຍິງ) ເຫັນວ່ານ້ອງຜູ້ຮ້າຍ
ນ້ອງບໍ່ຈົບບໍ່ງາມ
ບໍ່ໄດ້ປອງເປັນເມຍ

ຢ່າເວົ້າສຽດຄືຕີກົບ
ກໍ່ຊ່າງຕາມຕົວນ້ອງ
ເພິ່ນຜູ້ໃດຊາວບ້ານ.

545-588 ຄຶດຮອດອ້າຍ
ກິນຜັກມີແຕ່ຄຳສະທ້ອນ

ກິນເຂົ້າມີແຕ່ຄຳສະໜັກ
ຄຳເຂົ້າຢ້ອນ ໄດ້ເອົານ້ຳລ່ອງລົງ.

546-589 ອັດສະຈັນໃຈໂອ້
ຄຶດຢາກພາຊິບ່ານ

ລຳສະໂນ ເປັນໄມ້ແກ່ນ
ຂວານຊິເປ້ປີ້ຄອບສະໂນ.

547-590 ອັດສະຈັນນ້ຳ
ໄມ້ແກ່ນຫລ້ອນ

ວັງໃສສ້ຽງມາຊຸ່ນ
ສ້ຽງມາຢັ້ນປົ່ງໃບ.

548-591 ໂອນໍ ມາກຢູ່ນ້ຳ
ແຖນຢູ່ເມືອງບົນເມືອງເທິງ
ເອົາຂ້ອຍກັບເຈົ້າ
ຍໍຊື້ນຄ້າງ
ໃຫ້ມັນຄືໜ່ອຍເບົ້າ

ສັງບໍ່ຊ່າງປັ້ນແຄນ
ສັງບໍ່ຊ່າງປັ້ນເບົ້າ
ພັກໃສ່ຂຽງດຽວລຽງລົງໃນເບົ້າ
ເຕົາຮາງແລ້ວຫລໍ່
ລຽງເຜີ້ງໃສ່ໂຮງ.

549-592 ອັດສະຈັນຕັ້ງແຕ່
ບາດວ່າແກ້ງຂະໜາດແທ້

ວັງເອີນກ້ອາງສ້ຽງມາກາຍເປັນຫາດ
ສ້ຽງມາຢັ້ນຕ່າວເອີນ.

550-593(ຊາຍ) ຄັນອ້າຍມີປີກຄືນົກຍາງ

ອ້າຍຢາກບິນໄປເບິ່ງ
ໄກນ້ອງຄ່ຳແຂນແທ້ບໍ
ກົກແນນຕໍ່ກົກແນນ
ພົມມະຊາດອ້າຍ

ມີຫາງຄືນົກຕາລະກາມ້ຳຊິ
ບິນນຳໄປເບິ່ງ
ກົກມີ່ງຕໍ່ກົກມີ່ງຊິ

ຊິໄກນ້ອງຄ່ຳສອກແທ້ບໍ
ຊິໄກນ້ອງຄ່ຳວາ ແທ້ບໍ ?

551-594 ຄິດເຫັນບໍ່ນ້ອງເອີຍ ຄາວເຮົາຢູ່ເມືອງບົນພຸ້ນ
ເຮົາຍັງເປັນຄູ່ຫລັກກ້າ ຄາວເຮົາຢູ່ເມືອງຟ້າ
ຕ່າແລ່ງໂລກອຍເອິນ ຍັງເປັນຄູ່ລໍ້ຮວງລົວ
ແຖນຈຶ່ງປັນລົວໃຫ້ ສອງຄົນເຮົາ ຂີ່ລົງເກີດ
ລົງມາຮອດ ພັກສອງ ພານາງຄ້ຽວທມາກ
ນອກຈາກນັ້ນ ພານ້ອງລ່ອງລົງ
ຄັນຊິພັກຮິ່ມບົກ ພັດຢ້ານຕໍ່ຕາຍແຂວນ
ຄັນຊິພັກຮິ່ມແຫນ ພັດຢ້ານແຕນຕາຍຫ້ອຍ
ຄັນຊິພັກຮິ່ມນ້ອຍ ບໍ່ຫມົດຫມູ່ໄທເຮົາ
ຈຶ່ງໄດ້ພານາງຍ້າຍ ກາຍລົງມາເມືອງລຸ່ມ
ມາຮອດລົມມິດຕັດ ພັດໄປຄົນລະແຈ
ມາຮອດ ລົມມີແຖ ພັດໄປຄົນລະຫ້ອງ
ອ້າຍໄດ້ຈັບຈອງນ້ອງ ເຊືອງຜ້າຂາດກາງ
ຈຶ່ງໄດ້ອາງນາງໄວ້ ຫນີໄປຄົນລະບ່ອນ
ອ້າຍໄດ້ພັດພາກນ້ອງ ປາງນັ້ນຈື່ບໍ່ລືມ.

552- 595 ນ້ອງທາກປູກດອກຊ້ອນ ຊອນດອກບົວບົກ
ກົກບໍ່ທັນຝັງຫມັ້ນ ພັດມີໃບຊອນຈ່າ
ນ້ອງບໍ່ຈຽມບາບໃບ້ ນຳໃຊ້ຊາດຊີນາ ບໍນໍ ?

553-597(ຍິງ) ນ້ອງຢາກມຸດລົງພື້ນ ງົມເບິ່ງຕຳ ທາງລຸ່ມ
ຄັນບໍ່ມີບ່ອນເກາະ ຄັນບໍ່ມີບ່ອນຂ້ອງ
ແຫຈອມທອງນ້ອງ ຊິຫວ່ານ
ແຫຈອມທອງຫວ່ານແລ້ວ ແຫຈອມແກ້ວອ້າຍຫວ່ານນຳ.

554-598 ນ້ອງນີ້ ເຫມືອນດັ່ງຈອກຢູ່ນ້ຳ ຮາກຢັ່ງບໍ່ເຖິງດິນ
ໄຫລເອີນໄປເອີນມາ ຮອດບໍ່ມີເຝືອຍຄ້າງ
ຄັນຊິໄຫລໄປຄ້າງ ເຝືອຍແກ ເພິ່ນບໍ່ຍອມ
ຄັນຊິໄຫລໄປຄ້າງ ເຝືອຍໄຄ້ບໍ່ຍອມລົງ.

555-599 ແມວວ່າ ຄວາຍບໍ່ຢາກກິນຫຍ້າ ແສນຊິຂົ່ມ ກໍ່ເຂົ້າທັກ
ຫມູບໍ່ກິນຮຳ ແສນຊິຕີກໍ່ດັງເອ້.

556-600 ຄັນອ້າຍໄດ້ຊີ່ຊ້າງ ກັ້ງຮົ່ມເປັນພະຍາ
ນ້ອງຊິເບັດໃສ່ເຜືອນ ນ້ອງຊິເບືອນໃສ່ກ້ອນ
ນ້ອງຊິຢ້ອນໃສ່ແກ້ວ ຕຳແລ້ວຈິ່ງຄ່ອຍທືນ

557-601 ນ້ອງນີ້ແນວນາມຮຸ້ງ ເມືອງຈັກຂິນ ກໍ່ບິນຮອດ
ອ້າຍນັ້ນ ແນວນາມທົ່ງຄໍາ ຜັດເຮີ່ນໄກກິນໃກ້

558-602 ຄັນແມ່ນແນວປາປຶກ ອ້າຍຊິກິນຫົວຄາວ
ຄັນແມ່ນແນວປາຂາວ ອ້າຍຊິກິນຫົວກ້າງ
ຄັນແມ່ນແນວຊ້າງນ້ອຍ ອ້າຍຊິກິນຫົວງວງ.

559-603 ຫລືວ່າເຊື້ອ ເຂົ້າໄຮ່ ບໍ່ໃຫ້ປົນເຂົ້ານາ
ແນວປາຝາ ບໍ່ໃຫ້ປົນປາຫ້ວຍ
ເຊື້ອກ້ວຍງ້າວ ບໍ່ໃຫ້ຮ່ວມປີຕອງ.

560-604 ຫລືວ່າເຊື້ອເຂົ້າກ່ຳ ບໍ່ໃຫ້ປົນເຂົ້າຂາວ
ເຊື້ອໝາກນາວ ບໍ່ໃຫ້ປົນໝາກກ້ຽງ
ເຊື້ອມົກອ້ຽງ ບໍ່ໃຫ້ຮ່ວມຫົວຄຳ.

561-605 ຫລືວ່າເຊື້ອຊາດປ່ານ ບໍ່ໃຫ້ເອົາສານແຫ
ຫວາຍພູແຊ ບໍ່ໃຫ້ເອົາເຮັດແສ້
ເຊື້ອຫວາຍແຍ້ ບໍ່ໃຫ້ເໝືອດແກງຂົມ.

562-606 ອ້າຍນີ້ປຽບດັ່ງຄວາຍກິນຫຍ້າ ຫລາຍໂຄກລືມຫລັງ
ເໝືອນດັ່ງຄວາຍກິນຫຍ້າ ຫລາຍຄັງລືມແຫລ່ງ
ບາດມາຕົກແທ່ງນີ້ ຕົວອ້າຍບໍ່ຢາກເມືອ.

563-60 ຄັນນ້ອງໄດ້ກິນຊີ້ນ ໃຫ້ນ້ອງຝາກດອມກາ
ຄັນນ້ອງໄດ້ກິນປາ ໃຫ້ນ້ອງຝາກດອມແຮ້ງ
ໄດ້ກິນຊີ້ນກະແດ້ງ ໃຫ້ນ້ອງແກ່ວງຕາມລົມ
ຄັນວ່າແລງງາຍເຊົ້າ ສາວນາງສະເທວີຍພານັ້ນ
ເຮີນເອົາຂ້ອນຜີເຂົ້າ ນຳນ້ອງຮ່ວມພາແດ່ເດີ !

564-608 ອັນວ່າຊາຕາອ້າຍ ໝາຍຊົມເນື້ອລະໃໝ່
ພົມມະຊາດຈອງໃຫ້ ຍິງຮ້າງຄູ່ສະເໜ

ຜູ້ສາວມາແຂວນຂ້າງ ແຂວນແອວຕີງຈ່ອງ
ຄາດໄດ້ສາວແມ່ຮ້າງ ບຸນສ້າງຕັ້ງແຕ່ຫລັງ !

565-609 ຄັກກະເຫີນໄດ້ລົງລາຍປ້ຳ ຊິນຳຮອນຫມົດທຸກວ່າ
ຕາບໃດຜ້າບໍ່ບ້ານ ຕາບໃດຂວານບໍ່ເຂົ້າ
ຈົນຈຳບ້ອງແມ່ນບໍ່ຍອມ.

566-610 ອ້າຍນີ້ເຫມືອນດັ່ງ ເຮືອຂະເຫມນເຫລືອງ
ບໍ່ກົວຟອງແກ້ງໃຫຍ່
ພີ່ຊິເບັດໃສ່ເຜືອນ ພີ່ຊິເບືອນໃສ່ກ້ອນ
ຍ້ອນໃສ່ແກ້ງ ໄປບໍ່ໄດ້ຈຶ່ງຊິຖອຍ.

567-611 ເອົາຜົວໄທໄຮ່ ບໍ່ຢ້ານເຫມັນສາບຄ້ອນຢາບໍ
ເອົາຜົວໄທນາ ບໍ່ຢ້ານເຫມັນຄາວຮາກກ້າ
ເອົາຜົວພໍ່ຄ້າ ບໍ່ຢ້ານເຫມັນສາບຕອງເກືອ
ເອົາຜົວໄທເຮືອ ບໍ່ຢ້ານເຫມັນຄາວ
ໄມ້ທີ່ບໍ່ນຳນາງເອີຍ
ໃຫ້ນ້ອງອົດເອົາອ້າຍ ຜູ້ສາຍຄາຕິດຮອງຫລໍ່
ສາຍຄາຕໍ່ຮ່ອນເຮືອນນີ້ແລ້ວ.

568-617 ທຸກຊາດນີ້ ກ້ອນດິນຈີ່ ອ້າຍກໍ່ຢີ
ທຸກຊາດນີ້ ດິນຂໍ ອ້າຍກໍ່ປັ້ນ
ເສົາອາລາມ ອ້າຍກໍ່ຍັງໄດ້ແກ່
ບຸນຫມູ່ນັ້ນ ຊິໄປໄດ້ແກ່ໃຜນ້ອງເອີຍ.

568-618 ເປັນແຕ່ບຸນຊຮງຫມ້ຮງ ແສນຊິໄອທາງແລ່ນ
ບາດສຸດທ້າຍ ຕາຍຍ້ອນຫມາກຂີ້ຫອຍ.

569-619 ອົດສາລ້ຮງ ບັກຊຮງເສືອໄວ້ແດ່
ບາດວ່າໄປທາງບົກ ຍັງຊິໄດ້ກິນຊາກ
ອົດສາລ້ຮງ ບັກຊຮງນາກໄວ້
ບາດວ່າໄປທາງນ້ຳ ຍັງຊິໄດ້ກິນປາ
ອົດສາລ້ຮງ ຫມາໄວ້ ກະໄດເຮືອນເພື່ອຫອນເຫົ້າ
ຄັນເຫົ້າເຖົ້າ
ເຫົ້າແລນບໍ່ໄດ້ຕາງໃຫ້ເຫົ້າຂະໂມຍ.

540-620 ອ້າຍນີ້ ເຫມືອນດັ່ງຊ້ອນຫລັງໄຫລ   ເຫມືອນດັ່ງໄຊຫລັງຫລ້າ
ບໍ່ຫມານປານ້ຳເຜີ່ນ
ຖືກກໍ່ໃສ່ໄວ້ບໍ່ຖືກກໍ່ໃສ່ໄວ້   ຕາມຂະເຍີນປາຊິລ່ອງ
ເອົາແຕ່ຕົວຊິຄ້າງ   ໄຊອ້າຍຈຶ່ງຊິກິນ
ອ້າຍນີ້ ມີແຕ່ແວ່ຕາມທ້າງ   ປາເຂົ້າຄຳນ້ຳຂຸ່ນ
ລາງເທື່ອໄປຖືກຊ້ອນ   ລອງໃຕ້ເຜີ່ນບໍ່ຢາມ.

571-621 ອ້າຍທຽວໄປຫານ້ອງ   ຫລາຍທີຫລາຍເຫລົ່າ
ມີແຕ່ພໍ່ແມ່ເຈົ້າ   ມາຮ້າຍໃຫ້ພີ່ຊາຍ
ໄປເທື່ອຫນຶ່ງ   ປ້າເຮືອນໃຕ້ເຜີ່ນກໍ່ເຍັ້ນມາຫາ
ໄປເທື່ອສອງ   ປ້າເຮືອນເທິງເຜີ່ນກໍ່ເຍັ້ນມາຂູ່
ເປັນຈັ່ງຊີ້   ຢ້ານແຕ່ນ້ອງນາດຫລ້າ
ຟັງຄວາມປ້າບໍ່ເອົາອ້າຍ   ບ່າວພີ່ຊາຍ ນ້ອງເຍີຍ !

572-622 ອ້າຍທ່ຽວໄປຫານ້ອງ   ຫລາຍທີຫລາຍເຫລົ່າ
ໄປເທື່ອຫນຶ່ງ   ວ່າບໍ່ມີກະບອງ
ໄປເທື່ອສອງ   ວ່າບໍ່ມີລໍ້ຝ້າຍ
ນ້ອງຫາກມືອບາຍຊ້ອນ   ຜັນປະການຮ້ອຍຫລ່ຽມ
ນ້ອງຫາກເວົ້າຈັ່ງຊັ້ນ   ນ້ອງຫາກເວົ້າຈັ່ງຊີ້
ນ້ອງຫາກຕີແນວນັ້ນ   ຜັນນີ້ແລ່ນບໍ່ທັນ.

573-623 ຄັນແມ່ນນ້ອງຕົວະອ້າຍ   ໃຫ້ນ້ອງແປດລວງແປ
ໃຫ້ນ້ອງແປລວງຂ້າວ
ໃຫ້ນ້ອງຢຽດຄ້າວນ້າວ   ຢູ່ໃນທີບແອວຂັນ
ສັນເພນແລ້ວ   ຫາມໄປປີງປ່າ
ເຈົ້າທົວແຫ່ຫນ້າ   ຊາວບ້ານແຫ່ຫລັງ.

574-624 ຄັນແມ່ນ້ອງຕົວະອ້າຍ   ໃຫ້ນ້ອງໄຂ້ອອກຫມາກ
ລາດຊີ້ກົ່ວເຕັມຕົວ
ໃຫ້ນ້ອງໄຂ້ອອກຫມາກໂພລາມໄສ້
ໃຫ້ເປັນໄອຂະຢີແທ້ງ   ນອນສະແດງເອົາທົວຢ່ອນ
ທໍລະມານກາຍທ້ອຍ   ຜອມລົງປານລີງຈີ່
ຄຳປ້ອຍແຊ່ງອັນນີ້   ຕົວນ້ອງໃຫ້ຮັບເອົາ.

575-625 ຄັນແມ່ນອ້າຍຕົວະນ້ອງ   ໃຫ້ 30 ຫນາມໄປປັກທົວເລັບ
ໃຫ້ສາມສິບເຫັບ   ໄປເຂົ້າກອນຫູ

24/VII ห้ามจำหน่าย

ໃຫ້ 3 ພັນໜູ ໄປເລາະເລົ້າເຂົ້າ
ໃຫ້ 30 ຜູ້ເຖົ້າ ມານັ່ງກິນແຮງ ນ້ອງເດີ.

576-626 ແຂ້ວຂາວກົກ ຊູ້ນ້ອງຄືຊິຫລາຍ
ແຂ້ວຂາວປາຍ ຊູ້ນ້ອງຄືຊິຖີ່.

577-627 ຢາກໄດ້ຄຳປາກນ້ອງ ໄປໄວ້ເຮັດຮາກຢາ
ຢາກໄດ້ວາຈານາງ ຝົນທາຄືຊິສ່ວາງ.

578-628 ອ້າຍນີ້ ຄິດຕໍ່ຕົ້ວ ຕັ້ງຕໍ່ຄວາມຝັນ
ຄັນແມ່ນບັນທົມຍັງ ເປົ່າແປນຮາມຊ້ອນ
ຜີນີ້ນອນດຣວແລ້ງ ກິນແລງບໍ່ມີຄູ່
ຫາຜູ້ມານັ່ງລ້ອມ ພາເຂົ້າກໍ່ບໍ່ມີ.

579-629 ແນວທີກາດຳປີ້ ຊິທຣມທົ່ງກໍ່ຍືນຍາກ
ແນວທີ່ແສງທົ່ງທ້ອຍ ຊິທຣມແຈງແຂ່ງພະຈັນ ໄດ້ບໍ.

580-630 ຄັນເອົາອ້າຍເປັນຊູ້ ຢ້ານບໍ່ແພ້ຕົວງົວ
ຄັນເອົາອ້າຍເປັນຜົວ ຢ້ານບໍ່ແພ້ຕົວຊ້າງ
ຄັນເອົາອ້າຍເມືອສາວ ຢ້ານບໍ່ຮຸ່ງເຮືອນນາງ ຊັ້ນບໍ.

581-631 ໃຫ້ອ້າຍຄືນຄຳໃຫ້ ດອມພໍ່ປົດຕາ
ເຕືອນພົງສາ ແອ່ວອິນເອົານ້ອງ
ຄັນແມ່ນເຜີນທາກພ້ອມ ຕົນນ້ອງບໍ່ຂືນ ດອກນາ !

582-632 ເມືອງຫລັງອ້າຍ ທາງບໍ່ດີເດີນຍາກ ອວນເອີຍ
ໃຫ້ອ້າຍແຕ່ງເຄື່ອງຮ້ອຍ ມາອົມໄດ້ດັ່ງຫລີ
ເມືອງຊາຍພຸ້ນ ທາງໄກແສນໂຍດນ້ອງໃດ ?
ມີທັງແສນໂກດໄມ້ ເຫວຫ້ວຍຮ່ອມຜາ
ຊິໂຮມເຄືອຜີນ້ອງ ມາຜີແມ່ນບໍ່ຄວນ.

583-633 ເດິກກໍ່ເດິກມາແລ້ວ ໜອກກົ້ວທົ່ງເປັນຮູບຕົວໜູ
ນ້ຳໜອກຕົກທົ່ວພູ ເປັນຮູບຕົວມ້າ
ໜອກກົ້ວຟ້າ ເປັນຮູບຂິນແປງ.

584-634 ເດິກມາແລ້ວ ໄກ່ຜູ້ລຶກຂັນລອດກ້ອງເຊຍ
ໄກ່ຜູ້ເມຍຂັນລອດກ້ອງເລົ້າ ໄກ່ຜູ້ເຖົ້າຂັນຈົ້ນສົ້ງມາ

	ອ້າຍຊິໄລລານ້ອງ	ອ້າຍຊິໜີຈາກນ້ອງເມືອບ້ານ
		ຊົ່ວຄາວກ່ອນເນີ.
585-635	ລາກ່ອນແລ້ວ	ຊິລາເມືອກ່ອນແລ້ວ
	ມ້າມະນີກາບແກ້ວ	ຊິລາຈາກໂຮງທອງ
	ບົວບານບ້າງ	ຊິລາໜອງຂຳເຂືອກ
	ເງືອກຢູ່ນ້ຳ	ຊິລາຈາກວັງເວີນ
	ເຊີນເຊີນຍ້າຍ	ເຮືອຄຳຊິລາຝັ່ງ
	ອ້າຍສັ່ງນ້ອງ	ຄຳລະຫ້ອຍຢູ່ດີ.
586-636	ນົກກິນແລ້ວ	ນົກຊິໄດ້ລາພາກ
	ນາກກິນແລ້ວ	ນາກຊິໄດ້ລາໜີ
	ລາຊະສີ ຊິໄດ້ລາເມືອຖ້ຳ	ແມ່ຊ້າງນ້ຳຊິລາຈາກວັງເວີນ
	ເດືອນຊິລາຟ້າ	ດວງດາວລານ້ຳໝອກ
	ນົກຈອກລາພຸ່ມໄມ້	ຊິໄລຮ້າງຫ່າງໜີ.
587-637	ພັດແຕ່ຂອດເປັນຮັກ	ອ້າຍບໍ່ໄດ້ປາກສຽງແຂງ
	ພັດແຕ່ຂອດເປັນແພງ	ອ້າຍບໍ່ໄດ້ຈາສຽງຮ້າຍ
	ສັງມາບິດເບືອນລ້າວ	ຜະນຽວໄຖໄມ້ເໝືອດແອ່
	ພໍ່ແມ່ເຜີ້ນບໍ່ທັນໄດ້ຮູ້	ການຟ້າວແຕ່ຢາກໜີ.
588-638	ອ້າຍນີ້ ເໝືອນດັ່ງທົ່ງຮາມຮ້າງ	ວັງເວີນແປນເປົ່າ
	ນົກເຈົ້າລ່າພຸ່ມໄມ້	ຊິລົງນ້ຳລ່ອງລອຍ
	ກອຍມັນຮ້າງ	ຊິລາມດິນພັດພາກ
	ເຂົ້າກາກລາຈາກເລົ້າ	ຄວາຍເຖົ້າຊິຫງ່ອມເຫງົາ
	ກາເວົ້າຮ້ອງເທິງໂພນຍີນໂສກ	ຂ້ອນໂດກຮ້ອງ
	ລາຊູ້ຫ່າງຮຣມ	
	ຈອມທົ່ວໜີໄກຂ້ອຍ	ສະເໜີນຳຮອຍໄກ່
	ອ້າຍໄດ້ໄປໄລ່ປ້ອງ	ເອົານ້ອງກໍ່ບໍ່ຄືນ
	ຫລົວຜືນໜີໄກໝັ້ນ	ກອຍກະທໍລາເຂົ້າປູກ
	ກິກຫູກລາຈາກໄມ້ກ່ຳຝັ້ນ	ພັນມີ້ບໍ່ຈອບກັນ.
589-639	ອ້າຍນີ້ ເໝືອນດັ່ງນົກເຈົ້າຫລັ້ງ	ລຽບລ່ຳແຄມສະ
	ຫາກິນປາ	ລຽບນຳແຄມນ້ຳ
	ເຕັ້ນຕໍ່ເຕັ້ນ	ໜອງນາແຄມປ່າ
	ຈັບປ່າຄ້ອມ	ແຄມຫ້ວຍງາຄອມ

	ເຂົ້າຂັນຄູ່	ວອຍຄອນອ້ອຍອິ່ນ
	ພີ່ຊິໄປອອຍນ້ອງ	ເທິງທີ່ອນອນຈົກປ່ອງ
	ເຢາະຢ່ອງຂື້ນ	ຫານ້ອງຢູ່ບ່ອນນອນ.
590-640	ອ້າຍຊິລາຈາກນ້ອງ	ທ້ອງຖິ່ນດິນດອນ
	ໄກສອນຊິລາກ້ານ	ສາວຄຳນາງໄກຊູ້ເກົ່າ
	ປັກປິ່ນເກົ້າ	ຊິໄດ້ລາຈາກຊ້ອງ
		ຊອງພູລາສີສຣດ
	ກົບຂຣຸດລາຈາກນ້ຳ	ຣາມຣອງຊົວແຊວ
	ແມວໂພງລາປາຢ້າງ*	ສາວນາງແພງລາອີ່ພີ່
	ເຂົ້າຈີ່ ລານ້ຳອ້ອຍ	ຢ່າຄອງທ້ອນວ່າຊິຫວານ
	ລາທັງຜົມດຳກັຣງ	ສີມງາມຢູ່ອ່ອງຕ່ອງ
	ລາທັງສອງຝ່າຍແກ້ມ	ຄິ້ວກິ່ງກອມຕາ
	ລາທັງຕີນມືສິບ	ປາກດັ່ງໜັງລື້ນ
	ກະດູກມັນໄຂຊື້ນ	ຊິລາໄປກັຣງອ່ອຍທ້ອຍ
	ມໍລະດົກເຄື່ອງກໍ່ສ້າງ	ພະນາງນ້ອງແມ່ນບໍ່ລາ.
599-641	ລາຈາກນ້ອງ	ນາງງາມບໍ່ໄດ້ຢູ່
	ເໝືອນດັ່ງມັນເຜືອກອ້ອຍ	ຊິລາຫຍ້າຍອນດິນ
	ຄັນແມ່ນພ້າບໍ່ທັນປື້ນ	ດິນບໍ່ໄວ່ຄ້ອນຖີມ
	ອ້າຍຊິຄືນມາຫາ	ແອ່ວອີມຈີນໄດ້.
592-642	ເວນສັງນ້ອງຈິ່ງມາຈອນຈຳຈາກ	ເຮັດໃຫ້ອ້າຍພາກນ້ອງ
	ຄາວປີ້ຍ້ອນອີສັງ	
	ຫລືວ່າຊາດກ່ອນກີ້	ອ້າຍໄດ້ໄປເຫນ້າງ
	ຮັງນົກຮັງກາ	
	ເພຮັງນົກໂກນາຕົວນ້ອຍ	ແມ່ມັນໄດ້ດ່າປ້ອຍ
	ເວນອັນນັ້ນແລ່ນທ້ອຍ	ໃຫ້ໄກຂ້າງຕ່າງນາງ.
593-643	ຊູ້ນ້ອງບໍ່ຢູ່	ນ້ອງຢ່ານອນມໍ່ຝາໃດເນີ
	ຊູ້ນ້ອງບໍ່ມາ	ນ້ອງຢ່ານອນໃກ້ປ່ອງ
	ເຂົາຊິເຢາະຢ່ອງຂື້ນ	ເທິງທີ່ອນອນເອົາໄມ້ແຢ່
	ໃຫ້ນ້ອງເວົ້າລັບລ້າງ	ໃຫ້ນ້ອງຈີບຫມາກຈ້າງ
	ໃຫ້ນ້ອງອ້າງເທດໃຫ້	ວ່າເມືອທ້ອນ ນ້ອງຢາກນອນ !

544-644 ຄັນວ່າອ້າຍເມືອແລ້ວ
ໄປລັບໃສ່ຫີນສໍ
ຢ່າເອົາຂວັນຫົວນ້ອງ
ຄັນຕາເວັນຕົກຕ່ຳ
ຄັນຕາເວັນລັບແລ
ອ້າຍຢ່າເວົ້າຝັ້ນຊູ້

ອ້າຍຢ່າເອົາຂ້ອນຫົວນ້ອງ
ໄປຮໍໃສ່ຫີນແກ່ນ
ໄປແອບນ້ຳຫົວນາຊາຍໃຫ້ເຂົາຊ່າ
ໃຫ້ອ້າຍຊຸ້ນປ່າແກ
ໃຫ້ອ້າຍຊຸ້ນປ່າເປົ້າ
ຊິເຊລົ້ມໃສ່ໜາມ ອ້າຍໃດ໋ !

546-646 ໃຫ້ອ້າຍເມືອດີທ້ອນ
ເມືອທັງຫີນຫວານປ້ອງ
ໃຫ້ຊາຍລາເມືອກ່ອນ
ໄດ້ຍິນໄມ້ຕົກກາງຖອກ
ໄດ້ຍິນໄມ້ຕົກກາງທາງ
ຊົງເຂດນັ້ນ

ເມືອທັງເຄືອຫວານລືມ
ໜາມຫວາຍຈ່ອງທ່າງຟ້າ
ເມືອນຳທາງ
ອ້າຍຢ່າຟ້າວວ່າລາງ
ອ້າຍຢ່າຟ້າວວ່າເຫດ
ຂ້ອນນ້ອງໝັ້ນໄປ.

547-647 ຍາມເມື່ອຊື້ນໂຄກສູງ
ຍາມເມື່ອຊື້ນໂຄກກວ້າງ
ຍາມເມື່ອຊື້ນໂຄກສູງ
ເຫັນຮອຍໝູຮອຍກວາງ
ໃຫ້ຄິດຮອດບ້ານເກົ່າຮ້າງ

ອ້າຍຢ່າຫລິ່ມຮອຍຊ້າງ
ອ້າຍຢ່າຫລິ່ມຮອຍຄວາຍ
ລົງໂຄກຄ້ອຍ
ຄິດຮອດນາງ...
ທາງຜີຢູ່ບໍ່ລືມ...

548-648 ຊື້ນໂຄກຈິກ
ຊື້ນໂຄກຮັງ
ໃຫ້ອ້າຍເບິ່ງຝຸ່ມໄມ້

ໃຫ້ອ້າຍໝັ່ນຫລຽວຫລັງ
ໃຫ້ອ້າຍໝັ່ນຫລຽວເຫລືອງ
ຫລຽວລ່ຳເບິ່ງນາງແດ່ເນີ.

549-649 ໃຫ້ອ້າຍເມືອດີເດີ
ຕີນຊ້າຍອ້າຍຢ່າຕ້ອງ
ຕີນຂວາຊາຍຢ່າຕ້ອງ
ອ້າຍຢ່າໄປທ່ຽວເວົ້າ

ບາດຮ່າອ້າຍຍ່າງເມືອ
ຊ້ຳຫລອດໄຫມເຫລືອງນ້ອງເດີ
ຕຳເຝືອງເຂົ້າກ່ຽວ ອ້າຍເດີ
ນຳຊູ້ເພິ່ນທັງຫລາຍ.

550-650 ຄວາມທີ່ອ້າຍໄດ້ເວົ້າ
ຜີປາກເອົາອິນຊີ
ຄວາມປາກອ້າຍໄດ້ເວົ້າ

ຢາກໝາຍຝາກຊີວິດ
ມອບຄອມນຳນ້ອງ
ມາຍມ້າງແມ່ນບໍ່ເປັນ.

551-651 ໃຫ້ອ້າຍໄລເສຍນ້ອງ
ກະຕ່າຍບໍ່ອອກເຂົາ

ບໍ່ຄອງໄລເສຍວາຍ
ຫົວສີໂຄບໍ່ອອກດອກ.

552-652 ... (ອ່ານບໍ່ອອກ)

553-653 ແຮ່ງຄິດຊ້ຳແຮ່ງຄືນ — ແດດັ່ນໃຈກະສັນ
ວັນຄືນຄິດ — ປວດກະສັນແສນຊັ້ນ
ພີ່ກໍ່ບາຍ ເອົາເຂົ້າ — ມາກິນປັ້ນຫນຶ່ງ
ກິນກໍ່ກິນບໍ່ໄດ້ — ຄາແຄ້ນຄັ່ງທອງ
ພີ່ກໍ່ບາຍເອົານ້ຳ — ທັນທີ ມາລ່ອງ
ລຶງກໍ່ລຶງແຕ່ນ້ຳ — ຄຳເຂົ້າພັດບໍ່ລຶງ.

554-654 ອ້າຍຢາກຕາຍເປັນເສື້ອ — ດຳຫມາກເກືອໃຫ້ນ້ອງນຸ່ງ
ເກີດເປັນຄົນມາບໍ່ໄດ້ກ່ອມເບື້ອ — ອ້າຍຂັນຕາຍເປັນເສື້ອ
ພໍໃຫ້ນ້ອງໄດ້ກ່ອມຄີງ.

555-655 ທຸກບໍ່ມີກ້ອນເສົ້າ — ຈື່ງມາຫນ່ຮອ ຫມີແລງ
ທຸກບໍ່ມີເມຍແພງ — ຈື່ງດວງມາຫານ້ອງ
ເປັນຄົນທຸກອ້າຍຈື່ງມາ — ຂໍຫມົ້ນ
ເປັນຄົນຈົນອ້າຍຈື່ງມາ — ຂໍເພິ່ງ
ນ້ອງບໍ່ເບິ່ງຮູດນີ້ — ຊິຕາຍຖີ້ມບໍ່ສິງ ອ້າຍແລ້ວ.

556-656 ປັກຄືນເອົານົກຂຸ້ມ — ແຫລວມຸມພັດມາຜ່າ
ປັກຄືນເອົານົກນ້ອຍ — ແຫລວເຖົ້າພັດເຮີ່ນມາ
ສັດຈະຜູ້ຍິງນີ້ — ວໍແວເອົ້າບໍ່ແນ່
ຍິງຫນຶ່ງຍິງບໍ່ແທ້ — ແນແລ້ວກໍ່ບໍ່ຍິງ !
ຄັນແມ່ນຈິງຈັ່ງແທ້ — ສິມນາມແນວແມ່
ບໍ່ລະຮີດໃຫ້ຫມອງ — ບໍ່ລະຄອງໃຫ້ເສົ້າ
ຄຳນັກປາດຍົກຍ້ອງເຈົ້າ — ວ່າເປັນແກ້ວຍອດຍິງ ລະເບີ !

ຂໍ້ມູນອ້າງອີງ
ໃນການຄົ້ນຄ້ວາ ຮຽບຮຽງ
ແລະຈັດພິມປຶ້ມເຫລັ້ມນີ້

I. ເອກະສານ:

1. ອ້ອຍຕ້ອຍຕ່ອນຜະຫຍາສະບັບໂລນຮຽວ 656 ຂໍ້ ຮີບໂຮມໂດຍ ອາຈານຄຳມ່ອນ ພົງພິຈິດ ພະນັກງານວິຊາການ ຢູ່ ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງຄຳມ່ວນ.
2. ຄຳຜະຫຍາ ພາສິດ ແລະ ໂຕງໂຕຍ ພິມປີ 1991 ຮີບໂຮມໂດຍ ດວງຈັນ ວັນນະບຸບຜາ.
3. ວັນນະກຳທ້ອງຖິ່ນສະບັບໃບລານ ຕາມວັດ ທີ່ເກົ່າແກ່ ໃນແຂວງຄຳມ່ວນ.
4. ນິລະດົກອີສານ ສະບັບຄຳກອນ (ພາສາໄທ).
5. ຕຳນານ ອຸລັງຄະທາດ ແລະ ສີໂຄດຕະບອງ.
6. ແຂວງຄຳມ່ວນ ສີໂຄດຕະບອງ ໂດຍ ດວງໄຊ ຫລວງພະສີ.

II. ບັນດາບຸກຄົນເລົ່າປະຫວັດຄວາມເປັນມາ ແລະ ຄະນະຫມໍລຳຜະຫຍາມະຫາໄຊ ທີ່ເຂົ້າຮ່ວມ :

1. ທ່ານ ສຸຂັນ ຂຸນວົງສາ ອະດີດປະທານແນວລາວສ້າງຊາດ ແຂວງຄຳມ່ວນ.
2. ທ່ານ ຈັນທອນ ນິນທະສອນ ປະທານແນວລາວສ້າງຊາດ ແຂວງ ຄຳມ່ວນ(ໃນປັດຈຸບັນ).
3. ທ່ານ ທຳມະສິນ ໄຊຄຳຝັ້ນ (ເຊື້ອສາຍ ຈຸລະມະນີ).
4. ທ່ານ ຄຳກອງ ແກ້ວວົງສິດ ອະດີດເຈົ້າເມືອງ ເມືອງມະຫາໄຊ.
5. ພໍ່ເຖົ້າຄຳບາງ ຜູ້ຊົງຄຸນວຸດທິ ບ້ານໂພວາ ເມືອງມະຫາໄຊ.
6. ພໍ່ເຖົ້າ ຮຸ່ງ ໄຊໂກສີ ຜູ້ຊົງຄຸນວຸດທິ ບ້ານມະຫາໄຊໃຕ້ ເມືອງມະຫາໄຊ.
7. ພໍ່ເຖົ້າ ທອກ ເມືອງມະຫາໄຊ.
8. ແມ່ປ້າກັດ ຊໍຊະນະວົງສາ ເມືອງມະຫາໄຊ.
9. ພໍ່ເຖົ້າ ຈານປານ ບ້ານຍົມມະລາດເກົ່າ ເມືອງຍົມມະລາດ.
10. ພໍ່ຈານວັງ, ຈານແວງ, ຈານອົດສາ ຕົ້ນສະບັບຫມໍລຳ ເມືອງຫນອງບົກ.
11. ຄະນະຫມໍລຳຕອບຜະຫຍາ ມະຫາໄຊ ບ້ານຕາດ, ສັງທອຍ, ບ້ານຝົດ, ກອນພັນ ເມືອງ ຍົມມະລາດ.
12. ແມ່ເຖົ້າ ພັງ ຫມໍລຳອາວຸໂສ ຕົ້ນສະບັບ ມະຫາໄຊ ໂພວາ ພ້ອມຄະນະເມືອງ ມະຫາໄຊ.
13. ນັກຈ່າຍຜະຫຍາ ຫມໍລຳມະຫາໄຊ ບ້ານ ຫນອງປິງ ເມືອງ ຍົມມະລາດ.
14. ຫມໍລຳຈານ ກາ ຕົ້ນສະບັບມະຫາໄຊ ໂພນຫມີ ເມືອງຫີນບູນ ພ້ອມຄະນະ .
15. ທ່ານ ສອນສັກ ສີລິມະໂນໄທ ຫົວຫນ້າສູນລວມເພງລາວສະຫນັບສະຫນູນທຶນ ແລະ ອຸປະກອນ ລົງເກັບກຳຂໍ້ມູນໃນເບື້ອງຕົ້ນ.

❀ **ເຂັມພອນ ແສງປະທຸມ** (ສາຍອູ່ເກີດ)

❀ ກຶ່ນກຳເນີດ : ບ້ານຊາຍຟອງ ເມືອງຫນອງບົກ ແຂວງຄຳມ່ວນ.

ທັດສະນະຄະຕິ

❀ ຫົວນ້ຳເຜີ້ງ ທີ່ເຕັມໄປດ້ວຍຄວາມຫວານ
ແຕ່ກໍ່ມີສ່ວນເຈືອຈານ ຢູ່ກັບຂີ້ງວນຂອງມັນ
ຄວນເລືອກເຟັ້ນ ໃຫ້ລະອຽດກ່ອນຈະຊີມລົດຊາດ
ແຫ່ງຄວາມຫວານ ອັນເຂັ້ມຂຸ້ນ ແລະ ບໍລິສຸດ
ຂອງຫົວນ້ຳເຜີ້ງນັ້ນ !

❀ ❀

❀

ພິມທີ່ ໂຮງພິມແຫ່ງລັດ